رئاسة الشؤون الدينية
بالمسجد الحرام والمسجد النبوي

التَّحْقِيقُ وَالإِيضَاحُ لِكَثِيرٍ مِنْ مَسَائِلِ الحَجِّ وَالعُمْرَةِ وَالزِّيَارَةِ عَلَى ضَوءِ الكِتَابِ وَالسُّنَّة

ລາວ | لاو

# ການກວດສອບ ແລະ ການຊີ້ແຈງ ປະເດັນບັນຫາຕ່າງ ໆ ຂອງຫັຈຍ໌, ອຸມເຣາະຫ໌ ແລະ ການຢ້ຽມຢາມ ໂດຍຍຶດຕາມຄຳພີອັລກຸຣອານ ແລະ ສຸນນະຫ໌

ທ່ານອາຈານຜູ້ຊົງຄຸນນະວຸດ ທ່ານເຊັກອຸລະມາ
ເຊັຄອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

# التَّحْقِيقُ وَالإِيضَاحُ لِكَثِيرٍ مِنْ مَسَائِلِ الحَجِّ وَالعُمْرَةِ وَالزِّيَارَةِ عَلَى ضَوءِ الكِتَابِ وَالسُّنَّة

# ການກວດສອບ ແລະ ການຊີ້ແຈງປະເດັນບັນຫາຕ່າງ ໆ ຂອງຫັຈຍ໌, ອຸມເຣາະຫ໌ ແລະ ການຢ້ຽມຢາມ ໂດຍຍຶດຕາມຄຳພີອັລກຸຣອານ ແລະ ສຸນນະຫ໌


لِسَمَاحَةِ الشَّيْخِ العَلَّامَةِ

عَبْدِ العَزِيزِ بْنِ عَبْدِ اللهِ بْنِ بَازٍ

رَحِمَهُ اللهُ

ທ່ານອາຈານຜູ້ຊົງຄຸນນະວຸດ ທ່ານເຊັກອຸລະມາ

ເຊັຄອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

بِسْمِ اللهِ الرَّحمَنِ الرَّحِيمِ

# ການກວດສອບ ແລະ ການຊີ້ແຈງປະເດັນບັນຫາຕ່າງ ໆ ຂອງຫັຈຍ໌, ອຸມເຣາະຫ໌ ແລະ ການຢ້ຽມຢາມ ໂດຍຢຶດຕາມຄຳພີອັລກຸຣອານ ແລະ ສຸນນະຫ໌

ທ່ານອາຈານຜູ້ຊົງຄຸນນະວຸດ ທ່ານເຊັກອຸລະມາ
ເຊັຄອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

## ຄຳນຳຜູ້ຂຽນ

ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງກະລຸນາປານີ ຜູ້ຊົງເມດຕາສະເໝີ

ມວນການສັນລະເສີນເປັນຂອງອັລລໍຫ໌ ພຣະເຈົ້າແຫ່ງຈັກກະວານນີ້, ລາງວັນຕອບແທນທີ່ດີໃນບັ້ນປາຍຊີວິດເປັນຂອງບັນດາຜູ້ຢຳເກງ, ຂໍຄຳສະດຸດີ ແລະ ຄວາມສັນຕິສຸກແຫ່ງອັລລໍຫ໌ຈົ່ງມີແດ່ບ່າວ ແລະ ສາສະນະທູດຂອງພຣະອົງ ມຸຮຳມັດ ຊໍລລັລລໍຮຸ ອະໄລຮິ ວະສັລລຳ ແລະ ບັນດາວົງຕະກູນຂອງທ່ານຕະຫຼອດຈົນບັນດາສາວົກຂອງທ່ານໂດຍທົ່ວໜ້າ.

ຕໍ່ຈາກນີ້:

ນີ້ຄືຂໍ້ຄວາມສະບັບຫຍໍ້ກ່ຽວກັບພິທີຫັຈ, ການອະທິບາຍເຖິງຜົນລະບຸນ ແລະ ກິລິຍາມາລະຍາດຂອງມັນ, ສິ່ງທີ່ຄວນປະຕິບັດສຳລັບຜູ້ທີ່ຕ້ອງການເດີນທາງໄປປະກອບພິທີ, ແລະ ການອະທິບາຍບັນຫາທີ່ສຳຄັນຕ່າງໆຂອງພິທີຫັຈ, ພິທີອຸມເຣາະຮ໌ ແລະ ການຢ້ຽມຢາມ ໂດຍສັງເຂບ ແລະ ຮັດກຸມຊັດເຈນ, ເຊິ່ງຂ້າພະເຈົ້າໄດ້ພະຍາຍາມກວດສອບໃນຂໍ້ຄວາມນີ້ ໃຫ້ກົງກັບສິ່

ງທີ່ໄດ້ຖືກລະບຸໄວ້ໃນຄໍາພີຂອງອັລລໍຮ໌ ແລະ ແບບຢ່າງຂອງລໍຊູລຂອງພຣະອົງ ﷺ, ຂ້າພະເຈົ້າໄດ້ຮວບຮວມມັນໄວ້ເພື່ອເປັນການຕັກເຕືອນແກ່ບັນດາມຸສລິມ, ແລະ ເພື່ອປະຕິບັດຕາມຄໍາກ່າວຂອງອັລລໍຮ໌ ທີ່ວ່າ:

﴿وَذَكِّرْ فَإِنَّ الذِّكْرَىٰ تَنفَعُ الْمُؤْمِنِينَ ﴿٥٥﴾﴾

(ແລະ ເຈົ້າຈົ່ງຕັກເຕືອນເຖີດ ເພາະແທ້ຈິງການຕັກເຕືອນນັ້ນ ຍ່ອມໃຫ້ປະໂຫຍດແກ່ບັນດາຜູ້ສັດທາ) [ອັຊ-ຊາຣິຍາດ: 55] ແລະ ພຣະດໍາລັດຂອງພຣະອົງຜູ້ຊົງ ສູງສົ່ງ:

﴿وَإِذْ أَخَذَ اللَّهُ مِيثَاقَ الَّذِينَ أُوتُوا الْكِتَابَ لَتُبَيِّنُنَّهُ لِلنَّاسِ وَلَا تَكْتُمُونَهُ...﴾

(ແລະຈົງລໍາລຶກເຖິງຂະນະທີ່ອັລລໍຮ໌ໄດ້ເອົາຄໍາໝັ້ນສັນຍາຈາກບັນດາຜູ້ທີ່ໄດ້ຮັບຄໍາພີວ່າ ແນ່ນອນພວກເຈົ້າຈະຕ້ອງຊີ້ແຈງຄໍາພີນັ້ນແກ່ມະນຸດ ແລະ ພວກເຈົ້າຈະບໍ່ປິດບັງມັນ...)

[ອາລາ ອິມຣອນ: 187].

ໃນອາຍະຫ໌, ແລະ ດໍາລັດຂອງພຣະອົງທີ່ວ່າ:

﴿...وَتَعَاوَنُوا عَلَى الْبِرِّ وَالتَّقْوَىٰ...﴾

(...ແລະ ພວກເຈົ້າຈົ່ງຊ່ວຍເຫຼືອກັນໃນສິ່ງທີ່ເປັນຄຸນນະທັມ ແລະ ຄວາມຍໍາເກງ...) [ອັລ-ມາອິດະ: 2].

ແລະ ດັ່ງທີ່ໄດ້ມີມາໃນຫະດິຊທີ່ຊໍເຮັຍຈາກທ່ານນະບີ ﷺ ທ່ານໄດ້ກ່າວວ່າ:

«الدِّينُ النَّصِيحَةُ، ثَلَاثًا، قِيلَ: لِمَنْ يَا رَسُولَ اللَّهِ؟ قَالَ: لِلَّهِ وَلِكِتَابِهِ وَلِرَسُولِهِ وَلِأَئِمَّةِ الْمُسْلِمِينَ وَعَامَّتِهِمْ».

“ສາສະໜາຄືການຕັກເຕືອນ (ການຊີ້ແນະ ແລະ ປາດຖະນາດີ) ໂດຍທ່ານໄດ້ກ່າວຢໍ້າສາມຄັ້ງ, ຈຶ່ງມີຜູ້ກ່າວຖາມວ່າ: “ຕໍ່ໃ

ຜແດ່ ໂອ້ ທ່ານຣໍສູລຂອງອັລລໍຫ໌?" ທ່ານຈຶ່ງກ່າວວ່າ: "ເພື່ອອັລລໍຫ໌, ແລະ ຕໍ່ຄຳພີຂອງພຣະອົງ, ແລະ ຕໍ່ຣໍສູລຂອງພຣະອົງ, ຕໍ່ບັນດາຜູ້ນຳຂອງຊາວມຸສລິມ ແລະ ຕໍ່ຊາວມຸສລິມທຸກຄົນ"[1].

ແລະ ອິຫມ່າອັດຕັອບຣໍນີ ໄດ້ລາຍງານຈາກ ທ່ານຫຸໄຊຟະຫ໌, ແທ້ຈິງທ່ານນະບີ ﷺ ໄດ້ກ່າວວ່າ:

«مَنْ لَمْ يَهْتَمَّ بِأَمْرِ الْمُسْلِمِينَ فَلَيْسَ مِنْهُمْ، وَمَنْ لَمْ يُصْبِحْ وَيُمْسِ نَاصِحًا لِلَّهِ وَلِرَسُولِهِ وَلِكِتَابِهِ وَلِإِمَامِهِ وَلِعَامَّةِ الْمُسْلِمِينَ فَلَيْسَ مِنْهُمْ».

«ຜູ້ໃດທີ່ບໍ່ເອົາໃຈໃສ່ໃນກິດຈະການຂອງບັນດາມຸສລິມ ລາວກໍບໍ່ແມ່ນສ່ວນໜຶ່ງຂອງພວກເຂົາ, ແລະ ຜູ້ໃດທີ່ບໍ່ມີຄວາມຈິງໃຈ (ຫວັງດີ) ໃນຍາມເຊົ້າ ແລະ ຍາມແລງຕໍ່ອັລລໍຫ໌, ຕໍ່ຣໍສູລຂອງພຣະອົງ, ຕໍ່ຄຳພີຂອງພຣະອົງ, ຕໍ່ຜູ້ນຳຂອງລາວ ແລະ ຕໍ່ບັນດາມຸສລິມທົ່ວໄປ ລາວກໍບໍ່ແມ່ນສ່ວນໜຶ່ງຂອງພວກເຂົາ»[2].

ຂໍຕໍ່ອັລລໍຫ໌ ໄດ້ຊົງໂປດໃຫ້ຂ້າພະເຈົ້າ ແລະ ບັນດາມຸສລິມໄດ້ຮັບປະໂຫຍດຈາກຜົນງານນີ້, ແລະ ຊົງໂປດເຮັດໃຫ້ຄວາມພະຍາຍາມໃນຄັ້ງນີ້ເປັນສິ່ງທີ່ບໍລິສຸດໃຈເພື່ອພຣະພັກອັນຊົງກຽດຂອງພຣະອົງ, ແລະ ເປັນສາເຫດທີ່ຈະນຳໄປສູ່ການໄດ້ຮັບໄຊຊະນະ ນະທີ່ພຣະອົງ ໃນບັນດາສວນສະຫວັນອັນສຳລານ. ແທ້ຈິງພຣະອົງເປັນຜູ້ຊົງໄດ້ຍິນ ຜູ້ຊົງຕອບຮັບ, ແລະ ພຣະອົງນັ້ນເປັນທີ່ພຶ່ງພໍແກ່ພວກເຮົາ ແລະ ເປັນຜູ້ຊົງດູແລທີ່ດີເລີດທີ່ສຸດ.

---

1 ບັນທຶກໂດຍມຸສລິມ, ເລກທີ່ (55)

2 ບັນທຶກໂດຍ ທ່ານອັດ-ຕໍບະຣໍນີ ໃນໜັງສືອັລເອົາຊັດຂອງເພິ່ນ ເລກທີ (7469).

## ບົດວ່າດ້ວຍ

## ຫຼັກຖານຕ່າງໆ ຂອງການປະຕິບັດທີ່ເປັນວາຈິບ ແລະ ການຮີບຮ້ອນໃນການປະກອບພິທີຮັຈ ແລະ ອຸມເຣາະຫ໌

ເມື່ອໄດ້ຮູ້ດັ່ງນີ້ແລ້ວ ກໍຈົ່ງຮູ້ໄວ້ເຖີດ - ຂໍອັລລໍຫ໌ຊົງໂປດນໍາພາຂ້າພະເຈົ້າ ແລະ ພວກທ່ານ ໃຫ້ຮັບຮູ້ສັດຈະທໍາ ແລະ ປະຕິບັດຕາມ - ວ່າ ແທ້ຈິງ ອັລລໍຫ໌ ຜູ້ຊົງສູງສົ່ງ ໄດ້ກໍາໜົດການປະກອບພິທີຮັຈ ທີ່ໄບຕຸລລໍຫ໌ ອັນສັກສິດຂອງພຣະອົງ ໃຫ້ເປັນຂໍ້ບັງຄັບແກ່ປວງບ່າວຂອງພຣະອົງ, ແລະ ໄດ້ເຮັດໃຫ້ມັນເປັນຫລັກການໜຶ່ງໃນບັນດາຫລັກການຂອງສາສະໜາອິສລາມ. ອັລລໍຫ໌ ຕະອາລາ ໄດ້ກ່າວວ່າ :

﴿...وَلِلَّهِ عَلَى النَّاسِ حِجُّ الْبَيْتِ مَنِ اسْتَطَاعَ إِلَيْهِ سَبِيلًا وَمَنْ كَفَرَ فَإِنَّ اللَّهَ غَنِيٌّ عَنِ الْعَالَمِينَ﴾

(ແລະ ສິດທິຂອງອັລລໍຫ໌ທີ່ມີແກ່ມະນຸດນັ້ນ ຄືການມຸ່ງສູ່ບ້ານຫຼັງນັ້ນ (ໝາຍເຖິງກະບະຫ໌ ໄບຕຸລລໍຫ໌ເພື່ອປະກອບພິທີຫັຈ ແລະ ອຸມເຣາະຫ໌) ອັນໄດ້ແກ່ ຜູ້ທີ່ມີຄວາມສາມາດເດີນທາງໄປຍັງບ້ານຫຼັງນັ້ນໄດ້ ແລະ ຜູ້ໃດປະຕິເສດ (ບໍ່ໄປປະກອບພິທີຫັຈ) ແທ້ຈິງ ອັລລໍຫ໌ບໍ່ຊົງເພິ່ງພາປະຊາຊາດທັ້ງຫຼາຍ"

[ອາລາ ອິມຣອນ: 97]

ແລະ ໃນບັນທຶກຂອງທ່ານອິຫມ່າທັ້ງສອງ ຈາກລາຍງານຂອງທ່ານອິບນຸ ອຸມັຣ ຣໍດິຍັລລໍຮຸ ອັນຮຸມາ ແທ້ຈິງທ່ານນະບີ ﷺ ໄດ້ກ່າວວ່າ:

«بُنِيَ الإِسْلَامُ عَلَى خَمْسٍ: شَهَادَةِ أَنْ لَا إِلَهَ إِلَّا اللَّهُ، وَأَنَّ مُحَمَّدًا رَسُولُ اللَّهِ، وَإِقَامِ

الصَّلَاةِ، وَإِيتَاءِ الزَّكَاةِ، وَصَوْمِ رَمَضَانَ، وَحَجِّ بَيْتِ اللَّهِ الحَرَامِ».

«ຮາກຖານຂອງອິສລາມຕັ້ງຢູ່ເທິງ ຫ້າ ປະການ: ການປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະ ມຸຮຳມັດເປັນສາສະນະທູດຂອງອັລລໍຫ໌, ດຳລົງໄວ້ເຊິ່ງການລະຫມາດ, ການຈ່າຍຊະກາດ, ການຖືສິນອົດໃນເດືອນຣໍມະດອນ, ແລະ ການປະກອບພິທີຮັຈ»[1].

ທ່ານ ອຸມັຣ ໄດ້ເລົ່າໄວ້ໃນລຸນັນຂອງເພິ່ນ, ຈາກທ່ານອຸມັຣ ບິນ ຄອດຕ໊ອບ ຣໍດິຍັລລໍອັນຮຸ ວ່າ: «ແທ້ຈິງ ຂ້ອຍຕັ້ງໃຈວ່າຈະສົ່ງຄົນໄປຍັງບັນດາເມືອງເຫຼົ່ານີ້ ເພື່ອໃຫ້ພວກເຂົາໄປກວດສອບທຸກຄົນທີ່ມີຄວາມສາມາດ ແລະ ບໍ່ໄດ້ໄປເຮັດພິທີຫັຈ ເພື່ອຈະໄດ້ກຳນົດໃຫ້ພວກເຂົາຈ່າຍຈິຊຍະຫ໌[2], ພວກເຂົາບໍ່ແມ່ນມຸສລິມ, ພວກເຂົາບໍ່ແມ່ນມຸສລິມ»[3]

ແລະ ຈາກລາຍງານຂອງທ່ານອາລີ ຣໍດິຍັລລໍຮຸ ອັນຮຸ ເພິ່ນໄດ້ກ່າວໄວ້ວ່າ: «ຜູ້ໃດທີ່ມີຄວາມສາມາດໃນການເຮັດຫັຈ ແລ້ວລະເລີຍມັນ, ກໍບໍ່ຕ່າງຫຍັງກັບລາວຈະຕາຍເປັນຊາວຢິວ ຫຼື ຊາວຄຣິສຕຽນ»[4].

ເປັນຂໍ້ບັງຄັບສຳລັບຜູ້ທີ່ມີຄວາມສາມາດທີ່ຍັງບໍ່ທັນໄດ້ປະກອບພິທີຫັຈ ໃຫ້ຮີບເຮັ່ງໄປປະກອບມັນ; ເນື່ອງຈາກມີລາຍງານຈາກ ທ່ານ ອິບນຸ ອັບບາສ ຣໍດິຍັລລໍຮຸ ອັນຮຸ, ວ່າ ທ່ານນະບີ ﷺ ໄດ້ກ່າວວ່າ:

---

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (8) ແລະ ມຸສລິມ, ເລກທີ່ (16).

[2] ໝາຍເຖິງ: ຄວາມກວ້າງຂວາງຂອງຊັບສົມບັດ.

[3] ໄດ້ຖືກອ້າງອີງໃນໜັງສື ຈາມິອຸລ-ອະຫາດີຊ ເລກທີ (31221) ວ່າເປັນຂອງ ລຸນັນ ຂອງ ທ່ານ ສະອີດ ບິນ ມັນຊູຣ, ແຕ່ຂ້າພະເຈົ້າບໍ່ພົບມັນໃນສະບັບທີ່ມີຢູ່.

[4] ບັນທຶກໂດຍ ອັດຕິຣມີຊີ ເລກທີ່ (812).

«تَعَجَّلُوا إِلَى الحَجِّ - يَعْنِي الفَرِيضَةَ - فَإِنَّ أَحَدَكُمْ لَا يَدْرِي مَا يَعْرِضُ لَهُ».

«ພວກເຈົ້າຈົ່ງຟ້າວໄປເຮັດຮັຈ (ໝາຍເຖິງ ຟັຣດູ), ເພາະແທ້ຈິງແລ້ວ ພວກເຈົ້າຄົນໃດຄົນໜຶ່ງບໍ່ຮູ້ວ່າ ສິ່ງໃດຈະເກີດຂຶ້ນກັບເຂົາ»[1]

ແລະ ເພາະວ່າການປະກອບພິທີຮັຈເປັນຂໍ້ບັງຄັບທີ່ຕ້ອງປະຕິບັດໂດຍທັນທີ່ ສໍາລັບຜູ້ທີ່ມີຄວາມສາມາດເດີນທາງໄປໄດ້; ຈາກຄວາມຫມາຍທີ່ຊັດເຈນໃນຄໍາດໍາລັດຂອງພຣະອົງອັລລໍຫ໌ ຕະອາລາ ທີ່ວ່າ:

﴿...وَلِلَّهِ عَلَى النَّاسِ حِجُّ الْبَيْتِ مَنِ اسْتَطَاعَ إِلَيْهِ سَبِيلًا وَمَنْ كَفَرَ فَإِنَّ اللَّهَ غَنِيٌّ عَنِ الْعَالَمِينَ﴾

(...ແລະ ສິດທິຂອງອັລລໍຫ໌ທີ່ມີແກ່ມະນຸດນັ້ນ ຄືການມຸ່ງສູ່ບ້ານຫຼັງນັ້ນ (ໝາຍເຖິງກະບະຫ໌ ໃນຕຸລລໍຫ໌ເພື່ອປະກອບພິທີຫັຈ ແລະ ອຸມເຣາະຫ໌) ອັນໄດ້ແກ່ ຜູ້ທີ່ມີຄວາມສາມາດຫາທາງໄປຍັງບ້ານຫຼັງນັ້ນໄດ້ ແລະ ຜູ້ໃດປະຕິເສດ (ບໍ່ໄປປະກອບພິທີຫັຈ) ແທ້ຈິງ ອັລລໍຫ໌ບໍ່ລົງເພິ່ງພາປະຊາຊາດທັ້ງຫຼາຍ) [ອາລາອິມຣອນ: 97] ດັ່ງທີທ່ານນະບີ ﷺ ໄດ້ກ່າວໄວ້ໃນຄຸຕບະຫ໌ຂອງທ່ານ ວ່າ:

«أَيُّهَا النَّاسُ، إِنَّ اللَّهَ فَرَضَ عَلَيْكُمُ الحَجَّ فَحُجُّوا».

<ໂອ້ມະນຸດທັງຫຼາຍ, ແທ້ຈິງອັລລໍຫ໌ໄດ້ບັນຍັດການຮັຈເໜືອພວກເຈົ້າ, ດັ່ງນັ້ນພວກເຈົ້າຈົ່ງປະກອບພິທີຮັຈເຖີດ.>[2]

ແລະ ໄດ້ມີການລາຍງານບັນດາຫະດິຊ ທີ່ບົ່ງຊີ້ເຖິງການເປັ

1 ບັນທຶກໂດຍ ອະບູ ດາວູດ ເລກທີ່ (1732).

2 ບັນທຶກໂດຍມຸສລິມ, ເລກທີ່ (1337).

ນຂໍ້ບັງຄັບຂອງອຸມເຣາະຫ໌, ສ່ວນໜຶ່ງໃນນັ້ນແມ່ນ:

ຄຳກ່າວຂອງທ່ານ ﷺ ໃນການຕອບທ່ານ ຈິບຣີລ ເມື່ອລາວໄດ້ຖາມກ່ຽວກັບ ອິສລາມ, ທ່ານນະບີ ﷺ ໄດ້ກ່າວວ່າ:

«الإِسْلَامُ أَنْ تَشْهَدَ أَنْ لَا إِلَهَ إِلَّا اللَّهُ وَأَنَّ مُحَمَّدًا رَسُولُ اللَّهِ، وَتُقِيمَ الصَّلَاةَ، وَتُؤْتِيَ الزَّكَاةَ، وَتَحُجَّ الْبَيْتَ وَتَعْتَمِرَ، وَتَغْتَسِلَ مِنَ الْجَنَابَةِ، وَتُتِمَّ الْوُضُوءَ، وَتَصُومَ رَمَضَانَ».

«ອິສລາມຄື: ການປະຕິຍານວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະ ມຸຮຳມັດເປັນສາສະນະທູດຂອງອັລລໍຫ໌, ດຳລົງໄວ້ເຊິ່ງການລະໝາດ, ຈ່າຍຊະກາດ, ປະກອບພິທີຮັຈຫ໌ ແລະ ອຸມເຣາະຫ໌, ອາບນ້ຳຊຳລະລ້າງຈະນາບະຫ໌, ປະຕິບັດວຸດູໃຫ້ສົມບູນ, ແລະ ຖືສິນອົດໃນເດືອນຣໍມະດອນ»[1] ບັນທຶກໂດຍ ທ່ານ ອິບນຸຄຸໄຊມະຫ໌, ແລະ ດາຣຸຕໍນີ, ຈາກຣະດີຊຂອງທ່ານ ອຸມັຣ ບິນ ອັລ ຄັດຕອບ ຣໍດີຍັລລໍຮຸ ອັນຮູ, ແລະ ທ່ານດາຣຸຕໍນີໄດ້ກ່າວວ່າ: ນີ້ຄືສາຍລາຍງານທີ່ຖືກຢືນຢັນ ແລະ ຖືກຕ້ອງ.

ແລະ ໜຶ່ງໃນນັ້ນແມ່ນ ຫະດີຊຂອງທ່ານນາງ ອາອິຊະຫ໌ ຣໍດີຍັລລໍຮຸ ອັນຮາ ໄດ້ກ່າວວ່າ:

«يَا رَسُولَ اللَّهِ، هَلْ عَلَى النِّسَاءِ مِنْ جِهَادٍ؟ قَالَ: عَلَيْهِنَّ جِهَادٌ لَا قِتَالَ فِيهِ: الْحَجُّ وَالْعُمْرَةُ».

«ໂອ້ ທ່ານຣໍຊູລັລລໍຮ໌, ແມ່ຍິງມີໜ້າທີ່ຕ້ອງອອກສົງຄາມຈິຮາດຫຼືບໍ່? ທ່ານຈຶ່ງກ່າວວ່າ: ສຳລັບພວກນາງນັ້ນມີການຕໍ່ສູ້ທີ່ບໍ່ມີການສູ້ຮົບຄື: ຫັຈ ແລະ ອຸມເຣາະຫ໌»[2] ບັນທຶກໂດຍ ທ່ານອິມ່າມອະຫ໌ມັດ, ແລະ ທ່ານອິບນຸມາຈະຫ໌ ດ້ວຍອິສນາດຊໍຮີຍຫ໌.

---

[1] ບັນທຶກໂດຍ ອິບນຸ ຄຸໄຊມະ, ເລກທີ່ (1).

[2] ບັນທຶກໂດຍອັລບຸກໍຣີ : ເລກທີ່ (1520).

ການປະກອບພິທີຮັຈ ແລະ ອຸມເຣາະຫ໌ ເປັນວາຈິບໃນຊີວິດພຽງເທື່ອດຽວເທົ່ານັ້ນ; ດັ່ງທີ່ທ່ານນະບີ ﷺ ໄດ້ກ່າວໄວ້ໃນຫະດີສທີ່ຊໍຮີຍຫ໌ວ່າ:

«الحَجُّ مَرَّةٌ، فَمَنْ زَادَ فَهُوَ تَطَوُّعٌ».

«ການເຮັດຫັຈແມ່ນໜຶ່ງຄັ້ງ, ສ່ວນຜູ້ໃດທີ່ເຮັດເພີ່ມ ກໍເປັນການສະໝັກໃຈ»[1].

ແລະ ເປັນຊຸນນະຫ໌ໃຫ້ໝັ່ນປະກອບພິທີຮັຈ ແລະ ອຸມເຣາະຫ໌ແບບສະໝັກໃຈ; ດັ່ງທີ່ມີການຢືນຢັນໃນສອງຊໍເຮັຍຫ໌, ຈາກທ່ານ ອະບີ ຮຸໄຣເຣາະຫ໌ ຣໍດິຢັລລໍຮຸ ອັນຮຸ, ເພິ່ນໄດ້ກ່າວວ່າ: ທ່ານຣໍຊູລຸລລໍຣ໌ ﷺ ໄດ້ກ່າວວ່າ:

«العُمْرَةُ إِلَى العُمْرَةِ كَفَّارَةٌ لِمَا بَيْنَهُمَا، وَالحَجُّ المَبْرُورُ لَيْسَ لَهُ جَزَاءٌ إِلَّا الجَنَّةُ».

«ການເຮັດອຸມເຣາະຫ໌ຄັ້ງໜຶ່ງ ຫາອີກຄັ້ງໜຶ່ງ ເປັນການລົບລ້າງຄວາມຜິດທີ່ຢູ່ລະຫວ່າງທັງສອງ, ແລະ ຫັຈທີ່ຖືກຕອບຮັບນັ້ນ ບໍ່ມີການຕອບແທນໃດໆ ນອກຈາກສວນສະຫວັນ»[2].

## ບົດວ່າດ້ວຍ

## ພັນທະໃນການເຕົາບະຫ໌ຈາກບັນດາຄວາມຜິດບາບ ແລະ ການປົດເປື້ອງຕົນຈາກການອະທຳ.

ເມື່ອມຸສລິມຄົນໜຶ່ງຕັ້ງໃຈຈະເດີນທາງໄປປະກອບພິທີຮັຈ ຫຼື ອຸມເຣາະຫ໌: ເປັນສິ່ງທີ່ສົ່ງເສີມໃຫ້ລາວໄດ້ສັ່ງເສຍຄອບຄົວ ແລະ ໝູ່ຄູ່ຂອງລາວໃຫ້ມີຄວາມຢຳເກງຕໍ່ອັລລໍຫ໌, ເຊິ່ງຄືການປະຕິບັດຕາມບັນດາຄຳສັ່ງຂອງພຣະອົງ ແລະ ລະເວັ້ນຈາກບັ

[1] ບັນທຶກໂດຍ ອັນນະສາອີ, ເລກທີ່ (2620).
[2] ບັນທຶກໂດຍ ອັລບຸກໍຄໍຣີ ເລກທີ່ (1773), ແລະ ມຸສລິມ ເລກທີ່ (1349).

ບດາຂໍ້ຫ້າມຂອງພຣະອົງ.

ແລະ ລາວຄວນຂຽນສິ່ງທີ່ຕົນມີ ແລະ ໜີ້ສິນທີ່ຕົນຕິດຄ້າງ , ແລະ ໃຫ້ມີພະຍານໃນເລື່ອງນັ້ນ, ແລະ ເປັນໜ້າທີ່ຈຳເປັນຂອງລາວທີ່ຈະຕ້ອງຮີບຮ້ອນເຮັດການເຕົາບະຫ໌ທີ່ຈິງໃຈ ບໍລິສຸດຢ່າງແທ້ຈິງ ຈາກຄວາມຜິດບາບທັງໝົດທັງມວນ; ດັ່ງຄຳດຳລັດຂອງພຣະອົງທີ່ວ່າ:

﴿...وَتُوبُوا إِلَى اللَّهِ جَمِيعًا أَيُّهَ الْمُؤْمِنُونَ لَعَلَّكُمْ تُفْلِحُونَ﴾

(...ແລະ ພວກເຈົ້າຈົ່ງກັບຕົວສູ່ອັລລໍຫ໌ໂດຍພ້ອມພຽງກັນເຖີດ ບັນດາຜູ້ສັດທາເອີຍ, ເພື່ອວ່າພວກເຈົ້າຈະໄດ້ຮັບຄວາມສຳເລັດ) [ອັນ-ນູຣ: 31].

ຄວາມໝາຍທີ່ແທ້ຈິງຂອງການເຕົາບະຫ໌ແມ່ນ: ການລະເວັ້ນຈາກບາບຕ່າງໆ ແລະ ລະຖິ້ມມັນ, ແລະ ການສຳນຶກຜິດຕໍ່ສິ່ງທີ່ຜ່ານມາ, ແລະ ຕັ້ງໃຈໝັ້ນວ່າຈະບໍ່ຫວນກັບໄປເຮັດມັນອີກ, ແລະ ຫາກວ່າເຂົາມີການອະທຳຕໍ່ຜູ້ອື່ນ ບໍ່ວ່າຈະເປັນເລື່ອງຊີວິດ, ຊັບສິນ ຫຼື ກຽດສັກສີ ກໍໃຫ້ສົ່ງຄືນໃຫ້ແກ່ພວກເຂົາ, ຫຼື ຂໍການອະໄພຈາກພວກເຂົາ ກ່ອນການເດີນທາງຂອງເຂົາ; ດັ່ງທີ່ມີລາຍງານທີ່ເຊື່ອຖືໄດ້ຈາກເພິ່ນ ﷺ ວ່າເພິ່ນໄດ້ກ່າວວ່າ:

«مَنْ كَانَتْ عِنْدَهُ مَظْلَمَةٌ لِأَخِيهِ مِنْ مَالٍ أَوْ عِرْضٍ فَلْيَتَحَلَّلِ اليَوْمَ قَبْلَ أَنْ لَا يَكُونَ دِينَارٌ وَلَا دِرْهَمٌ، إِنْ كَانَ لَهُ عَمَلٌ صَالِحٌ أُخِذَ مِنْهُ بِقَدْرِ مَظْلَمَتِهِ، وَإِنْ لَمْ تَكُنْ لَهُ حَسَنَاتٌ أُخِذَ مِنْ سَيِّئَاتِ صَاحِبِهِ فَحُمِلَ عَلَيْهِ».

«ຜູ້ໃດທີ່ຕິດຄ້າງການອະທຳຕໍ່ພີ່ນ້ອງຂອງຕົນ ໃນເລື່ອງຊັບສິນ ຫຼື ກຽດສັກສີ, ກໍຈົ່ງໄປສະສາງກັບລາວໃນມື້ນີ້ ກ່ອນທີ່ຈະບໍ່ມີເງິນດີນາຣ໌ ແລະ ເງິນດິຣຮໍາ, ຖ້າຫາກລາວມີການງານທີ່ດີງາມ, ກໍຈະຖືກເອົາໄປຈາກລາວຕາມປະລິມານການອະທຳຂອງ

ລາວ, ແລະ ຖ້າຫາກລາວບໍ່ມີຄວາມດີງາມ, ກໍຈະຖືກເອົາຈາກບາບກຳຂອງຄູ່ກໍລະນີຂອງລາວ ມາໂຍນໃສ່ລາວ»[1].

ແລະ ສົມຄວນທີ່ຈະເລືອກສັນຫາປັດໃຈທີ່ດີງາມຈາກຊັບສິນທີ່ຫະລາລ ສຳລັບການປະກອບພິທີຮັຈ ແລະ ອຸມເຣາະຫ໌; ເພາະມີຫຼັກຖານທີ່ເຊື່ອຖືໄດ້ຈາກເພິ່ນ ﷺ ທີ່ໄດ້ກ່າວໄວ້ວ່າ:

«إِنَّ اللَّهَ تَعَالَى طَيِّبٌ لَا يَقْبَلُ إِلَّا طَيِّبًا».

« ແທ້ຈິງ ອັລລໍຫ໌ ຕາອາລາ ຊົງບໍລິສຸດ ແລະ ຈະບໍ່ຕອບຮັບນອກຈາກສິ່ງທີ່ບໍລິສຸດ »[2].

ທ່ານອັດ-ຕໍບະຣໍນີ ໄດ້ລາຍງານຈາກທ່ານອາບູ ຮູຣອຍເຣາະຫ໌ ຣໍດິຢັລລໍອັນຮຸ ເລົ່າວ່າ: ທ່ານຣໍສູລຸລລໍຫ໌ ﷺ ກ່າວວ່າ:

«إِذَا خَرَجَ الرَّجُلُ حَاجًّا بِنَفَقَةٍ طَيِّبَةٍ وَوَضَعَ رِجْلَهُ فِي الغَرْزِ فَنَادَى: لَبَّيْكَ اللَّهُمَّ لَبَّيْكَ، نَادَاهُ مُنَادٍ مِنَ السَّمَاءِ: لَبَّيْكَ وَسَعْدَيْكَ، زَادُكَ حَلَالٌ، وَرَاحِلَتُكَ حَلَالٌ، وَحَجُّكَ مَبْرُورٌ غَيْرُ مَأْزُورٍ، وَإِذَا خَرَجَ الرَّجُلُ بِالنَّفَقَةِ الخَبِيثَةِ فَوَضَعَ رِجْلَهُ فِي الغَرْزِ فَنَادَى: لَبَّيْكَ اللَّهُمَّ لَبَّيْكَ، نَادَاهُ مُنَادٍ مِنَ السَّمَاءِ: لَا لَبَّيْكَ وَلَا سَعْدَيْكَ، زَادُكَ حَرَامٌ، وَنَفَقَتُكَ حَرَامٌ، وَحَجُّكَ غَيْرُ مَبْرُورٍ».

«ເມື່ອຊາຍຄົນໜຶ່ງອອກໄປເຮັດຮັຈດ້ວຍປັດໃຈທີ່ດີງາມ ແລະ ລາວໄດ້ວາງຕີນຂອງລາວລົງໃນພາຫະນະ ແລ້ວກ່າວຂານວ່າ: "ລັບໄບກັລລໍຮຸມມະ ລັບໄບກ໌", ກໍ່ຈະມີຜູ້ປະກາດຈາກຟາກຟ້າກ່າວແກ່ລາວວ່າ: "ລັບໄບກ໌ ວະ ສະອະໄດກ໌, ສະບຽງຂອງເຈົ້າເປັນສິ່ງຫະລາລ, ແລະ ພາຫະນະຂອງເຈົ້າກໍ່ເປັນສິ່ງຫະລາລ, ແລະ ການທຳຮັຈຂອງເຈົ້າກໍ່ເປັນທີ່ຖືກຕອບຮັບ ປາສະຈາ

---

[1] ບັນທຶກໂດຍອັລບຸກໍຄໍຣີ : ເລກທີ່ (2449).

[2] ບັນທຶກໂດຍມຸສລິມ, ເລກທີ່ (1015).

ກບາບ. ແລະ ເມື່ອຊາຍຄົນໜຶ່ງອອກໄປດ້ວຍປັດໃຈທີ່ບໍ່ດີ (ຫະຣອມ) ແລະ ລາວໄດ້ວາງຕີນຂອງລາວລົງໃນພາຫະນະ ແລ້ວກ່າວຂານວ່າ: "ລັບໄບກັລລໍຮຸມມະ ລັບໄບກ໌, ກໍ່ຈະມີຜູ້ປະກາດຈາກຟາກຟ້າກ່າວແກ່ລາວວ່າ: ລາ ລັບໄບກ໌ ວະ ລາ ສະອະໄດກ໌, ສະບຽງຂອງເຈົ້າເປັນສິ່ງຫະຣອມ, ແລະ ຄ່າໃຊ້ຈ່າຍຂອງເຈົ້າກໍ່ເປັນສິ່ງຫະຣອມ, ແລະ ການທໍາຮັຈຂອງເຈົ້າກໍ່ບໍ່ເປັນທີ່ຖືກຕອບຮັບ»[1].

ແລະ ສົມຄວນສໍາລັບຜູ້ປະກອບພິທີຮັຈທີ່ຈະບໍ່ເພິ່ງພາອາໄສສິ່ງທີ່ຢູ່ໃນກໍາມືຂອງຜູ້ຄົນ ແລະ ລະເວັ້ນຈາກການຂໍຈາກພວກເຂົາ; ດັ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວໄວ້ວ່າ:

«وَمَنْ يَسْتَعْفِفْ يُعِفَّهُ اللَّهُ، وَمَنْ يَسْتَغْنِ يُغْنِهِ اللَّهُ».

«ແລະຜູ້ໃດທີ່ສະແຫວງຫາຄວາມບໍລິສຸດ, ອັລລໍຫ໌ກໍຈະຊົງປະທານຄວາມບໍລິສຸດໃຫ້ແກ່ເຂົາ, ແລະຜູ້ໃດທີ່ສະແຫວງຫາຄວາມພຽງພໍ, ອັລລໍຫ໌ກໍຈະຊົງປະທານຄວາມພຽງພໍໃຫ້ແກ່ເຂົາ»[2].

ແລະ ຄໍາກ່າວຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວໄວ້ວ່າ:

«لَا يَزَالُ الرَّجُلُ يَسْأَلُ النَّاسَ حَتَّى يَأْتِيَ يَوْمَ القِيَامَةِ وَلَيْسَ فِي وَجْهِهِ مُزْعَةُ لَحْمٍ».

«ຜູ້ຊາຍຄົນໜຶ່ງຈະຫຍັງຄົງຂໍຈາກຜູ້ຄົນ ຈົນກວ່າລາວຈະ

---

[1] ບັນທຶກໂດຍທ່ານອັດ-ຕໍບະຣໍນີ ໃນອັລກະບີຣ, ເລກທີ່ (2989).
[2] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1427) ແລະ ມຸສລິມ, ເລກທີ່ (1035).

ມາໃນວັນກິຍາມະຫ໌ ໃນສະພາບທີ່ໃບໜ້າຂອງລາວບໍ່ມີຊີ້ນເຫຼືອ»[1].

ເປັນສິ່ງຈຳເປັນສຳລັບຜູ້ປະກອບພິທີຮັຈ ທີ່ຈະຕ້ອງຕັ້ງເຈດຕະນາໃນການປະກອບພິທີຮັຈ ແລະ ອຸມເຣາະຫ໌ຂອງຕົນ ເພື່ອຫວັງໃນຄວາມພໍພຣະໄທຂອງອັລລໍຫ໌ ແລະ ໂລກອາຄິເຣາະຫ໌, ແລະ ເພື່ອສະແຫວງຫາຄວາມໃກ້ຊິດຕໍ່ອັລລໍຫ໌ ດ້ວຍກັບສິ່ງທີ່ພຣະອົງຊົງພໍພຣະໄທ ຈາກບັນດາຄຳເວົ້າ ແລະ ການກະທຳ ໃນສະຖານທີ່ອັນມີກຽດເຫຼົ່ານັ້ນ, ແລະ ຕ້ອງລະມັດລະວັງຢ່າງທີ່ສຸດ ຈາກການຕັ້ງເຈດຕະນາໃນການປະກອບພິທີຮັຈ ເພື່ອຫວັງໃນດຸນຍາ ແລະ ຊັບສົມບັດຂອງມັນ, ຫຼື ເພື່ອການໂອ້ອວດ, ການຫວັງຊື່ສຽງ ແລະ ການອວດອ້າງໃນສິ່ງດັ່ງກ່າວ, ເພາະແທ້ຈິງສິ່ງດັ່ງກ່າວນັ້ນ ຄືເຈດຕະນາທີ່ຊົ່ວຊ້າທີ່ສຸດ ແລະ ເປັນສາເຫດທີ່ເຮັດໃຫ້ການງານຖືກໂມຄະ ແລະ ບໍ່ຖືກຕອບຮັບ, ດັ່ງທີ່ອັລລໍຫ໌ ຕະອາລາ ໄດ້ກ່າວໄວ້ວ່າ:

﴿مَن كَانَ يُرِيدُ الْحَيَاةَ الدُّنْيَا وَزِينَتَهَا نُوَفِّ إِلَيْهِمْ أَعْمَالَهُمْ فِيهَا وَهُمْ فِيهَا لَا يُبْخَسُونَ ۝١٥ أُولَٰئِكَ الَّذِينَ لَيْسَ لَهُمْ فِي الْآخِرَةِ إِلَّا النَّارُ وَحَبِطَ مَا صَنَعُوا فِيهَا وَبَاطِلٌ مَّا كَانُوا يَعْمَلُونَ ۝١٦﴾

(ຜູ້ໃດທີ່ຕ້ອງການຊີວິດຄວາມເປັນຢູ່ແຫ່ງໂລກນີ້ ແລະ ເຄື່ອງປະດັບປະດາຂອງມັນ ເຮົາກໍ່ຈະຕອບແທນການງານຂອງພວກເຂົາໃຫ້ຢ່າງຄົບຖ້ວນໃນນັ້ນ ແລະ ພວກເຂົາຈະບໍ່ຖືກຫຼຸດຫຍ່ອນໃນນັ້ນແຕ່ຢ່າງໃດ )

Kຊົນເຫຼົ່ານີ້ ພວກເຂົາບໍ່ມີສ່ວນໃດໆໃນໂລກໜ້າ ນອກຈາກນາລົກ ແລະການງານທີ່ພວກເຂົາໄດ້ກະທຳໄວ້ໃນນັ້ນກໍໄດ້ສູ

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1474) ແລະ ມຸສລິມ, ເລກທີ່ (4040).

ນສິ້ນໄປ ແລະ ສິ່ງທີ່ພວກເຂົາເຄີຍປະຕິບັດມາກໍເປັນໂມຄະ)

[ຮູດ: 15-16].

ແລະ ພຣະຜູ້ຊົງສູງສົ່ງໄດ້ຕຣັດວ່າ:

﴿مَّن كَانَ يُرِيدُ الْعَاجِلَةَ عَجَّلْنَا لَهُ فِيهَا مَا نَشَاءُ لِمَن نُّرِيدُ ثُمَّ جَعَلْنَا لَهُ جَهَنَّمَ يَصْلَاهَا مَذْمُومًا مَّدْحُورًا ﴿١٨﴾ وَمَنْ أَرَادَ الْآخِرَةَ وَسَعَىٰ لَهَا سَعْيَهَا وَهُوَ مُؤْمِنٌ فَأُولَٰئِكَ كَانَ سَعْيُهُم مَّشْكُورًا ﴿١٩﴾﴾

(ຜູ້ໃດທີ່ປາຖະໜາຊີວິດຊົ່ວຄາວ (ໃນໂລກນີ້), ເຮົາກໍຈະເລັ່ງໃຫ້ແກ່ລາວໃນໂລກນີ້ຕາມທີ່ເຮົາປະສົງ ສຳລັບຜູ້ທີ່ເຮົາຕ້ອງການ, ຫຼັງຈາກນັ້ນເຮົາກໍໄດ້ກຽມນະລົກໄວ້ສຳລັບລາວ ຊຶ່ງລາວຈະເຂົ້າໄປໃນນັ້ນໃນສະພາບທີ່ຖືກປະນາມ ແລະ ຖືກຂັບໄລ່)

(ແລະ ຜູ້ໃດປະສົງໂລກໜ້າ ແລະ ພາກພຽນເພື່ອມັນຢ່າງຈິງຈັງ ໂດຍທີ່ລາວເປັນຜູ້ສັດທາ ດັ່ງນັ້ນ ຊົນເຫລົ່ານັ້ນ ຄວາມພາກພຽນຂອງພວກເຂົາກໍຈະໄດ້ຮັບການຕອບແທນ)

[ອັລ-ອິສຣໍ: 18-19].

ແລະ ໄດ້ມີການຢືນຢັ້ງຈາກທ່ານນະບີ ﷺ ວ່າ:

«قَالَ اللَّهُ تَعَالَى: أَنَا أَغْنَى الشُّرَكَاءِ عَنِ الشِّرْكِ، مَنْ عَمِلَ عَمَلًا أَشْرَكَ مَعِي فِيهِ غَيْرِي تَرَكْتُهُ وَشِرْكَهُ».

"ອັລລໍຮ໌ ຜູ້ຊົງສູງສົ່ງ ໄດ້ຕຣັດວ່າ: ຂ້າເປັນຜູ້ທີ່ບໍ່ຕ້ອງການທີ່ສຸດ ຕໍ່ກັບການຕັ້ງພາຄີ (ຊີຣິກ), ຜູ້ໃດທີ່ໄດ້ກະທຳການງານໃດໜຶ່ງ ໂດຍຕັ້ງສິ່ງອື່ນນອກເໜືອຈາກເຮົາເປັນພາຄີຮ່ວມກັບຂ້າໃນການງານນັ້ນ, ຂ້າກໍຈະປະຖິ້ມລາວຜູ້ນັ້ນ ພ້ອມກັບການຕັ້ງພາຄີຂອງລາວ[1].

---

[1] ບັນທຶກໂດຍມຸສລິມ, ເລກທີ່ (2985).

ເຊັ່ນດຽວກັນ, ໃນການເດີນທາງຂອງເຂົາ ຄວນທີ່ຈະຄົບຫາກັບຄົນດີ ຈາກບັນດາຜູ້ທີ່ເຊື່ອຟັງ, ມີຕັກວາ ແລະ ມີຄວາມເຂົ້າໃຈໃນສາສະໜາ, ແລະ ໃຫ້ຫຼີກລ່ຽງຈາກການຄົບຫາກັບຄົນໂງ່ ແລະ ຄົນຊົ່ວ.

ລາວຄວນສຶກສາຮ່ຳຮຽນຂໍ້ກຳນົດຕ່າງໆ ທີ່ຖືກບັນຍັດໄວ້ໃນການປະກອບພິທີຮັຈ ແລະ ອຸມເຣາະຫ໌ຂອງລາວ, ພ້ອມທັງທຳຄວາມເຂົ້າໃຈໃນເລື່ອງດັ່ງກ່າວ ແລະ ສອບຖາມໃນສິ່ງທີ່ບໍ່ເຂົ້າໃຈ, ເພື່ອທີ່ຈະໄດ້ມີຄວາມເຂົ້າໃຈຢ່າງແຈ່ມແຈ້ງ. ເມື່ອລາວຂຶ້ນຂີ່ພາຫະນະບໍ່ວ່າຈະເປັນສັດ, ລົດຍົນ, ເຮືອບິນ ຫຼື ພາຫະນະອື່ນໆ, ສົມຄວນໃຫ້ລາວກ່າວພຣະນາມຂອງອັລລໍຫ໌ ແລະ ສັນລະເສີນພຣະອົງ, ຈາກນັ້ນໃຫ້ກ່າວຕັກບີຣສາມເທື່ອ, ແລ້ວກ່າວວ່າ:

﴿...سُبْحَانَ الَّذِى سَخَّرَ لَنَا هَذَا وَمَا كُنَّا لَهُ مُقْرِنِينَ ﴿١٣﴾ وَإِنَّا إِلَى رَبِّنَا لَمُنْقَلِبُونَ ﴿١٤﴾﴾

(ສຸບຮານັລ ລະຊີ ຊາກຄໍລະນາ ຮາຊາ ວະມາກຸນນາລະຮຸ ມຸກກໍຣີນີນ) 13

(ວະອິນນາ ອີລາ ຣອບບິນາ ລະມຸນ ກໍລິບູນ) 14

[ອັຊ-ຊຸກຣຸຟ: 13-14].

«اللَّهُمَّ إِنِّي أَسْأَلُكَ فِي سَفَرِي هَذَا البِرَّ وَالتَّقْوَى، وَمِنَ العَمَلِ مَا تَرْضَى، اللَّهُمَّ هَوِّنْ عَلَيْنَا سَفَرَنَا هَذَا، وَاطْوِ عَنَّا بُعْدَهُ، اللَّهُمَّ أَنْتَ الصَّاحِبُ فِي السَّفَرِ، وَالخَلِيفَةُ فِي الأَهْلِ، اللَّهُمَّ إِنِّي أَعُوذُ بِكَ مِنْ وَعْثَاءِ السَّفَرِ، وَكَآبَةِ المَنْظَرِ، وَسُوءِ المُنْقَلَبِ فِي المَالِ وَالأَهْلِ».

«ອັລລໍຮຸມມະ ອິນນີ ອັສອະລຸກະ ຟີ ສະຟາຣີ ຮາຊາ ບີລ ບີຣ

ອໍ ວັດຕັກວາ, ວະມີນັລອະມາລີ ມາຕັຮດໍ, ອັລລໍຮຸມມະ ເຫົາວິບ ອະໄລນາ ສະຟາອໍນາ ຮາຊາ, ວະຕໍວະ ອັນນາ ບົວະດະຫົ, ອັລລໍຮຸມມະ ອັນຕະ ສໍຮີບ ພີ້ສະພັຮ, ວັລຄໍລີ ພະຕຸ ພີອະຫ໌ລີ, ອັລລໍຮຸມມະ ອິນນີ ອະອູຊຸບິກະ ມີນ ວະອະສາ ອິສສະພັຮ, ວະກາອາບະຕິລ ມຸນຊໍຮ, ວະສູອິລ ມຸນກໍລິບ, ຟີລມາລີ ວະ ອະຫ໌ລີ»[1]

ເນື່ອງຈາກຄວາມຊໍເຮັຍຫ໌ຂອງສິ່ງດັ່ງກ່າວຈາກທ່ານນະບີ ﷺ, ບັນທຶກໂດຍທ່ານມຸສລິມ ຈາກຫະດີຊຂອງທ່ານ ອິບນຸ ອຸມັຮ ຣໍດີຍັລລໍຮຸ ອັນຮຸມາ.

ແລະ ໃຫ້ເພີ່ມພູນການລໍາລຶກ, ການຂໍອະໄພໂທດ, ການຂໍດຸອາຕໍ່ອັລລໍຮ໌ ຊຸບຮານະຮູ ວະຕະອາລາ, ການສະແດງຄວາມຕໍ່າຕ້ອຍຖ່ອມຕົນຕໍ່ພຣະອົງ, ການອ່ານອັລກູຣອານ ແລະ ການພິຈາລະນາໄຕ່ຕອງຄວາມໝາຍຂອງມັນ ໃຫ້ຫຼາຍໆ ໃນຂະນະທີ່ເດີນທາງ, ໃຫ້ຮັກສາການລະຫມາດຕ່າງໆໃນຈະມາອະຫ໌, ແລະ ໃຫ້ປົກປ້ອງລີ້ນຂອງລາວຈາກການເວົ້າຫຼາຍໃນເລື່ອງທີ່ບໍ່ມີສາລະ, ການເວົ້າໃນສິ່ງທີ່ບໍ່ແມ່ນເລື່ອງຂອງຕົນ, ການເວົ້າຍອກລໍ້ເກີນຂອບເຂດ, ການເວົ້າຕົວະ, ການນິນທາລັບຫຼັງ, ການຍຸຍົງສົ່ງເສີມ, ແລະ ການເຍາະເຍີ້ຍໝູ່ຄູ່ຂອງລາວ ແລະ ຜູ້ອື່ນໆ ທີ່ເປັນພີ່ນ້ອງມຸສລິມ.

ລາວຄວນເຮັດຄວາມດີຕໍ່ໝູ່ເພື່ອນຂອງຕົນ, ລະເວັ້ນຈາກການທໍາຮ້າຍພວກເຂົາ, ແລະ ສັ່ງໃຊ້ພວກເຂົາໃຫ້ເຮັດຄວາມດີ ແລະ ຫ້າມປາມພວກເຂົາຈາກຄວາມຊົ່ວ ດ້ວຍປັນຍາຫຼັກແຫຼມ ແລະ ຄໍາຕັກເຕືອນທີ່ດີງາມ ຕາມຄວາມສາມາດ.

---

[1] ບັນທຶກໂດຍມຸສລິມ, ເລກທີ່ (1342).

## ບົດວ່າດ້ວຍ

## ສິ່ງທີ່ຜູ້ປະກອບພິທີຮັຈຕ້ອງປະຕິບັດ ເມື່ອເດີນທາງໄປຮອດເຂດ ມີກ໊ອດ

ເມື່ອໄປເຖິງມີກ໊ອດ, ສົມຄວນໃຫ້ເຂົ້າອາບນ້ຳ ແລະ ໃສ່ນ້ຳຫອມ; ເພາະມີລາຍງານວ່າ ທ່ານນະບີ ﷺ ໄດ້ປົດເຄື່ອງນຸ່ງທີ່ຕັດຫຍິບອອກເມື່ອຄອງອິຫ໌ຣອມ ແລະ ໄດ້ອາບນ້ຳ, ແລະ ຕາມທີ່ມີຫຼັກຖານຢືນຢັ້ງ

ໃນຊໍເຮັຫ໌ທັງສອງຈາກທ່ານຍິງອາອິຊະຫ໌ ຣໍດິຍັລລໍຮຸ ອັນຮາ ໄດ້ກ່າວວ່າ:

«كُنْتُ أُطَيِّبُ رَسُولَ اللَّهِ ﷺ لِإِحْرَامِهِ قَبْلَ أَنْ يُحْرِمَ، وَلِحِلِّهِ قَبْلَ أَنْ يَطُوفَ بِالبَيْتِ».

«ຂ້ອຍເຄີຍທານ້ຳຫອມໃຫ້ທ່ານຣໍຊູລຂອງອັລລໍຮ໌ ເພື່ອການຄອງອິຫ໌ຣອມຂອງທ່ານ ກ່ອນທີ່ທ່ານຈະຄອງອິຫ໌ຣອມ, ແລະ ເພື່ອການອອກຈາກອິຫ໌ຣອມຂອງທ່ານ ກ່ອນທີ່ທ່ານຈະຕ໋ອາຟຮອບໄບຕຸລລໍຫ໌»[1], ແລະ ທ່ານໄດ້ສັ່ງ ທ່ານນາງອາອິຊະຫ໌, ເມື່ອນາງມີປະຈຳເດືອນຂະນະທີ່ໄດ້ຄອງອິຫ໌ຣອມເພື່ອທຳອຸມເຣາະຫ໌, ໃຫ້ອາບນ້ຳຊຳລະຮ່າງກາຍ ແລະ ຄອງອິຫ໌ຣອມເພື່ອທຳຫັຈຍ໌, ແລະ ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ສັ່ງໃຫ້ທ່ານນາງ ອັສມາອ໌ ບິນຕິ ອຸໄມສ໌ ເມື່ອຕອນທີ່ນາງເກີດລູກທີ່ຊຸລຫຸໄລຟະຫ໌ ວ່າໃຫ້ນາງອາບນ້ຳ, ເອົາຜ້າພັນທັບໄວ້, ແລະ ຄອງອິຫ໌ຣອມ[2], ສິ່ງດັ່ງກ່າວນີ້ຈຶ່ງຊີ້ໃຫ້ເຫັນວ່າ ແມ່ຍິງເມື່ອມາເຖິງເຂດມີກ໊ອຕ ໃນສະພາບທີ່ມີປະຈຳເດືອນ ຫຼື ມີເລືອດຫຼັງເກີດລູ

---

[1] ບັນທຶກໂດຍ ອັລບຸກໍຣີ: ເລກທີ່ (1539) ແລະ ມຸສລິມ: ເລກທີ່ (1189).

[2] ບັນທຶກໂດຍມຸສລິມ, ເລກທີ່ (1218).

ກ ກໍໃຫ້ນາງອາບນ້ຳ ແລະ ຊອງອີທ໌ຣອມພ້ອມກັບຄົນອື່ນໆ, ແລະ ໃຫ້ນາງປະຕິບັດທຸກຢ່າງທີ່ຜູ້ປະກອບພິທີຫັຈປະຕິບັດກັນ ຍົກເວັ້ນການຕໍວາຟຮອບໄບຕຸລລໍຫ໌, ດັ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລໍາ ໄດ້ສັ່ງທ່ານນາງ ອາອີຊະຫ໌ ແລະ ທ່ານນາງ ອັສມາອ໌ ໃຫ້ກະທໍາເຊັ່ນນັ້ນ.

ເປັນທີ່ສົ່ງເສີມສໍາລັບຜູ້ທີ່ຕ້ອງການຈະຄອງອີຫ໌ຣອມ ໃຫ້ກວດກາເບິ່ງຫນວດ, ເລັບ, ຂົນທີ່ລັບ ແລະ ຂົນຂີ້ແຮ້ຂອງຕົນ, ໂດຍໃຫ້ກໍາຈັດສິ່ງທີ່ຈໍາເປັນຕ້ອງກໍາຈັດອອກ ເພື່ອວ່າລາວຈະບໍ່ຈໍາເປັນຕ້ອງກໍາຈັດມັນຫຼັງຈາກຄອງອີຫ໌ຣອມແລ້ວ ເຊິ່ງເປັນສິ່ງທີ່ຕ້ອງຫ້າມສໍາລັບລາວ, ແລະ ເນື່ອງຈາກວ່າທ່ານນະບີ ﷺ ໄດ້ກໍານົດໃຫ້ຊາວມຸສລິມເອົາໃຈໃສ່ສິ່ງເຫຼົ່ານີ້ຕະຫຼອດເວລາ, ດັ່ງທີ່ໄດ້ຖືກຢືນຢັນໃນສອງສໍເຮັຍຫ໌, ຈາກທ່ານ ອະບີ ຮຸໄຣເຣາະຫ໌ ຣໍດິຍັລລໍຫ໌ ຮຸອັນຮຸ ເພິ່ນໄດ້ກ່າວວ່າ: ທ່ານຣໍຊູລຂອງອັລລໍຣ໌ ﷺ ໄດ້ກ່າວວ່າ:

«الفِطْرَةُ خَمْسٌ: الخِتَانُ، وَالِاسْتِحْدَادُ، وَقَصُّ الشَّارِبِ، وَقَلْمُ الأَظْفَارِ، وَنَتْفُ الإِبْطِ».

«ການປະຕິບັດຕາມທໍາມະຊາດດັ້ງເດີມມີ ຫ້າ ປະການຄື: ການຂິຕານ, ການໂກນຂົນທີ່ລັບ, ການຕັດຫນວດ, ການຕັດເລັບ, ແລະ ການຖອນຂົນຂີ້ແຮ້»[1].

ແລະ ໃນຊໍເຮັຍມຸສລິມ, ຈາກທ່ານອະນັສ ຣໍດິຍັລລໍຮຸ ອັນຮຸ ກ່າວວ່າ:

«وَقَّتَ لَنَا فِي قَصِّ الشَّارِبِ، وَقَلْمِ الأَظْفَارِ، وَنَتْفِ الإِبْطِ، وَحَلْقِ العَانَةِ: أَنْ لَا

---

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (5891) ແລະ ມຸສລິມ, ເລກທີ່ (257).

نَتْرُكَ ذَلِكَ أَكْثَرَ مِنْ أَرْبَعِينَ لَيْلَةً».

«ໄດ້ມີການກຳນົດເວລາໃຫ້ແກ່ພວກເຮົາໃນການຕັດຫນວດ, ການຕັດເລັບ, ການຖອນຂົນຂີ້ແຮ້, ແລະ ການໂກນຂົນຈຸດລັບ: ວ່າບໍ່ໃຫ້ພວກເຮົາປະສິ່ງດັ່ງກ່າວໄວ້ເກີນກວ່າ 40 ຄືນ»[1].

ແລະ ອັນ-ນາຊາອີ ໄດ້ລາຍງານໄວ້ດ້ວຍສຳນວນວ່າ:

«وَقَّتَ لَنَا رَسُولُ اللَّهِ ﷺ».

«ທ່ານລໍຊູລຂອງອັລລໍຮ໌ ﷺ ໄດ້ກຳນົດເວລາໄວ້ໃຫ້ແກ່ພວກເຮົາ»[2], ແລະ ບັນທຶກໂດຍ ທ່ານອະຫ໌ມັດ, ທ່ານອາບູດາວູດ, ແລະ ຕິຣມີຊີ ດ້ວຍສຳນວນຂອງອັນ-ນະຊາອີ. ສ່ວນຫົວແລ້ວ, ແມ່ນບໍ່ຖືກບັນຍັດໃຫ້ເອົາສິ່ງໃດອອກຈາກມັນໃນຂະນະຄອງອິຫ໌ຣອມ, ທັງຜູ້ຊາຍ ແລະ ແມ່ຍິງ.

ສ່ວນຫນວດເຄົານັ້ນ, ຫ້າມໂກນ ຫຼື ຕັດອອກບາງສ່ວນໃນທຸກເວລາ, ແຕ່ຈຳເປັນຕ້ອງປ່ອຍໃຫ້ມັນຍາວ ແລະ ດົກຫນາ ຕາມທີ່ມີການຢືນຢັນໃນປຶ້ມສໍເຮັຍຫ໌ທັງສອງ, ຈາກທ່ານ ອິບນຸ ອຸມັຣ ໄດ້ກ່າວວ່າ: ທ່ານຣໍສຸລຂອງອັນລໍຮ໌ ﷺ ໄດ້ກ່າວວ່າ:

«خَالِفُوا الْمُشْرِكِينَ، وَفِّرُوا اللِّحَى، وَأَحْفُوا الشَّوَارِبَ».

«ຈົ່ງປະຕິບັດໃຫ້ແຕກຕ່າງຈາກບັນດາຜູ້ຕັ້ງພາຄີ, ຈົ່ງໄວ້ເຄົາ, ແລະ ຈົ່ງຕັດຫນວດ»[3]. ແລະ ອິຫມ່າມມຸສລິມໄດ້ນຳສະເຫນີໄວ້ໃນຕຳລາຫະດີຊສໍຮີຫ໌ຂອງທ່ານ, ເຊິ່ງເປັນລາຍງານຈາກທ່ານອາບູ ຮູຣອຍເຣາະຫ໌ ຣໍດີຢັລລໍອັນຮຸ ເລົ່າວ່າ: ທ່ານຣໍສູລຸລລໍຫ໌ ﷺ ກ່າວວ່າ:

---

[1] ບັນທຶກໂດຍມຸສລິມ, ເລກທີ່ (258).

[2] ບັນທຶກໂດຍ ອັນນະສາອີ, ເລກທີ່ (14).

[3] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (2892) ແລະ ມຸສລິມ, ເລກທີ່ (259).

«جُزُّوا الشَّوَارِبَ، وَأَرْخُوا اللِّحَى، خَالِفُوا المَجُوسَ».

«ຈົ່ງຕັດຫນວດ, ແລະ ໄວ້ເຄົາ, ຈົ່ງແຕກຕ່າງຈາກຊາວມະຈູສ»[1].

ແລະ ແທ້ຈິງຄວາມຫາຍະນະໄດ້ເກີດຂຶ້ນຢ່າງໃຫຍ່ຫລວງໃນຍຸກນີ້ ຍ້ອນການຜ່າຝືນຂອງຜູ້ຄົນຈຳນວນຫຼາຍຕໍ່ຊຸນນະຫ໌ນີ້ ແລະ ການຕໍ່ຕ້ານຂອງພວກເຂົາຕໍ່ການໄວ້ຫນວດເຄົາ, ແລະ ຄວາມພໍໃຈຂອງພວກເຂົາໃນການຮຽນແບບບັນດາຜູ້ປະຕິເສດສັດທາ ແລະ ເພດຍິງ, ໂດຍສະເພາະຢ່າງຍິ່ງບັນດາຜູ້ທີ່ອ້າງຕົນວ່າເປັນນັກວິຊາການ ແລະ ຜູ້ສອນ, ດັ່ງນັ້ນເຮົາຈຶ່ງຂໍກ່າວວ່າ "ອິນນາລິລລາຮິ ວະອິນນາ ອິໄລຮິ ຣໍຈິອູນ" ແທ້ຈິງເຮົາເປັນກຳມະສິດຂອງອັລລໍຫ໌ ແລະ ແທ້ຈິງເຮົານັ້ນຕ້ອງກັບໄປສູ່ພຣະອົງ, ແລະ ເຮົາຂໍຕໍ່ອັລລໍຫ໌ ໃຫ້ລິງໂປດນຳພາພວກເຮົາ ແລະ ບັນດາມຸສລິມທັງຫຼາຍ ໄປສູ່ການປະຕິບັດຕາມຊຸນນະຫ໌ ແລະ ການຍຶດໝັ້ນໃນມັນ, ແລະ ການຮຽກຮ້ອງເຊີນຊວນໄປສູ່ມັນ, ເຖິງແມ່ນວ່າຄົນສ່ວນໃຫຍ່ຈະຫັນເຫອອກຈາກມັນກໍຕາມ, ແລະ ອັລລໍຫ໌ນັ້ນເປັນຜູ້ທີ່ພຽງພໍແລ້ວສຳລັບພວກເຮົາ ແລະ ເປັນຜູ້ລິງຄຸ້ມຄອງທີ່ດີເລີດທີ່ສຸດ, ແລະ ບໍ່ມີອຳນາດແລະກຳລັງໃດໆ ເວັ້ນແຕ່ດ້ວຍການຊ່ວຍເຫລືອຂອງອັລລໍຫ໌ ຜູ້ລິງສູງສົ່ງ, ຜູ້ລິງຍິ່ງໃຫຍ່ທີ່ສຸດ.

ຈາກນັ້ນ ຜູ້ຊາຍໃຫ້ສວມໃສ່ຜ້າອິຊາຣ ແລະ ຜ້າຣິດາ, ແລະ ສົມຄວນໃຫ້ເປັນສີຂາວທີ່ສະອາດ, ແລະ ສົມຄວນທີ່ຈະຄອງອິຫ໌ຣອມພ້ອມກັບໃສ່ເກີບແຕະ; ດັ່ງຄຳກ່າວຂອງ ທ່ານນະບີ ຊໍລັລລໍຮຸ ອະໄລຮິ ອະສັລລັມ:

---

[1] ບັນທຶກໂດຍມຸສລິມ, ເລກທີ່ (260).

«وَلْيُحْرِمْ أَحَدُكُمْ فِي إِزَارٍ وَرِدَاءٍ وَنَعْلَيْنِ، فَإِنْ لَمْ يَجِدْ نَعْلَيْنِ فَلْيَلْبَسْ خُفَّيْنِ وَلْيَقْطَعْهُمَا حَتَّى يَكُونَا أَسْفَلَ مِنَ الكَعْبَيْنِ».

«ແລະ ໃຫ້ຄົນໃດຄົນໜຶ່ງໃນພວກທ່ານຄອງອິຫ໌ຣອມດ້ວຍຜ້າອິຊາຣ, ຜ້າຣິດາ ແລະ ເກີບແຕະ, ຖ້າຫາກລາວຫາເກີບແຕະບໍ່ໄດ້ ກໍ່ໃຫ້ລາວສ່ວມໃສ່ຖົງຕີນ (ຄຸຟ) ແລະ ໃຫ້ລາວຕັດມັນທັງສອງອອກ ຈົນກ່ວາພວກມັນຈະຢູ່ຕ່ຳກວ່າຕາຕຸ່ມທັງສອງ»[1] ບັນທຶກໂດຍທ່ານອີມ່າມອະຫ໌ມັດ ຂໍອັລລໍຫ໌ຊົງເມດຕາທ່ານ.

ສ່ວນແມ່ຍິງ, ເປັນທີ່ອະນຸຍາດໃຫ້ນາງຄອງອິຫ໌ຣອມໃນເຄື່ອງນຸ່ງຕາມທີ່ນາງປະສົງ ບໍ່ວ່າຈະເປັນສີດຳ, ສີຂຽວ ຫຼື ສີອື່ນໆ, ພ້ອມກັບລະວັງບໍ່ໃຫ້ແຕ່ງກາຍຄ້າຍຄືຜູ້ຊາຍ, ແຕ່ບໍ່ໃຫ້ນາງໃສ່ຜ້າຄຸມໜ້າ ແລະ ຖົງມື ໃນຂະນະທີ່ນາງຄອງອິຫ໌ຣອມ, ແຕ່ໃຫ້ນາງປົກປິດໃບໜ້າ ແລະ ມືທັງສອງຂອງນາງດ້ວຍສິ່ງອື່ນທີ່ບໍ່ແມ່ນຜ້າຄຸມໜ້າ ແລະ ຖົງມື; ເພາະວ່າທ່ານນະບີ ໄດ້ຫ້າມແມ່ຍິງທີ່ຄອງອິຫ໌ຣອມບໍ່ໃຫ້ໃສ່ຜ້າຄຸມໜ້າ ແລະ ຖົງມື. ສ່ວນການທີ່ຄົນທົ່ວໄປບາງສ່ວນໄດ້ກຳນົດສະເພາະວ່າການຄອງອິຫ໌ຣອມຂອງແມ່ຍິງຕ້ອງເປັນສີຂຽວ ຫຼື ສີດຳໂດຍບໍ່ລວມສີອື່ນນັ້ນ, ບໍ່ມີຫຼັກຖານໃດໆ.

ຈາກນັ້ນ, ຫຼັງຈາກອາບນ້ຳເຮັດຄວາມສະອາດ ແລະ ສວມໃສ່ເຄື່ອງນຸ່ງອິຫ໌ຣອມສຳເລັດແລ້ວ, ກໍ່ໃຫ້ຕັ້ງໃຈ (ນຽດ) ດ້ວຍຫົວໃຈ ເຂົ້າສູ່ການປະກອບພິທີກຳທີ່ຕ້ອງການ ບໍ່ວ່າຈະເປັນການປະກອບພິທີຫັຈ ຫຼື ອຸມເຣາະຫ໌; ເນື່ອງຈາກຄຳກ່າວຂອງສາດສະດາ ﷺ ທີ່ວ່າ:

---

[1] ບັນທຶກໂດຍມຸສລິມ, ເລກທີ່ (1177).

«إِنَّمَا الأَعْمَالُ بِالنِّيَّاتِ، وَإِنَّمَا لِكُلِّ امْرِئٍ مَا نَوَى».

«ແທ້ຈິງທຸກໆ ການງານຂຶ້ນຢູ່ກັບການຕັ້ງເຈດຕະນາ, ແລະ ແທ້ຈິງທຸກໆ ການງານຈະໄດ້ຮັບຜົນຕາມທີ່ໄດ້ຕັ້ງເຈດຕະນາໄວ້»[1].

ແລະ ຖືກບັນຍັດໃຫ້ລາວກ່າວອອກສຽງຕາມທີ່ຕັ້ງໃຈໄວ້, ຫາກການຕັ້ງໃຈຂອງລາວຄືການເຮັດອຸມເຣາະຫ໌ ກໍໃຫ້ກ່າວວ່າ: "ລັບໄບກະ ອຸມເຣາະຕັນ" ຫຼື "ອັລລໍຮຸມມາ ລັບໄບກະ ອຸມເຣາະຕັນ", ແລະ ຫາກການຕັ້ງໃຈຂອງລາວຄືການເຮັດຫັຈ ກໍໃຫ້ກ່າວວ່າ: "ລັບໄບກະ ຫັຈຈັນ" ຫຼື "ອັລລໍຮຸມມາ ລັບໄບກະ ຫັຈຈັນ" ; ເພາະທ່ານນະບີ ﷺ ໄດ້ປະຕິບັດເຊັ່ນນັ້ນ, ແລະ ຫາກຕັ້ງໃຈຈະທຳທັງສອງຢ່າງພ້ອມກັນ ກໍໃຫ້ກ່າວຕັລບີຍະຫ໌ວ່າ: "ອັລລໍຮຸມມາ ລັບໄບກະ ອຸມເຣາະຕັນ ວະ ຫັຈຈັນ", ແລະ ທີ່ດີທີ່ສຸດນັ້ນແມ່ນການກ່າວອອກສຽງດັ່ງກ່າວ ຫລັງຈາກທີ່ຂຶ້ນພາຫະນະປະຈຳທີ່ຮຽບຮ້ອຍແລ້ວ ບໍ່ວ່າຈະເປັນສັດ, ລົດ ຫຼື ພາຫະນະ ອື່ນໆກໍ່ຕາມ; ເພາະວ່າທ່ານນະບີ ﷺ ເພິ່ນຈະເລີ່ມກ່າວຕັລບີຍະຫ໌ ກໍຕໍ່ເມື່ອເພິ່ນໄດ້ຂຶ້ນປະທັບເທິງສັດພາຫະນະຂອງເພິ່ນຮຽບຮ້ອຍແລ້ວ ແລະ ມັນເລີ່ມອອກເດີນທາງຈາກຈຸດ ມີກ໊ອດ, ນີ້ຄືທັດສະນະທີ່ຖືກຕ້ອງທີ່ສຸດໃນບັນດາທັດສະນະຂອງບັນດານັກວິຊາການ.

ແລະ ບໍ່ໄດ້ຖືກບັນຍັດໃຫ້ລາວກ່າວອອກສຽງໃນສິ່ງທີ່ໄດ້ຕັ້ງເຈດຕະນາໄວ້, ຍົກເວັ້ນໃນການຄອງອິຫ໌ຣອມເທົ່ານັ້ນ, ເນື່ອງຈາກມີລາຍງານມາຈາກທ່ານນະບີ ﷺ.

ສ່ວນການລະຫມາດ, ການຕໍວາຟ ແລະ ການງານອື່ນໆ ສົມ

[1] ບັນທຶກໂດຍ ອັລບຸກໍອີ, ເລກທີ່ (1) ແລະ ມຸສລິມ, ເລກທີ່ (1907).

ຄວນທີ່ຈະບໍ່ກ່າວເຈດຕະນາອອກມາເປັນຄຳເວົ້າໃນສິ່ງໃດໆເຫລົ່ານັ້ນ, ດັ່ງນັ້ນ ລາວຈະບໍ່ກ່າວວ່າ: ຂ້າພະເຈົ້າຕັ້ງເຈດຕະນາທີ່ຈະລະຫມາດສິ່ງນັ້ນສິ່ງນີ້, ແລະ ບໍ່ກ່າວວ່າ: ຂ້າພະເຈົ້າຕັ້ງເຈດຕະນາທີ່ຈະຕ໋ວາຟເຊັ່ນນັ້ນ, ຫາກແຕ່ການກ່າວເຊັ່ນນັ້ນອອກມາເປັນຄຳເວົ້າແມ່ນສ່ວນໜຶ່ງຂອງບັນດາບິດອະຫ໌ທີ່ຖືກປະດິດຂຶ້ນໃໝ່, ແລະ ການກ່າວອອກສຽງດັ່ງນັ້ນຍິ່ງເປັນສິ່ງທີ່ໜ້າລັງກຽດ ແລະ ເປັນບາບທີ່ໜັກໜ່ວງກວ່າ. ຫາກວ່າການກ່າວເຈດຕະນາອອກມາເປັນຄຳເວົ້າໄດ້ຖືກບັນຍັດໄວ້ໃນສາສະໜາແລ້ວ, ແນ່ນອນວ່າ ທ່ານຣໍຊູລ ﷺ ກໍຈະຊີ້ແຈງມັນ ແລະ ເຮັດໃຫ້ມັນແຈ່ມແຈ້ງແກ່ປະຊາຊາດດ້ວຍການກະທຳ ຫຼື ຄຳເວົ້າຂອງເພິ່ນ, ແລະ ບັນດາສະລັຟ ອັສ-ຊໍລິຫ໌ ກໍຈະລ່ວງໜ້າໄປປະຕິບັດມັນກ່ອນແລ້ວ.

ເມື່ອສິ່ງນັ້ນບໍ່ໄດ້ຖືກລາຍງານຈາກທ່ານນະບີ ﷺ, ແລະ ຈາກບັນດາຊໍຮາບະຫ໌ຂອງທ່ານ ຣໍດິຍັລລໍຮຸ ອັນຮູມ , ຈຶ່ງເປັນທີ່ຮູ້ກັນວ່າມັນເປັນບິດອະຫ໌. ແລະ ທ່ານນະບີ ﷺ ໄດ້ກ່າວວ່າ:

«وَشَرُّ الأُمُورِ مُحْدَثَاتُهَا، وَكُلُّ بِدْعَةٍ ضَلَالَةٌ».

«ແລະ ບັນດາກິດຈະການທີ່ຊົ່ວຮ້າຍທີ່ສຸດ ຄືສິ່ງທີ່ຖືກອຸປະໂຫຼກຂຶ້ນມາໃໝ່, ແລະ ທຸກ ໆ ບິດອະຫ໌ເປັນການຫລົງຜິດ»[1] ບັນທຶກໂດຍທ່ານມຸສລິມ ໃນຊໍຮີຫ໌ຂອງທ່ານ, ແລະ ທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະຊັລລໍາ ໄດ້ກ່າວວ່າ:

«مَنْ أَحْدَثَ فِي أَمْرِنَا هَذَا مَا لَيْسَ مِنْهُ فَهُوَ رَدٌّ».

"ໃຜກໍ່ຕາມທີ່ເຮັດສິ່ງອື່ນໃນກິດຈະການສາສະໜາຂອງເຮົາ ເຊິ່ງສິ່ງນັ້ນ ເຮົາບໍ່ໄດ້ສັ່ງໃຊ້ໃຫ້ເຮັດ (ບໍ່ມີແບບຢ່າງ) ດັ່ງນັ້ນສິ່

[1] ບັນທຶກໂດຍມຸສລິມ, ເລກທີ່ (867).

ງທີ່ເຮັດຂຶ້ນມາໃໝ່ນັ້ນຍ່ອມຖືກປະຕິເສດ (ບໍ່ຖືກຕອບຮັບຈາກອັລລໍຫ໌)"[1] ລາຍງານໂດຍທ່ານບຸກຄໍຣີ ແລະ ທ່ານມຸສລິມ. ແລະ ໃນລາຍງານຫະດີສ ຂອງທ່ານມຸສລິມ:

«مَنْ عَمِلَ عَمَلًا لَيْسَ عَلَيْهِ أَمْرُنَا فَهُوَ رَدٌّ».

«ໃຜກໍ່ຕາມທີ່ເຮັດສິ່ງອື່ນໃນກິດຈະການສາດສະໜາທີ່ເຮົາບໍ່ໄດ້ສັ່ງໃຊ້ ດັ່ງນັ້ນກິດຈະການນັ້ນຈະຖືກປະຕິເສດບໍ່ຕອບຮັບ»[2].

## ບົດວ່າດ້ວຍ

## ວ່າດ້ວຍ ມີກ໊ອດ ດ້ານສະຖານທີ່ ແລະ ການກຳໜົດຂອງມັນ

ມີກ໊ອດ ມີຢູ່ຫ້າສະຖານທີ່:

ໜຶ່ງ: ຊຸລ-ຮຸໄລຟະຫ໌, ເຊິ່ງແມ່ນມີກ໊ອດຂອງຊາວມະດີນະຫ໌ ແລະ ໃນປັດຈຸບັນຄົນທົ່ວໄປເອີ້ນກັນວ່າ: ອັບ ຍາຣ ອະລີ.

ສອງ: ອັລ-ຈຸຫ໌ຟະຮ໌, ເຊິ່ງເປັນມີກ໊ອດຂອງຊາວຊາມ (ຊີເຣຍ), ເປັນໝູ່ບ້ານຮ້າງທີ່ຕັ້ງຢູ່ໃກ້ກັບເມືອງຣໍບິຄ໌, ແລະ ປັດຈຸບັນນີ້ຜູ້ຄົນຈະຄອງອິຫ໌ຣອມຈາກເມືອງຣໍບິຄ໌, ແລະ ຜູ້ໃດທີ່ຄອງອິຫ໌ຣອມຈາກເມືອງຣໍບິຄ໌ ຍ່ອມຖືວ່າຜູ້ນັ້ນໄດ້ຄອງອິຫ໌ຣອມຈາກມີກ໊ອດ; ເພາະວ່າເມືອງຣໍບິຄ໌ຢູ່ກ່ອນໜ້າມັນພຽງເລັກໜ້ອຍ.

ສາມ: ກ໊ອຣນຸລ ມະນາຊິລ, ເປັນມີກ໊ອດຂອງຊາວນັຈດີ, ເຊິ່ງໃນປັດຈຸບັນມີຊື່ວ່າ: ອັສ-ໄຊລ໌.

ສີ: ຍະລຳ-ລຳ, ເຊິ່ງເປັນມີກ໊ອດຂອງຊາວເຢເມນ.

---

[1] ບັນທຶກໂດຍ ອັລບຸກຄໍຣີ, ເລກທີ່ (2697) ແລະ ມຸສລິມ, ເລກທີ່ (1718).

[2] ບັນທຶກໂດຍ ອັລບຸກຄໍຣີ, ເລກທີ່ (2550) ແລະ ມຸສລິມ, ເລກທີ່ (1718).

ຫ້າ: ຊາຕຸ ອິຣກ໌, ມີກ໊ອດຂອງຊາວອີຣັກ.

ແລະ ມະວາກີດ (ບັນດາມີກ໊ອດ) ເຫຼົ່ານີ້ ທ່ານນະບີ ﷺ ໄດ້ກຳນົດໄວ້ສຳລັບຜູ້ທີ່ພວກເຮົາໄດ້ກ່າວມາ ແລະ ຜູ້ອື່ນໆ ທີ່ຜ່ານເຂດດັ່ງກ່າວ ທີ່ຕັ້ງໃຈຈະປະກອບພິທີຮັຈ ຫຼື ອຸມເຣາະຫ໌.

ແລະ ເປັນຂໍ້ບັງຄັບສຳລັບຜູ້ທີ່ຜ່ານມັນໄປ ວ່າຈະຕ້ອງຄອງອິຫ໌ຣອມຈາກບ່ອນນັ້ນ, ແລະ ຖືກຫ້າມບໍ່ໃຫ້ເດີນທາງຜ່ານມັນໄປໂດຍປາດສະຈາກການຄອງອິຫ໌ຣອມ ຖ້າຫາກລາວມີເຈດຕະນາຈະໄປຍັງມັກກະຫ໌ ເພື່ອປະກອບພິທີຮັຈ ຫຼື ອຸມເຣາະຫ໌, ບໍ່ວ່າການເດີນທາງຜ່ານຂອງລາວຈະເປັນທາງບົກ ຫຼື ທາງອາກາດກໍຕາມ; ເນື່ອງຈາກຄວາມໝາຍທີ່ຄອບຄຸມໃນຄຳກ່າວຂອງທ່ານນະບີ ﷺ ເມື່ອເພິ່ນໄດ້ກຳນົດເຂດມີກ໊ອດເຫຼົ່ານີ້ວ່າ:

«هُنَّ لَهُنَّ، وَلِمَنْ أَتَى عَلَيْهِنَّ مِنْ غَيْرِ أَهْلِهِنَّ، مِمَّنْ أَرَادَ الحَجَّ وَالعُمْرَةَ».

"ສະຖານທີ່ເຫຼົ່ານັ້ນແມ່ນສຳລັບຊາວເມືອງຂອງມັນ, ແລະ ສຳລັບຜູ້ທີ່ເດີນທາງຜ່ານມາທີ່ບໍ່ແມ່ນຊາວເມືອງຂອງມັນ, ຈາກບັນດາຜູ້ທີ່ຕັ້ງໃຈຈະເຮັດຫັຈ ແລະ ອຸມເຣາະຣ໌"[1].

ສິ່ງທີ່ຖືກກຳນົດໄວ້ໃນບົດບັນຍັດສຳຫຼັບຜູ້ທີ່ເດີນທາງໄປຍັງນະຄອນມັກກະຫ໌ໂດຍທາງເຮືອບິນ (ຍົນ) ດ້ວຍຈຸດປະສົງເພື່ອປະກອບພິທີຮັຈ ຫຼື ອຸມເຣາະຫ໌ນັ້ນ ແມ່ນໃຫ້ລາວກະກຽມຕົວດ້ວຍການອາບນ້ຳຊຳລະຮ່າງກາຍ ແລະ ອື່ນໆ ທີ່ຄ້າຍຄືກັນ ກ່ອນທີ່ຈະຂຶ້ນຍົນ, ເມື່ອເດີນທາງເຂົ້າໃກ້ເຂດມີກ໊ອດແລ້ວ ກໍໃຫ້ລາວນຸ່ງຜ້າອິຫ໌ຣອມ ແລະ ຜ້າຄຸມຂອງລາວ ຈາກນັ້ນກໍໃຫ້ເຂົ້າສູ່ສະພາບອິຫ໌ຣອມເພື່ອປະກອບພິທີອຸມເຣາະຫ໌ ຖ້າຫາກວ່າເວລາມີພຽງພໍ, ແລະ ຖ້າຫາກວ່າເວລາມີຈຳກັດ ກໍໃຫ້ເຂົ້າສູ່ສະພາ

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1524) ແລະ ມຸສລິມ, ເລກທີ່ (1181).

ບອິຫ໌ຣອມເພື່ອປະກອບພິທີຮັຈ, ແລະ ຖ້າຫາກລາວໄດ້ນຸ່ງຜ້າ ແລະ ຜ້າຄຸມຂອງລາວກ່ອນຂຶ້ນເຮືອບິນ ຫຼື ກ່ອນຈະເຂົ້າໃກ້ເຂດ ມີກ໊ອດ ກໍບໍ່ເປັນຫຍັງ, ແຕ່ວ່າບໍ່ໃຫ້ຕັ້ງເຈດຕະນາເຂົ້າສູ່ການປະກອບພິທີກໍາ ແລະ ບໍ່ໃຫ້ກ່າວຕັລບີຍະຮ໌ ຍົກເວັ້ນແຕ່ເມື່ອຜ່ານຈຸດທີ່ກົງກັບ ມີກ໊ອດ ຫຼື ເຂົ້າໃກ້ເຂດນັ້ນ; ເພາະວ່າ ທ່ານນະບີ ﷺ ບໍ່ໄດ້ຄອງອິຫ໌ຣອມ ນອກຈາກຈະເລີ່ມຈາກເຂດ ມີກ໊ອດ ເທົ່ານັ້ນ, ແລະ ສິ່ງທີ່ເປັນວາຈິບສໍາລັບປະຊາຊາດອິດສະລາມກໍ່ຄື ການເອົາແບບຢ່າງຕາມທ່ານນະບີ ﷺ ໃນເລື່ອງດັ່ງກ່າວ ເຊັ່ນດຽວກັບໃນເລື່ອງອື່ນໆ ຂອງສາສະໜາ; ດັ່ງຄໍາດໍາລັດຂອງພຣະອົງອັລລໍຮ໌ ສຸບຮານະຮູ ວະຕະອາລາ ທີ່ວ່າ:

﴿لَقَدْ كَانَ لَكُمْ فِي رَسُولِ اللَّهِ أُسْوَةٌ حَسَنَةٌ...﴾

(ໂດຍແນ່ນອນ ໃນຣໍຊູລຂອງອັລລໍຫ໌ມີແບບຢ່າງອັນດີງາມສໍາຫຼັບພວກເຈົ້າແລ້ວ...) [ອັລ-ອະຫ໌ຊາບ: 21]. ແລະ ດັ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວໄວ້ໃນຮັຈຍ໌ອໍາລາວ່າ:

«خُذُوا عَنِّي مَنَاسِكَكُمْ».

«ພວກທ່ານຈົ່ງຮັບ ຫຼື ຮຽນຮູ້ພິທີຫັຈຂອງພວກທ່ານຈາກຂ້ອຍ»[1].

ສ່ວນຜູ້ທີ່ເດີນທາງໄປຍັງມັກກະຫ໌ ແລະ ບໍ່ໄດ້ປະສົງຈະປະກອບພິທີຮັຈ ຫຼື ອຸມເຣາະຫ໌; ເຊັ່ນ: ພໍ່ຄ້າ, ຄົນຕັດໄມ້, ຜູ້ສົ່ງຂ່າວ ແລະ ອື່ນໆ, ກໍ່ບໍ່ຈໍາເປັນຕ້ອງຄອງອິຫ໌ຣອມ ເວັ້ນເສຍແຕ່ວ່າລາວປະສົງຈະເຮັດເຊັ່ນນັ້ນ; ເນື່ອງຈາກຄໍາກ່າວຂອງທ່ານນະບີ ຊັລລັລລໍຫຸ ອະໄລຮິ ວະສັລລັມ ໃນຫະດີຊທີ່ໄດ້ກ່າວມາກ່ອນ ເມື່

[1] ບັນທຶກໂດຍມຸສລິມ, ເລກທີ່ (1297).

ອທ່ານໄດ້ກ່າວເຖິງບັນດາມີກ໊ອດ:

«هُنَّ لَهُنَّ، وَلِمَنْ أَتَى عَلَيْهِنَّ مِنْ غَيْرِ أَهْلِهِنَّ، مِمَّنْ أَرَادَ الحَجَّ وَالعُمْرَةَ».

"ສະຖານທີ່ກຳນົດເຫຼົ່ານັ້ນແມ່ນສຳລັບປະຊາຊົນໃນເຂດນັ້ນເອງ, ແລະ ສຳລັບຜູ້ອື່ນທີ່ບໍ່ແມ່ນຄົນໃນເຂດນັ້ນທີ່ເດີນທາງຜ່ານມາ, ຈາກບັນດາຜູ້ທີ່ຕັ້ງໃຈຈະເຮັດຫັຈຍ໌ ແລະ ອຸມເຣາະຮ໌"[1], ດັ່ງນັ້ນ ຈຶ່ງເຂົ້າໃຈໄດ້ວ່າ ຜູ້ໃດທີ່ຜ່ານມີກ໊ອດ ແລະ ບໍ່ໄດ້ປະສົງຈະປະກອບພິທີຮັຈ ຫຼື ອຸມເຣາະຫ໌, ກໍ່ບໍ່ຈຳເປັນຕ້ອງຄອງອິຫ໌ຣອມ.

ແລະ ນີ້ຄືຄວາມເມດຕາຂອງອັລລໍຫ໌ທີ່ມີຕໍ່ບ່າວຂອງພຣະອົງ ແລະ ເປັນການອຳນວຍຄວາມສະດວກໃຫ້ແກ່ພວກເຂົາ, ດັ່ງນັ້ນ ການສັນລະເສີນ ແລະ ການຂອບພຣະຄຸນທັງໝົດຈຶ່ງມີແດ່ພຣະອົງສຳລັບສິ່ງດັ່ງກ່າວ. ແລະ ສິ່ງທີ່ສະໜັບສະໜູນເລື່ອງນີ້ກໍຄື ເມື່ອທ່ານນະບີ ຊ໊ລລັລລໍຮຸ ອະໄລຮິ ວະຊັລລໍາ ໄດ້ເດີນທາງມາເຖິງເມືອງມັກກະຫ໌ໃນປີທີ່ພິຊິດເມືອງມັກກະຫ໌, ທ່ານບໍ່ໄດ້ຄອງອິຫ໌ຣອມ, ແຕ່ຫາກທ່ານໄດ້ເຂົ້າໄປໃນເມືອງໂດຍທີ່ເທິງສີສະຂອງທ່ານຍັງໃສ່ໝວກເຫຼັກຢູ່; ເນື່ອງຈາກວ່າໃນເວລານັ້ນທ່ານບໍ່ໄດ້ມີເຈດຕະນາທີ່ຈະປະກອບພິທີຮັຈຣ໌ ຫຼື ອຸມເຣາະຫ໌, ແຕ່ຈຸດປະສົງຂອງທ່ານແມ່ນເພື່ອພິຊິດເປີດເມືອງ ແລະ ກຳຈັດການຕັ້ງພາກີ (ຊີຣິກ) ທີ່ມີຢູ່ໃນນັ້ນອອກໄປ.

ສ່ວນຜູ້ທີ່ ບ່ອນຢູ່ອາໄສຂອງລາວຢູ່ໃກ້ກວ່າເຂດ ມີກ໊ອດ; ເຊັ່ນ ຊາວເມືອງຈິດດະຫ໌, ອຸມມຸສສະລໍາ, ບັຫ໌ເຣາະຫ໌, ອັຊຊະຣໍອິອ໌, ບາດັຣ, ມັສຕູເຣາະຫ໌ ແລະ ເມືອງອື່ນໆ ທີ່ຄ້າຍຄືກັນນີ້, ພວກເຂົາບໍ່ຈຳເປັນຕ້ອງເດີນທາງໄປຍັງມີກ໊ອດທັງຫ້າແຫ່ງທີ່ໄດ້

[1] ໄດ້ລະບຸທີ່ມາໄວ້ກ່ອນແລ້ວ.

ກ່າວມາຂ້າງເທິງ, ແຕ່ໃຫ້ຖືວ່າທີ່ຢູ່ອາໄສຂອງລາວນັ້ນຄືມີກົອດຂອງລາວເອງ, ໂດຍໃຫ້ລາວຄອງອິຫ໌ຣອມຈາກທີ່ນັ້ນຕາມທີ່ຕັ້ງໃຈ ບໍ່ວ່າຈະເປັນການປະກອບພິທີຫັຈ ຫຼື ອຸມເຣາະຫ໌, ແລະ ຖ້າຫາກລາວມີທີ່ຢູ່ອາໄສອີກແຫ່ງໜຶ່ງຢູ່ນອກເຂດມີກົອດ ລາວກໍສາມາດເລືອກໄດ້, ຫາກປະສົງກໍໃຫ້ຄອງອິຫ໌ຣອມຈາກມີກົອດ, ແລະ ຫາກປະສົງກໍໃຫ້ຄອງອິຫ໌ຣອມຈາກທີ່ຢູ່ອາໄສຂອງລາວເຊິ່ງຢູ່ໃກ້ກັບມັກກະຫ໌ກວ່າເຂດມີກົອດ; ທັງນີ້ກໍອີງຕາມຄໍາກ່າວໂດຍລວມຂອງທ່ານນະບີ ﷺ ໃນຫະດີຊຂອງອິບນີ ອັບບາສ ຣໍດິຍັລລໍຮຸ ອັນຮຸ ເມື່ອທ່ານໄດ້ກ່າວເຖິງເຂດມີກົອດຕ່າງໆ ທ່ານໄດ້ກ່າວວ່າ:

«فَمَنْ كَانَ دُونَهُنَّ، فَمُهَلُّهُ مِنْ أَهْلِهِ، وَكَذَلِكَ حَتَّى أَهْلُ مَكَّةَ يُهِلُّونَ مِنْ مَكَّةَ».

«ສ່ວນຜູ້ໃດທີ່ຢູ່ໃກ້ກວ່າ (ເຂດມີກົອດ), ກໍໃຫ້ຄອງອິຫ໌ຣອມ[1] ຈາກບ້ານຂອງລາວ, ແລະ ເຊັ່ນດຽວກັນ ຈົນກະທັ້ງຊາວມັກກະຫ໌ ກໍຄອງອິຫ໌ຣອມຈາກມັກກະຫ໌»[2] ບັນທຶກໂດຍ ບຸຄໍຣີ ແລະ ມຸສລິມ

ແຕ່ຜູ້ທີ່ປະສົງຈະເຮັດອຸມເຣາະຫ໌ ໃນຂະນະທີ່ລາວຢູ່ໃນເຂດຫະຣອມ ກໍ່ຈໍາເປັນຕ້ອງໄດ້ອອກໄປຍັງເຂດຫິລ ແລະ ຄອງອິຫ໌ຣອມເຮັດອຸມເຣາະຫ໌ຈາກທີ່ນັ້ນ; ເນື່ອງຈາກທ່ານນະບີ ﷺ ເມື່ອທ່ານນາງ ອາອີຊະຫ໌ ໄດ້ຂໍອະນຸຍາດຈາກທ່ານເພື່ອເຮັດອຸມເຣາະຫ໌, ທ່ານໄດ້ສັ່ງໃຫ້ອ້າຍຂອງນາງ ຄື ທ່ານ ອັບດຸລເຣາະມານ ໃຫ້ນໍາພານາງອອກໄປຍັງເຂດຫິລ ເພື່ອໃຫ້ນາງໄດ້ຄອງອິຫ໌ຣອມຈາກທີ່ນັ້ນ, ເຊິ່ງສິ່ງດັ່ງກ່າວນີ້ຊີ້ໃຫ້ເຫັນວ່າ ຜູ້ທີ່ເຮັດອຸມເຣາະຫ໌

1 ພະມຸຮັລລຸຮູ: ກ່າວຄື: ການກ່າວຄໍາ ຕັລບິຍະຫ໌ ຂອງລາວນັ້ນ ເລີ່ມຈາກສະຖານທີ່ ທີ່ລາວເລີ່ມເຂົ້າສູ່ສະພາບການຄອງອິຫ໌ຣອມ.

2 ສ່ວນໜຶ່ງຈາກຫະດີສອັນເກົ່າ.

ຈະບໍ່ຄອງອິຫ໌ຣອມເພື່ອເຮັດອຸມເຣາະຫ໌ຈາກເຂດຫະຣອມ, ແຕ່ຈະຕ້ອງຄອງອິຫ໌ຣອມຈາກເຂດຫິລ (ນອກເຂດຫະຣອມ).

ຫະດີສບົດນີ້ເປັນການຊີ້ສະເພາະ ຫະດີສຂອງອິບນຸ ອັບບາສທີ່ໄດ້ກ່າວຜ່ານມາ, ແລະ ເປັນການຊີ້ບອກເຖິງເຈດຕະນາໃນຄຳກ່າວຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລໍາ ທີ່ວ່າ:

«حَتَّى أَهْلُ مَكَّةَ يُهِلُّونَ مِنْ مَكَّةَ».

"ຈົນກວ່າຊາວມັກກະຫ໌ຈະເລີ່ມຄອງອິຫ໌ຣອມຈາກມັກກະຫ໌"[1]. ກໍ່ຄື ການຄອງອິຫ໌ຣອມເພື່ອປະກອບພິທີຫັຈ ບໍ່ແມ່ນເພື່ອອຸມເຣາະຫ໌, ເພາະຫາກວ່າການຄອງອິຫ໌ຣອມເພື່ອເຮັດອຸມເຣາະຫ໌ຈາກເຂດຫະຣອມເປັນທີ່ອະນຸຍາດແລ້ວ, ທ່ານນະບີກໍ່ຄົງຈະອະນຸຍາດໃຫ້ແກ່ທ່ານຍິງອາອີຊະຫ໌ ຣໍດີຍັລລໍຮຸ ອັນຮາ ໃນເລື່ອງດັ່ງກ່າວ ແລະ ຄົງຈະບໍ່ບັງຄັບໃຫ້ນາງຕ້ອງອອກໄປຍັງເຂດຫິລ, ແລະ ນີ້ກໍເປັນເລື່ອງທີ່ຊັດເຈນ, ແລະມັນກໍເປັນທັດສະນະຂອງບັນດານັກວິຊາການສ່ວນຫລາຍ ເຣາະຫ໌ມະຕຸລລໍຮີ ອະໄລຮິມ, ແລະເປັນສິ່ງທີ່ຮອບຄອບປອດໄພກວ່າສຳລັບຜູ້ສັດທາ; ເພາະໃນການປະຕິບັດເຊັ່ນນີ້ຖືເປັນການປະຕິບັດຕາມຫະດີສທັງສອງບົດໄປພ້ອມໆ ກັນ, ແລະ ອັລລໍຮ໌ ຄືຜູ້ຊີ້ງປະທານຄວາມສຳເລັດ.

ສ່ວນການກະທຳຂອງບາງຄົນ ທີ່ມັກຈະເຮັດອຸມເຣາະຫ໌ຫຼາຍຄັ້ງ ຫຼັງຈາກການປະກອບພິທີຮັຈ, ໂດຍເລີ່ມຈາກເຂດຕັນອີມ ຫຼື ຈຸຣະອໍນະຫ໌ ຫຼື ສະຖານທີ່ອື່ນໆ, ທັງໆ ທີ່ພວກເຂົາໄດ້ປະກອບພິທີອຸມເຣາະຫ໌ກ່ອນການປະກອບພິທີຮັຈແລ້ວ, ນັ້ນບໍ່ມີຫຼັກຖານໃດໆ ມາຢັ້ງຢືນເຖິງການອະນຸຍາດໃຫ້ກະທຳໄດ້, ແຕ່ທະວ່

[1] ທີ່ມາໄດ້ກ່າວໄວ້ຂ້າງຕົ້ນແລ້ວ.

າຫຼັກຖານຕ່າງໆ ຊີ້ໃຫ້ເຫັນວ່າສິ່ງທີ່ດີກວ່າຄືການລະເວັ້ນຈາກ
ມັນ; ເພາະວ່າທ່ານນະບີ ﷺ ແລະ ເຫຼົ່າສໍຫາບະຫ໌ຂອງທ່ານ (ຂໍອັ
ລລໍຮ໌ຊົງພໍພຣະໄທຕໍ່ພວກເຂົາ) ບໍ່ໄດ້ປະກອບພິທີອຸມເຣາະຫ໌
ຫຼັງຈາກທີ່ພວກເພິ່ນສໍາເລັດການປະກອບພິທີຮັຈແລ້ວ. ຫາກ
ແຕ່ທີ່ທ່ານນາງອາອີຊະຫ໌ ໄດ້ປະກອບພິທີອຸມເຣາະຫ໌ຈາກເຂດ
ຕັນອີມນັ້ນ; ກໍ່ແມ່ນຍ້ອນວ່ານາງບໍ່ໄດ້ປະກອບພິທີອຸມເຣາະຫ໌
ພ້ອມກັບຄົນອື່ນໆ ໃນເວລາທີ່ເດີນທາງເຂົ້ານະຄອນມັກກະຮ໌ ເ
ນື່ອງຈາກການມີເລືອດປະຈໍາເດືອນ, ນາງຈຶ່ງໄດ້ຂໍຈາກທ່ານນະ
ບີ ﷺ ທີ່ຈະຂໍເຮັດອຸມເຣາະຫ໌ ເພື່ອທົດແທນອຸມເຣາະຫ໌ຂອງນາ
ງທີ່ໄດ້ຄອງອີຫ໌ຣອມມາຈາກເຂດມີກ໊ອດ, ທ່ານນະບີ ﷺ ຈຶ່ງໄດ້ອ
ະນຸຍາດໃຫ້ນາງເຮັດເຊັ່ນນັ້ນ. ດ້ວຍເຫດນີ້ ນາງຈຶ່ງໄດ້ເຮັດອຸມເ
ຣາະຫ໌ຄົບທັງສອງຄັ້ງຄື: ອຸມເຣາະຫ໌ທີ່ເຮັດພ້ອມກັບການປະກ
ອບພິທີຮັຈຂອງນາງ, ແລະ ອຸມເຣາະຫ໌ທີ່ແຍກເຮັດຕ່າງຫາກ
ນີ້. ສະນັ້ນ, ຜູ້ໃດກໍ່ຕາມທີ່ຕົກຢູ່ໃນສະພາບດຽວກັນກັບທ່ານນ
າງອາອີຊະຫ໌ ກໍ່ຖືວ່າເປັນທີ່ອະນຸຍາດທີ່ຈະປະກອບພິທີອຸມເຣົາ
ະຫ໌ ຫຼັງຈາກທີ່ລາວສໍາເລັດການປະກອບພິທີຮັຈແລ້ວ; ເພື່ອເ
ປັນການປະຕິບັດຕາມຫຼັກຖານທັງໝົດ, ແລະ ເພື່ອເປັນການ
ຜ່ອນຜັນໃຫ້ແກ່ຊາວມຸສລິມ.

ແລະ ບໍ່ຕ້ອງສົງໄສເລີຍວ່າ ການທີ່ບັນດາຜູ້ປະກອບພິທີຮັຈ
ຫັນໄປສົນໃຈເຮັດອຸມເຣາະຫ໌ອີກຄັ້ງ ຫຼັງຈາກທີ່ພວກເຂົາສໍາເ
ລັດການປະກອບພິທີຮັຈແລ້ວ, ນອກເໜືອຈາກອຸມເຣາະຫ໌ທີ່
ພວກເຂົາໄດ້ເຂົ້າມານະຄອນມັກກະຮ໌ນັ້ນ, ເປັນການສ້າງຄວາ
ມລໍາບາກໃຫ້ແກ່ທຸກຄົນ, ແລະ ເປັນສາເຫດໃຫ້ເກີດຄວາມແ
ອອັດ ແລະ ອຸບັດຕິເຫດຕ່າງໆ, ພ້ອມທັງຍັງເປັນການກະທໍາທີ່
ຂັດກັບແນວທາງ ແລະ ແບບຢ່າງຂອງທ່ານນະບີ ﷺ, ແລະ ອັລ

ລ໌ຮ໌ ຄືຜູ້ຊົງປະທານຄວາມສຳເລັດ.

## ບົດວ່າດ້ວຍ
## ຂໍ້ຊີ້ຂາດກ່ຽວກັບຜູ້ທີ່ເດີນທາງໄປຮອດ ມີກ໊ອດ ນອກເໜືອຈາກເດືອນຕ່າງໆ ຂອງການປະກອບພິທີຫັຈ

ຈົ່ງຮູ້ໄວ້ວ່າ ຜູ້ທີ່ມາເຖິງ ມີກ໊ອດ ນັ້ນ, ກໍລະນີຂອງລາວມີສອງປະການຄື:

ສຳລັບຜູ້ທີ່ເດີນທາງໄປເຖິງໃນຊ່ວງເວລາອື່ນທີ່ບໍ່ແມ່ນເດືອນຕ່າງໆ ຂອງການເຮັດຫັຈ, ເຊັ່ນ: ເດືອນຣໍມະດອນ ແລະ ຊະອ໌ບານ, ສິ່ງທີ່ເປັນສຸນນະຫ໌ສຳລັບລາວກໍຄືໃຫ້ຄອງອິຫ໌ຣອມເພື່ອເຮັດອຸມເຣາະຫ໌, ໂດຍໃຫ້ຕັ້ງເຈດຕະນາໃນຫົວໃຈ ແລະ ກ່າວອອກສຽງວ່າ: "ລັບໄບກະ ອຸມເຣາະຫ໌" ຫຼື "ອັລລໍຮຸມມະ ລັບໄບກະ ອຸມເຣາະຫ໌", ຈາກນັ້ນຈຶ່ງກ່າວຕັລບິຍະຫ໌ ຂອງທູດນະບີ ﷺ, ເຊິ່ງແມ່ນ:

«لَبَّيْكَ اللَّهُمَّ لَبَّيْكَ، لَبَّيْكَ لَا شَرِيكَ لَكَ لَبَّيْكَ، إِنَّ الحَمْدَ وَالنِّعْمَةَ لَكَ وَالمُلْكَ، لَا شَرِيكَ لَكَ».

{ ລັບໄບກັລລໍ ຮຸມມະລັບໄບກະ, ລັບໄບກະ ລາຊະຣີ ກະລະ ລັບໄບກະ, ອິນນັລຮຳດະ ວັນນິຽະ ມະຕະ ລາກະ ວັລມຸລກະ, ລາຊະຣີ ກະລັກ }

"ໂອ້ ອັລລໍຮ຺ ຂ້ານ້ອຍຢູ່ທີ່ນີ້ເພື່ອພຣະອົງ, ຂ້ານ້ອຍຢູ່ທີ່ນີ້ເພື່ອພຣະອົງ. ຂ້ານ້ອຍຢູ່ທີ່ນີ້ເພື່ອພຣະອົງ, ບໍ່ມີສິ່ງໃດເປັນຄູ່ຄຽງກັບພຣະອົງ, ຂ້ານ້ອຍຢູ່ທີ່ນີ້ເພື່ອພຣະອົງ. ແທ້ຈິງ ການສັນລະເສີນທັງໝົດ, ຄວາມໂປດປານ ແລະ ອຳນາດອະທິປະໄຕ ເປັນ

ຂອງພຣະອົງ. ບໍ່ມີສິ່ງໃດເປັນຄູ່ຄຽງກັບພຣະອົງ.[1]. ແລະ ໃຫ້ກ່າວຕັລບີຍະຫ໌ ແລະ ເຮັດການລຳລຶກເຖິງພຣະອົງອັລລໍຫ໌ ຊຸບຫານະຫ໌ ໃຫ້ຫລາຍໆ ຈົນກວ່າຈະເຖິງໄບຕຸລລໍຫ໌. ເມື່ອໄປເຖິງໄບຕຸລລໍຫ໌ແລ້ວ ກໍໃຫ້ຢຸດກ່າວຕັລບີຍະຫ໌, ແລ້ວເຮັດການຕໍວາຟຮອບໄບຕຸລລໍຫ໌ ເຈັດຮອບ, ແລະ ລະຫມາດດ້ານຫຼັງມະກອມອິບຣໍຫີມ ສອງຣ໊ອກອັດ. ຫຼັງຈາກນັ້ນກໍອອກໄປຍັງເນີນພູຊໍຟາ ແລະ ເຮັດການສະແອ (ຍ່າງໄປມາ) ລະຫວ່າງເນີນພູຊໍຟາ ແລະ ມັຣວະຫ໌ ເຈັດຮອບ, ຈາກນັ້ນກໍໃຫ້ໂກນຜົມ ຫຼື ຕັດຜົມຂອງຕົນໃຫ້ສັ້ນລົງ. ແລະ ດ້ວຍການກະທຳດັ່ງກ່າວ, ການປະກອບອຸມເຣາະຫ໌ຂອງລາວກໍຖືວ່າສຳເລັດສົມບູນ ແລະ ທຸກສິ່ງທີ່ເຄີຍຖືກຫ້າມສຳລັບລາວໃນຂະນະຄອງອິຫ໌ຣອມກໍຈະກາຍເປັນທີ່ອະນຸຍາດແກ່ລາວ.

ປະການທີສອງ: ຄືການເດີນທາງໄປຮອດ ມີກ໊ອດ ໃນເດືອນຕ່າງໆ ຂອງການເຮັດຮັຈ, ເຊິ່ງແມ່ນ: ເດືອນເຊົາວາລ, ເດືອນຊຸລເກາະດະຫ໌ ແລະ ສິບວັນທຳອິດຂອງເດືອນຊຸລຮິຈຈະຫ໌.

ສະນັ້ນ, ຄົນໃນກໍລະນີນີ້ສາມາດເລືອກລະຫວ່າງສາມຢ່າງໄດ້, ຄືການເຮັດຫັຈພຽງຢ່າງດຽວ, ການເຮັດອຸມເຣາະຫ໌ພຽງຢ່າງດຽວ, ແລະ ການເຮັດທັງສອງຢ່າງລວມກັນ;

ເພາະທ່ານນະບີ ﷺ ເມື່ອເດີນທາງໄປເຖິງເຂດມີກ໊ອດໃນເດືອນຊຸລເກາະດະຫ໌ ໃນການເຮັດພິທີຮັຈອັລວະດາອ໌ ໄດ້ໃຫ້ບັນດາສໍຫາບະຫ໌ຂອງທ່ານເລືອກລະຫວ່າງຮູບແບບພິທີກຳທັງສາມນີ້, ແຕ່ສິ່ງທີ່ເປັນສຸນນະຫ໌ສຳລັບຄົນຜູ້ນີ້ເຊັ່ນກັນຫາກລາວບໍ່ໄດ້ນຳສັດເຊືອດມາພ້ອມ ແມ່ນການຄອງອິຫ໌ຣອມເພື່ອເຮັດອຸມເຣາະຫ໌, ແລະ ໃຫ້ປະຕິບັດຕາມສິ່ງທີ່ເຮົາໄດ້ກ່າວມາແລ້ວໃນ

[1] ບັນທຶກໂດຍ ອັລບຸກໍອຣີ, ເລກທີ່ (1549) ແລະ ມຸສລິມ, ເລກທີ່ (1184).

ກໍລະນີຂອງຜູ້ທີ່ເດີນທາງມາເຖິງເຂດມີກ໊ອດໃນຊ່ວງເວລາອື່ນ ທີ່ບໍ່ແມ່ນເດືອນຂອງການປະກອບພິທີຫັຈ; ເພາະທ່ານນະບີ ﷺ ໄດ້ສັ່ງບັນດາຊໍຫາບະຫ໌ຂອງທ່ານເມື່ອພວກເຂົາເຂົ້າໃກ້ມັກກະຫ໌ ໃຫ້ປ່ຽນການຄອງອິຫ໌ຣອມຂອງພວກເຂົາເປັນການເຮັດອຸມເຣາະຫ໌, ແລະ ເພິ່ນໄດ້ເນັ້ນຢ້ຳເລື່ອງດັ່ງກ່າວກັບພວກເຂົາທີ່ມັກກະຫ໌, ພວກເຂົາຈຶ່ງໄດ້ເຮັດການຕໍວາຟ, ສະແອ, ຕັດຜົມສັ້ນ ແລະ ຫຼຸດພົ້ນອອກຈາກສະພາບອິຫ໌ຣອມ ເພື່ອປະຕິບັດຕາມຄຳສັ່ງຂອງທ່ານ ﷺ, ຍົກເວັ້ນຜູ້ທີ່ນຳເອົາສັດເຊືອດມາພ້ອມ, ເຊິ່ງທ່ານນະບີ ﷺ ໄດ້ສັ່ງໃຫ້ລາວຄົງຢູ່ໃນສະພາບຄອງອິຫ໌ຣອມຂອງຕົນ ຈົນກວ່າຈະຫຼຸດພົ້ນອອກຈາກສະພາບດັ່ງກ່າວໃນວັນນະຫັຣ (ວັນເຊືອດສັດ). ແລະ ຮູບແບບທີ່ເປັນຊຸນນະຫ໌ສຳລັບຜູ້ທີ່ນຳສັດເຊືອດມາພ້ອມ ຄືການຄອງອິຫ໌ຣອມເພື່ອເຮັດຫັຈ ແລະ ອຸມເຣາະຫ໌ໄປພ້ອມໆກັນ; ເພາະວ່າທ່ານນະບີ ﷺ ໄດ້ປະຕິບັດເຊັ່ນນັ້ນ, ແລະ ທ່ານກໍໄດ້ນຳສັດເຊືອດມາພ້ອມ, ແລະ ໄດ້ສັ່ງໃຫ້ບັນດາສໍຫາບະຫ໌ຂອງທ່ານທີ່ໄດ້ນຳສັດເຊືອດມາພ້ອມ ແລະ ໄດ້ຄອງອິຫ໌ຣອມເພື່ອເຮັດອຸມເຣາະຫ໌ແລ້ວນັ້ນ ໃຫ້ກ່າວຕັລບີຍະຫ໌ເພື່ອເຮັດຫັຈຮ່ວມກັບອຸມເຣາະຫ໌ຂອງຕົນ, ແລະ ບໍ່ໃຫ້ອອກຈາກສະພາວະອິຫ໌ຣອມຈົນກວ່າຈະອອກພ້ອມກັນທັງສອງພິທີກຳໃນວັນນະຫັຣ. ແລະ ຖ້າຫາກຜູ້ທີ່ນຳສັດເຊືອດມາພ້ອມໄດ້ຄອງອິຫ໌ຣອມເພື່ອເຮັດຫັຈພຽງຢ່າງດຽວ, ກໍ່ໃຫ້ລາວຄົງຢູ່ໃນການຄອງອິຫ໌ຣອມຂອງລາວຕໍ່ໄປເຊັ່ນກັນ ຈົນກວ່າຈະອອກຈາກສະພາວະດັ່ງກ່າວໃນວັນນະຫັຣ, ເຊັ່ນດຽວກັບຜູ້ທີ່ປະກອບພິທີໃນຮູບແບບກິຣ໊ອນ.

ຈາກນີ້ຈຶ່ງເປັນທີ່ເຂົ້າໃຈໄດ້ວ່າ: ຜູ້ທີ່ຄອງອິຫ໌ຣອມເພື່ອປະກອບພິທີຫັຈພຽງຢ່າງດຽວ, ຫຼື ເພື່ອປະກອບພິທີຫັຈ ແລະ ອຸມ

ເຣາະຫ໌ ໂດຍທີ່ບໍ່ໄດ້ນຳສັດເຊືອດມາພ້ອມນັ້ນ ບໍ່ສົມຄວນທີ່ຈະຄົງຢູ່ໃນສະພາບຄອງອິຫ໌ຣອມຂອງຕົນ, ຫາກແຕ່ສຸນນະຫ໌ໃນກໍລະນີຂອງລາວແມ່ນ ໃຫ້ລາວປ່ຽນການຄອງອິຫ໌ຣອມຂອງຕົນມາເປັນອຸມເຣາະຫ໌ ແລ້ວເຮັດການຕໍວາຟ, ສະແອ, ຕັດຜົມສັ້ນ ແລະ ຖອນໂຕອອກຈາກສະພາບຄອງອິຫ໌ຣອມ, ດັ່ງທີ່ທ່ານນະບີ ﷺ ໄດ້ສັ່ງບັນດາຊໍຫາບະຫ໌ຂອງທ່ານ ທີ່ບໍ່ໄດ້ນຳສັດເຊືອດມາພ້ອມໃຫ້ກະທຳເຊັ່ນນັ້ນ. ເວັ້ນເສຍແຕ່ວ່າລາວຈະຢ້ານກົວວ່າຈະພາດການປະກອບພິທີຫັຈ ເນື່ອງຈາກວ່າລາວເດີນທາງມາຮອດຊ້າ, ກໍ່ຖືວ່າເປັນທີ່ອະນຸຍາດໃຫ້ລາວຄົງຢູ່ໃນສະພາບຄອງອິຫ໌ຣອມຂອງຕົນ, ແລະ ອັລລໍຫ໌ຊົງຮູ້ດີຍິ່ງ.

ແລະ ຖ້າຫາກຜູ້ທີ່ຄອງອິຫ໌ຣອມຢ້ານວ່າຕົນຈະບໍ່ສາມາດປະກອບພິທີກຳຂອງຕົນໄດ້ສົມບູນ ເນື່ອງຈາກການເຈັບປ່ວຍ ຫຼື ຢ້ານສັດຕູ ແລະ ອື່ນໆ, ເປັນທີ່ສົ່ງເສີມໃຫ້ລາວກ່າວໃນເວລາຄອງອິຫ໌ຣອມວ່າ: “ຖ້າຫາກມີສິ່ງກີດຂວາງໃດມາຍັບຍັ້ງຂ້າພະເຈົ້າ, ສະຖານທີ່ທີ່ຂ້າພະເຈົ້າຈະຫຼຸດພົ້ນຈາກອິຫ໌ຣອມ ກໍ່ຄືບ່ອນທີ່ພະອົງໄດ້ກັກຂັງຂ້າພະເຈົ້າໄວ້”; ຈາກຫະດີຊລາຍງານຈາກ ທ່ານນາງ ດຸບາອະຫ໌ ບິນຕິ ອັຊ-ຊຸໄບຣ໌ ຣໍດີຍັລລໍຮຸ ອັນຮາ, ໄດ້ກ່າວວ່າ: ໂອ້ ທ່ານຣໍຊູລ ລຸລລໍຫ໌, ແທ້ຈິງຂ້າພະເຈົ້າຕ້ອງການໄປເຮັດຫັຈຍ໌ ແລະ ຂ້າພະເຈົ້າກໍມີອາການປ່ວຍຢູ່, ດັ່ງນັ້ນ ທ່ານນະບີ ﷺ ຈຶ່ງໄດ້ກ່າວກັບນາງວ່າ:

«حُجِّي وَاشْتَرِطِي أَنَّ مَحِلِّي حَيْثُ حَبَسْتَنِي».

«ຈົ່ງປະກອບພິທີຮັຈຍ໌ ແລະ ຈົ່ງຕັ້ງເງື່ອນໄຂວ່າ: ບ່ອນຖອດຖອນຂອງຂ້ອຍແມ່ນບ່ອນທີ່ພຣະອົງໄດ້ກີດກັນຂ້ອຍໄວ້»[1] ມຸ

[1] ບັນທຶກໂດຍ ອັລບຸກໍອໍຣີ, ເລກທີ່ (5089) ແລະ ມຸສລິມ, ເລກທີ່ (1207).

ດຕະພັກ ກຸລອະໄລ.

ປະໂຫຍດຂອງເງື່ອນໄຂນີ້ກໍຄື: ຜູ້ທີ່ເປັນຄອງຜ້າອິຫ໌ຣອມ ຖ້າຫາກມີສິ່ງທີ່ມາຂັດຂວາງລາວຈາກການປະກອບພິທີກຳຂອງຕົນບໍ່ໃຫ້ສົມບູນ ເຊັ່ນ: ການເຈັບປ່ວຍ ຫຼື ຖືກສັດຕູກີດກັນ , ກໍອະນຸຍາດໃຫ້ລາວອອກຈາກສະພາບ ອິຫ໌ຣອມໄດ້ ໂດຍບໍ່ຕ້ອງມີການຊົດໃຊ້ໃດໆ.

## ບົດວ່າດ້ວຍ

## ຂໍ້ຕັດສິນກ່ຽວກັບການປະກອບພິທີຫັຈຂອງເດັກນ້ອຍ

## ວ່າພຽງພໍທີ່ຈະທົດແທນການເຮັດຫັຈຂອງອິສລາມໄດ້ ຫຼື ບໍ່.

ການເຮັດພິທີຫັຈຂອງເດັກນ້ອຍຊາຍ ແລະ ເດັກນ້ອຍຍິງແມ່ນໃຊ້ໄດ້; ຕາມທີ່ມີລາຍງານໃນ ຊໍເຮັຍຫ໌ ມຸສລິມ, ຈາກທ່ານ ອິບນຸ ອັບບາສ ຣໍດີຍັລລໍຮຸ ອັນຮຸມາ ວ່າມີແມ່ຍິງຄົນໜຶ່ງໄດ້ຍົກເດັກນ້ອຍຊາຍຄົນໜຶ່ງຂຶ້ນຕໍ່ທ່ານນະບີ ﷺ, ແລ້ວກ່າວວ່າ: ໂອ້ ທ່ານຣໍຊູລຂອງອັລລໍຮ໌, ສຳລັບເດັກຄົນນີ້ມີຫັຈບໍ່? ທ່ານຈຶ່ງກ່າວວ່າ:

«نَعَمْ، وَلَكِ أَجْرٌ».

«ແມ່ນແລ້ວ, ແລະ ທ່ານກໍຈະໄດ້ຮັບຜົນລະບຸນ»[1].

ໃນໜັງສືຫະດີຊ ຊໍຮີຫ໌ຂອງອັລ-ບຸກໍຣີ, ເຊິ່ງເປັນລາຍງານຈາກ ອັສ-ສາອິບ ບິນ ຍະຊີດ ຣໍດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: «ຂ້ອຍໄດ້ເຮັດຫັຈ ຮ່ວມກັບ ທ່ານຣໍຊູລຂອງອັລລໍຮ໌ ﷺ ຕອນອາຍຸ

[1] ບັນທຶກໂດຍມຸສລິມ, ເລກທີ່ (1336).

ເຈັດ ປີ»[1]. ແຕ່ການຮັຈຄັ້ງນີ້ ບໍ່ຖືເປັນການຮັຈຂອງອິສລາມໃຫ້ແກ່ພວກເຂົາທັງສອງ.

ແລະ ໃນທຳນອງດຽວກັນນີ້ ທາດຊາຍ ແລະ ທາດຍິງ ການເຮັດຫັຈຂອງພວກເຂົາຖືວ່າໃຊ້ໄດ້, ແລະ ບໍ່ສາມາດທົດແທນຫັຈອິສລາມໄດ້; ເພາະມີຫຼັກຖານຈາກຫະດີຊຂອງ ທ່ານອິບນຸ ອັບບາສ ຂໍພຣະອົງອັລລໍຫ໌ຊົງພໍພຣະໄທຕໍ່ພວກເຂົາທັງສອງ, ວ່າທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລໍາ ໄດ້ກ່າວວ່າ:

«أَيُّمَا صَبِيٍّ حَجَّ، ثُمَّ بَلَغَ الحِنْثَ، فَعَلَيْهِ أَنْ يَحُجَّ حَجَّةً أُخْرَى، وَأَيُّمَا عَبْدٍ حَجَّ، ثُمَّ أُعْتِقَ، فَعَلَيْهِ حَجَّةٌ أُخْرَى».

«ເດັກນ້ອຍຄົນໃດກໍ່ຕາມທີ່ໄດ້ເຮັດຫັຈ, ຈາກນັ້ນລາວໄດ້ບັນລຸສາດສະໜະພາວະ, ລາວຈະຕ້ອງເຮັດຫັຈອີກຄັ້ງໜຶ່ງ, ແລະ ທາດຄົນໃດກໍ່ຕາມທີ່ໄດ້ເຮັດຫັຈ, ຈາກນັ້ນລາວໄດ້ຖືກປົດປ່ອຍໃຫ້ເປັນໄທ, ລາວຈະຕ້ອງເຮັດຫັຈອີກຄັ້ງໜຶ່ງ»[2] ບັນທຶກໂດຍທ່ານອິບນຸ ອະບີ ໄຊບະຫ໌, ແລະ ທ່ານໄບຮາກີ ດ້ວຍສາຍລາຍງານຣະສັນ.

ຫຼັງຈາກນັ້ນ ຖ້າຫາກເດັກຊາຍຍັງບໍ່ທັນເຖິງໄວທີ່ສາມາດຈຳແນກໄດ້ ຜູ້ປົກຄອງຂອງລາວຈະຕ້ອງຕັ້ງເຈດຕະນາຄອງອິຫ໌ຣອມແທນລາວ, ໂດຍການປົດເຄື່ອງນຸ່ງທີ່ຕັດຫຍິບອອກຈາກລາວ ແລະ ກ່າວຕັລບີຍະຫ໌ແທນລາວ, ແລະ ດ້ວຍການກະທຳດັ່ງກ່າວ ເດັກຊາຍກໍຈະກາຍເປັນຜູ້ທີ່ຄອງອິຫ໌ຣອມ. ລາວຈຶ່ງຕ້ອງຖືກຫ້າມຈາກສິ່ງທີ່ຜູ້ຄອງອິຫ໌ຣອມທີ່ເປັນຜູ້ໃຫຍ່ຖືກຫ້າມ. ເຊັ່ນດຽວກັນ, ສຳລັບເດັກຍິງທີ່ຍັງບໍ່ທັນເຖິງໄວທີ່ສາມາດຈຳແ

---

1 ບັນທຶກໂດຍອັລບຸກໍຄໍຣີ : ເລກທີ່ (1858).

2 ບັນທຶກໂດຍ ອິບນຸ ອະບີ ໄຊບະ, ເຫຼັ້ມ (4/444).

ນກໄດ້ ຜູ້ປົກຄອງຂອງນາງຕ້ອງຕັ້ງເຈດຕະນາຄອງອິຫ໌ຣອມແທນນາງ, ແລະ ກ່າວຕັລບິຍະຫ໌ແທນນາງ, ແລະ ດ້ວຍການກະທຳດັ່ງກ່າວ ນາງກໍຈະກາຍເປັນຜູ້ທີ່ຄອງອິຫ໌ຣອມ, ແລະ ນາງກໍຕ້ອງຖືກຫ້າມຈາກສິ່ງທີ່ຜູ້ຄອງອິຫ໌ຣອມທີ່ເປັນຜູ້ໃຫຍ່ເພດຍິງຖືກຫ້າມ. ແລະ ສົມຄວນທີ່ເຄື່ອງນຸ່ງ ແລະ ຮ່າງກາຍຂອງທັງສອງຈະຕ້ອງສະອາດ ໃນຂະນະທີ່ເຮັດການຕໍວາຟ; ເພາະວ່າການຕໍວາຟນັ້ນຄ້າຍຄືກັບການລະຫມາດ, ແລະ ຄວາມສະອາດກໍເປັນເງື່ອນໄຂເພື່ອຄວາມຖືກຕ້ອງຂອງການລະຫມາດ.

ແລະ ຖ້າຫາກເດັກຊາຍ ແລະ ເດັກຍິງເປັນຜູ້ທີ່ສາມາດແຍກແຍະໄດ້, ພວກເຂົາທັງສອງຈະຄອງອິຫ໌ຣອມໂດຍການອະນຸຍາດຈາກຜູ້ປົກຄອງຂອງພວກເຂົາ, ແລະ ປະຕິບັດໃນເວລາຄອງອິຫ໌ຣອມໃນສິ່ງທີ່ຜູ້ໃຫຍ່ປະຕິບັດ ເຊັ່ນ ການອາບນ້ຳ, ການປະພົມນ້ຳຫອມ ແລະ ອື່ນໆ ທີ່ຄ້າຍຄືກັນ. ໂດຍຜູ້ປົກຄອງຂອງພວກເຂົາແມ່ນຜູ້ທີ່ຮັບຜິດຊອບດູແລກິດຈະການ ແລະ ຜົນປະໂຫຍດຂອງພວກເຂົາ, ບໍ່ວ່າຈະເປັນພໍ່, ແມ່ ຫຼື ບຸກຄົນອື່ນກໍ່ຕາມ. ແລະ ຜູ້ປົກຄອງຈະປະຕິບັດແທນພວກເຂົາໃນສິ່ງທີ່ພວກເຂົາບໍ່ສາມາດເຮັດເອງໄດ້, ເຊັ່ນ ການຂວ້າງເສົາຫີນ ແລະ ອື່ນໆ . ສ່ວນພິທີກຳທີ່ເຫຼືອ, ພວກເຂົາທັງສອງຈຳເປັນຕ້ອງປະຕິບັດດ້ວຍຕົນເອງ, ເຊັ່ນ ການຢຸດພັກທີ່ທົ່ງອະຣ໌ຟະຫ໌, ການພັກຄ້າງຄືນທີ່ທົ່ງມີນາ ແລະ ມຸຊດະລິຟະຫ໌, ການຕໍວາຟ ແລະ ການສະແອ. ຖ້າຫາກພວກເຂົາທັງສອງບໍ່ສາມາດເຮັດການຕໍວາຟ ແລະ ສະແອໄດ້, ກໍໃຫ້ມີການແບກພວກເຂົາທັງສອງເພື່ອເຮັດການຕໍວາຟ ແລະ ສະແອ. ແລະ ສິ່ງທີ່ດີທີ່ສຸດສຳລັບຜູ້ທີ່ແບກພວກເຂົາຄື ບໍ່ຄວນໃຫ້ການຕໍວາຟ ແລະ ການສະແອເປັນການກະທຳຮ່ວມກັນລະຫວ່າງຕົນເອງກັບພວກເຂົາທັງສອງ, ຫາກ

ແຕ່ລາວຄວນຕັ້ງເຈດຕະນາການຕໍາວາຟ ແລະ ການສະອີໃຫ້ແ ກ່ພວກເຂົາ, ແລະ ທໍາການຕໍາວາຟເພື່ອຕົນເອງຕ່າງຫາກ, ແລ ະ ທໍາການສະແອເພື່ອຕົນເອງຕ່າງຫາກ; ເພື່ອຄວາມຮອບຄອ ບໃນການປະກອບອິບາດະຫ໌, ແລະ ເພື່ອເປັນການປະຕິບັດຕາ ມຫະດີຊອັນຊົງກຽດ:

«دَعْ مَا يَرِيبُكَ إِلَى مَا لَا يَرِيبُكَ».

ທັ້ງທີ່ຂ້ອຍຮູ້ ແລະ ທີ່ຂ້ອຍບໍ່ຮູ້. ແລະ ຂ້ອຍຂໍຄວາມຄຸ້ມຄອງຕໍ່ພຣະອົງຈາກຄວາມຊົ່ວຮ້າຍທັ້ງໝົດທັ້ງມວນ, ທັ້ງໃນປັດຈຸບັນ ແລະ ໃນພາຍພາກໜ້າ, ທັງທີ່ຂ້ອຍຮູ້ ແລະ ທີ່ຂ້ອຍບໍ່ຮູ້. ແລະ ຂ້ອຍຂໍວິງວອນຕໍ່ພຣະອົງຈາກຄວາມດີທີ່ສຸດ ທີ່ບ່າວຂອງພຣະອົງ ແລະ ນະບີຂອງພຣະອົງ ມຸຫັມມັດ ﷺ ໄດ້ເຄີຍວິງວອນຂໍຕໍ່ພຣະອົງ. ແລະ ຂ້ອຍຂໍຄວາມຄຸ້ມຄອງຕໍ່ພຣະອົງຈາກຄວາມຊົ່ວຮ້າຍທີ່ບ່າວຂອງພຣະອົງ ແລະ ນະບີຂອງພຣະອົງ ມຸຮຳມັດ ﷺ ໄດ້ເຄີຍຂໍຄວາມຄຸ້ມຄອງຕໍ່ພຣະອົງຈາກມັນ. ໂອ້ອັລລໍຮ໌ ແທ້ຈິງຂ້ອຍຂໍວິງວອນຕໍ່ພຣະອົງໃຫ້ໄດ້ຮັບສວນສະຫວັນ ແລະ ທຸກຄຳເວົ້າ ແລະ ການກະທຳທີ່ຈະນຳພາໄປໃກ້ກັບມັນ. ແລະ ຂ້ອຍຂໍຄວາມຄຸ້ມຄອງຕໍ່ພຣະອົງໃຫ້ພົ້ນຈາກໄຟນະລົກ ແລະ ຈາກທຸກຄຳເວົ້າ ແລະ ການກະທຳທີ່ຈະນຳພາໄປສູ່ມັນ. ແລະ ຂ້ອຍຂໍວິງວອນຕໍ່ພຣະອົງ ຂໍຊົງໂປດເຮັດໃຫ້ທຸກການກຳຫນົດທີ່ພຣະອົງໄດ້ກຳນົດໃຫ້ແກ່ຂ້ອຍນັ້ນເປັນສິ່ງທີ່ດີງາມ»[1].

*لَا إِلَهَ إِلَّا اللَّهُ وَحْدَهُ لَا شَرِيكَ لَهُ، لَهُ المُلْكُ وَلَهُ الحَمْدُ، يُحْيِي وَيُمِيتُ بِيَدِهِ الخَيْرُ وَهُوَ عَلَى كُلِّ شَيْءٍ قَدِيرٌ، سُبْحَانَ اللَّهِ، وَالحَمْدُ لِلَّهِ، وَلَا إِلَهَ إِلَّا اللَّهُ، وَاللَّهُ أَكْبَرُ، وَلَا حَوْلَ وَلَا قُوَّةَ إِلَّا بِاللَّهِ العَلِيِّ العَظِيمِ.

(ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ພຽງພຣະອົງດຽວ ບໍ່ມີພາຄີໃດໆ ສຳລັບພຣະອົງ, ອຳນາດການປົກຄອງ ແລະ ມວນການສັນລະເສີນເປັນຂອງພຣະອົງ, ພຣະອົງຊົງໃຫ້ເປັນ ແລະ ໃຫ້ຕາຍ, ຄວາມດີງາມທັງມວນຢູ່ໃນພຣະຫັດຂອງພຣະອົງ, ພຣະອົງຊົງມີພະລານຸພາບເໜືອສັບພະສິ່ງທັງປວງ, ມະຫາບໍລິສຸ

---

[1] ບັນທຶກໂດຍ ອິບນຸ ມາຈະຫ໌, ເລກທີ່ (3846), ຈາກຫະດີສຂອງ ທ່ານຍິງອາອີຊະຫ໌ ຣໍດິຍັລລໍຮຸ ອັນຮາ.

ດແດ່ອັລລໍຫ໌, ແລະ ການສັນລະເສີນທັງມວນເປັນຂອງອັລລໍຫ໌, ແລະ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌, ແລະ ອັລລໍຫ໌ນັ້ນຊົງຍິ່ງໃຫຍ່ທີ່ສຸດ, ແລະ ບໍ່ມີຄວາມສາມາດ ແລະ ພະລັງອຳນາດໃດໆ ນອກຈາກອັລລໍຫ໌ ຜູ້ຊົງສູງສົ່ງ ຜູ້ຊົງຍິ່ງໃຫຍ່ )[1].

* اللَّهُمَّ صَلِّ عَلَى مُحَمَّدٍ، وَعَلَى آلِ مُحَمَّدٍ، كَمَا صَلَّيْتَ عَلَى إِبْرَاهِيمَ، وَعَلَى آلِ إِبْرَاهِيمَ، إِنَّكَ حَمِيدٌ مَجِيدٌ، وَبَارِكْ عَلَى مُحَمَّدٍ، وَعَلَى آلِ مُحَمَّدٍ، كَمَا بَارَكْتَ عَلَى إِبْرَاهِيمَ، وَعَلَى آلِ إِبْرَاهِيمَ، إِنَّكَ حَمِيدٌ مَجِيدٌ.

(ໂອ້ອັລລໍຫ໌, ຂໍພຣະອົງປະທານຄວາມເມຕາແກ່ມຸຮຳມັດ ແລະ ແກ່ບໍລິວານຕະກູນຂອງມຸຮຳມັດ, ດັ່ງຄວາມເມດຕາທີ່ພຣະອົງໄດ້ປະທານໃຫ້ແກ່ອິບຣໍຮີມ ແລະ ແກ່ບໍລິວານຕະກູນຂອງອິບຣໍຮີມ, ແທ້ຈິງ, ພຣະອົງແມ່ນຜູ້ຄວນຖືກສັນລະເສີນ ແລະ ຜູ້ຄອບຄອງກຽດທີ່ສູງສົງ. ແລະ ຂໍພຣະອົງປະທານຄວາມບາຣໍກະຮ໌ແກ່ມຸຮຳມັດ ແລະ ແກ່ບໍລິວານຕະກູນຂອງມຸຮຳມັດ, ດັ່ງຄວາມບາຣໍກະຮ໌ທີ່ພຣະອົງປະທານໃຫ້ແກ່ອິບຣໍຮີມ ແລະ ແກ່ບໍລິວານຕະກູນຂອງອິບຣໍຮີມ, ແທ້ຈິງ, ພຣະອົງແມ່ນຜູ້ຄວນຖືກສັນລະເສີນ ແລະ ຜູ້ຄອບຄອງກຽດທີ່ສູງສົ່ງ[2])

* ﴿...رَبَّنَا آتِنَا فِي الدُّنْيَا حَسَنَةً وَفِي الْآخِرَةِ حَسَنَةً وَقِنَا عَذَابَ النَّارِ﴾

"ຣອບບະນາ ອາຕິນາ ຟິດດຸນຍາ ຮາສານະຫ໌ ວະຟິລ ອາຄິເຣາະຕິ ຮາສານະຫ໌ ວະກິນາ ອະຊາບບັນ ນາຣ"

(ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກເຮົາ, ຂໍພຣະອົງຊົງປະທ

---

[1] ບັນທຶກໂດຍອັລບຸກໍຣີ ຈາກຫະດີສຂອງ ອຸບາດະຫ໌ ບິນ ອັສສໍມິຕ, ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ, ເລກທີ່ (1154).

[2] ບັນທຶກໂດຍອັລບຸກໍຣີ : ເລກທີ່ (3370) ຈາກຫະດີສຂອງ ກະອັບ ບິນ ອຸຈຣະຫ໌, ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ.

ານສິ່ງທີ່ດີງາມໃນໂລກນີ້ ແລະ ສິ່ງທີ່ດີງາມໃນໂລກໜ້າໃຫ້ແກ່ພວກເຮົາ ແລະ ຊົງປົກປ້ອງພວກເຮົາໃຫ້ພົ້ນຈາກການລົງໂທດໃນໄຟນະຮົກດ້ວຍເຖີດ)

[ອັລ-ບະກໍເຣາະຫ໌ : 201].

ແລະ ສົ່ງເສີມໃນສະຖານທີ່ອັນຍິ່ງໃຫຍ່ນີ້ ໃຫ້ຜູ້ທີ່ປະກອບພິທີຮັຈກ່າວຊ້ຳ ບັນດາການຊິກີຣ ແລະ ດຸອາທີ່ໄດ້ກ່າວມາກ່ອນແລ້ວຂ້າງຕົ້ນ, ແລະ ສິ່ງທີ່ມີຄວາມຫມາຍໃນທຳນອງດຽວກັນເຊັ່ນ ການຊິກີຣ, ການດຸອາ ແລະ ການສໍລະວາດ ໃຫ້ກັບທ່ານນະບີ ຊໍລລັລລໍຫຸ ອະລັຍຮີ ວະສັລລັມ, ແລະ ໃຫ້ໝັ່ນຂໍດຸອາຢ່າງຈິງຈັງ, ແລະ ວິງວອນຂໍຕໍ່ພຣະຜູ້ເປັນເຈົ້າຂອງລາວ ເຊິ່ງຄວາມດີງາມທັງໃນໂລກນີ້ ແລະ ໂລກໜ້າ, ແລະ ທ່ານນະບີ ຊໍລລັລລໍຫຸ ອະລັຍຮີ ວະສັລລັມ ເມື່ອທ່ານຂໍດຸອາ ທ່ານຈະກ່າວຊ້ຳສາມຄັ້ງ, ດັ່ງນັ້ນ ຈຶ່ງສົມຄວນທີ່ຈະເອົາແບບຢ່າງເພິ່ນໃນເລື່ອງດັ່ງກ່າວ ຊໍລລັລລໍຫຸ ອະໄລຮີ ວະສັລລັມ.

ແລະ ມຸສລິມໃນສະຖານະການນີ້ ຈະເປັນຜູ້ທີ່ນອບນ້ອມຖ່ອມຕົນ, ຍອມຈຳນົນ ແລະ ສະແດງຄວາມຕ່ຳຕ້ອຍຕໍ່ໜ້າພຣະຜູ້ເປັນເຈົ້າຂອງຕົນ ຜູ້ຊົງສູງສົ່ງ, ໂດຍຫວັງໃນຄວາມເມດຕາ ແລະ ການອະໄພຍະໂທດຂອງພຣະອົງ, ແລະ ຢຳເກງຕໍ່ການລົງໂທດ ແລະ ຄວາມໂກດກ້ຽວຂອງພຣະອົງ, ພ້ອມທັງກວດສອບຕົນເອງ, ແລະ ສຳນຶກຜິດກັບຕົວຢ່າງຈິງໃຈ; ເພາະນີ້ຄືວັນທີ່ຍິ່ງໃຫຍ່ ແລະ ເປັນບ່ອນຊຸມນຸມທີ່ໃຫຍ່ຫຼວງ, ເຊິ່ງອັລລໍຫ໌ຈະຊົງໂປດປານແກ່ບັນດາບ່າວຂອງພຣະອົງ, ແລະ ຈະຊົງກ່າວຍ້ອງຍໍພວກເຂົາຕໍ່ບັນດາມະລາອິກະຫ໌ຂອງພຣະອົງ, ແລະ ຈະຊົງປົດປ່ອຍຈາກໄຟນະລົກເປັນຈຳນວນຫຼວງຫຼາຍ, ແລະ ບໍ່ເຄີຍມີໃຜເຫັນໄຊຕອນໃນວັນໃດທີ່ມັນຈະຖືກຂັບໄລ່, ຕ່ຳຕ້ອຍ ແລະ ຫນ້

າລັງກຽດຍິ່ງໄປກວ່າໃນວັນອະຣໍຟະຫ໌, ຍົກເວັ້ນສິ່ງທີ່ໄດ້ຖືກເຫັນໃນວັນບະດັຣ; ທັງນີ້ກໍເພາະສິ່ງທີ່ມັນເຫັນ ເຊິ່ງເປັນຄວາມໂປດປານຂອງອັລລໍຫ໌ຕໍ່ບັນດາບ່າວຂອງພຣະອົງ, ຄວາມເມດຕາກະລຸນາຂອງພຣະອົງຕໍ່ພວກເຂົາ, ແລະ ການປົດປ່ອຍ ແລະ ການອະໄພຍະໂທດອັນຫຼວງຫຼາຍຂອງພຣະອົງ.

ແລະ ລາຍງານທີ່ຂໍເຣັຍຫ໌ຈາກມຸສລິມ ຈາກທ່ານນາງອາອິຊະຫ໌ ຂໍຄວາມພຶງພໍໃຈຈາກອັລລໍຫ໌ຈົ່ງມີແກ່ນາງ ວ່າທ່ານນະບີ ﷺ ໄດ້ກ່າວວ່າ:

«مَا مِنْ يَوْمٍ أَكْثَرَ مِنْ أَنْ يُعْتِقَ اللَّهُ فِيهِ عَبْدًا مِنَ النَّارِ مِنْ يَوْمِ عَرَفَةَ، وَإِنَّهُ لَيَدْنُو ثُمَّ يُبَاهِي بِهِمُ الْمَلَائِكَةَ، فَيَقُولُ: مَا أَرَادَ هَؤُلَاءِ؟».

«ບໍ່ມີວັນໃດທີ່ອັລລໍຫ໌ຊົງປົດປ່ອຍບ່າວອອກຈາກໄຟນະລົກຫລາຍໄປກວ່າວັນອະຣໍຟະຫ໌, ແລະແທ້ຈິງພຣະອົງຊົງເຂົ້າໃກ້, ຈາກນັ້ນຊົງໂອ້ອວດພວກເຂົາຕໍ່ບັນດາມະລາອິກະຫ໌, ແລະຊົງກ່າວວ່າ: ຄົນເຫລົ່ານີ້ຕ້ອງການສິ່ງໃດ?»[1].

ດັ່ງນັ້ນ, ຊາວມຸສລິມຄວນສະແດງໃຫ້ພຣະອົງອັລລໍຫ໌ໄດ້ເຫັນເຖິງສິ່ງທີ່ດີງາມຈາກຕົວຂອງພວກເຂົາ, ແລະ ຄວນສ້າງຄວາມຕໍ່າຕ້ອຍໃຫ້ແກ່ສັດຕູຂອງພວກເຂົາກໍ່ຄື ໄຊຕອນ, ແລະ ເຮັດໃຫ້ມັນໂສກເສົ້າ ດ້ວຍການລໍາລຶກເຖິງພຣະອົງ, ການຂໍດຸອາຢ່າງຫຼວງຫຼາຍ, ການຍຶດໝັ້ນໃນການກັບເນື້ອກັບຕົວ ແລະ ການຂໍອະໄພໂທດ ຈາກບາບກໍາ ແລະ ຄວາມຜິດພາດທັງໝົດທັງປວງ, ແລະ ບັນດາຜູ້ປະກອບພິທີຫັຈຈະຍັງຄົງຢູ່ໃນສະຖານທີ່ແຫ່ງນີ້ ໂດຍໃຫ້ຄວາມສໍາຄັນກັບການລໍາລຶກເຖິງພຣະອົງ, ກາ

---

[1] ບັນທຶກໂດຍມຸສລິມ, ເລກທີ່ (1348), ຈາກຫະດີສຂອງ ທ່ານຍິງອາອິຊະຫ໌ ຣໍດິຍັລລໍຮຸ ອັນຮາ.

ນຂໍດຸອາ ແລະ ການວິງວອນຂໍຢ່າງນອບນ້ອມ ຈົນກວ່າຕາເວັນຈະຕົກດິນ, ເມື່ອຕາເວັນຕົກດິນແລ້ວ ກໍ່ໃຫ້ອອກເດີນທາງໄປຍັງມຸຊດາລິຟະຫ໌ ດ້ວຍຄວາມສະຫງົບ ແລະ ສຳລວມ, ແລະ ໃຫ້ກ່າວຕັລບີຍະຫ໌ໃຫ້ຫຼາຍ, ພ້ອມທັງໃຫ້ຮີບຮ້ອນໃນສະຖານທີ່ທີ່ກວ້າງຂວາງ; ອັນເນື່ອງມາຈາກການກະທຳຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ, ແລະ ບໍ່ເປັນທີ່ອະນຸຍາດໃຫ້ອອກເດີນທາງກ່ອນຕາເວັນຕົກດິນ; ເພາະວ່າທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໄດ້ຢືນຢູ່ຈົນກວ່າຕາເວັນຈະຕົກດິນ, ແລະ ໄດ້ກ່າວວ່າ:

«خُذُوا عَنِّي مَنَاسِكَكُمْ».

«ພວກທ່ານຈົ່ງເອົາການປະຕິການງານທັ້ງຫຼາຍຂອງພວກທ່ານຈາກຂ້ອຍ»[1].

ເມື່ອພວກເຂົາເດີນທາງໄປເຖິງມຸຊດາລິຟະຫ໌ແລ້ວ ກໍ່ໃຫ້ລະຫມາດມັກຣິບ ສາມຣໍກະອັດ ແລະ ອິຊາ ສອງຣໍກະອັດ ລວມກັນ ດ້ວຍການອະຊານໜຶ່ງຄັ້ງ ແລະ ອິກໍມະຫ໌ສອງຄັ້ງ ທັນທີທີ່ພວກເຂົາໄປຮອດ; ເນື່ອງຈາກເປັນການກະທຳຂອງທ່ານນະບີ ﷺ, ບໍ່ວ່າພວກເຂົາຈະໄປເຖິງມຸຊດາລິຟະຫ໌ໃນເວລາມັກຣິບ ຫຼື ຫຼັງຈາກເຂົ້າເວລາອິຊາແລ້ວກໍ່ຕາມ.

ສ່ວນສິ່ງທີ່ຄົນທົ່ວໄປບາງສ່ວນປະຕິບັດກັນ ໃນການເກັບກ້ອນຫີນສຳລັບການຂວ້າງເສົາຫີນທັນທີທີ່ພວກເຂົາມາຮອດມຸຊດະລິຟະຫ໌ກ່ອນການລະຫມາດ, ແລະ ການທີ່ພວກເຂົາສ່ວນຫຼາຍເຊື່ອວ່າສິ່ງດັ່ງກ່າວເປັນສິ່ງທີ່ຖືກບັນຍັດໄວ້ໃນສາສະໜານັ້ນ, ຖືເປັນຄວາມເຂົ້າໃຈຜິດທີ່ບໍ່ມີຫຼັກຖານໃດໆ ມາຮອງຮັບ.

---

[1] ກ່າວອ້າງອີງຜ່ານມາແລ້ວ.

ແລະ ທ່ານນະບີ ﷺ ກໍບໍ່ໄດ້ສັ່ງໃຫ້ມີການເກັບກ້ອນຫີນ ຈົນກວ່າ ຫຼັງຈາກທີ່ທ່ານໄດ້ເດີນທາງອອກຈາກອັລ-ມັຊອັຣ ໄປຍັງມີນາ ແລ້ວ. ແລະ ສາມາດເກັບກ້ອນຫີນຈາກສະຖານທີ່ໃດກໍໄດ້, ໂດຍບໍ່ໄດ້ມີການກຳນົດສະເພາະວ່າຕ້ອງເກັບຈາກມຸຊດະລິຟະຫ໌ເທົ່ານັ້ນ, ແຕ່ສາມາດເກັບຈາກມີນາກໍໄດ້ເຊັ່ນກັນ. ແລະ ສິ່ງທີ່ເປັນສຸນນະຫ໌ຄື ການເກັບກ້ອນຫີນເຈັດກ້ອນໃນມື້ນີ້ ເພື່ອນຳໄປຂວາງທີ່ເສົາຫີນ ອະກໍບະຫ໌, ເພື່ອເປັນການຕາມແບບຢ່າງທ່ານນະບີ ﷺ. ສ່ວນໃນສາມວັນຕໍ່ມາ ແມ່ນໃຫ້ເກັບກ້ອນຫີນຈາກມີນາ ໃນແຕ່ລະມື້ຈຳນວນຊາວເອັດກ້ອນ ເພື່ອຂວ້າງເສົາຫີນທັງສາມຕົ້ນ.

ແລະ ບໍ່ສົມຄວນລ້າງກ້ອນຫີນ, ແຕ່ວ່າໃຫ້ຂວ້າງມັນໄປໂດຍບໍ່ຕ້ອງລ້າງ; ເພາະບໍ່ມີການລາຍງານວ່າທ່ານນະບີ ຊ໊ລລັລລໍຮຸ ອະໄລຮີ ວະສັລລໍາ ແລະ ເຫຼົ່າສໍຫາບະຂອງທ່ານໄດ້ເຮັດເຊັ່ນນັ້ນ, ແລະ ບໍ່ໃຫ້ຂວາງດ້ວຍກ້ອນຫີນທີ່ຖືກຂວາງແລ້ວ.

ຜູ້ປະກອບພິທີຫັຈ ຈະພັກຄ້າງຄືນທີ່ມຸຊດາລິຟະຫ໌ໃນຄືນນີ້, ແລະ ເປັນທີ່ອະນຸຍາດໃຫ້ແກ່ຜູ້ທີ່ອ່ອນແອ ຈາກບັນດາແມ່ຍິງ, ເດັກນ້ອຍ ແລະ ຜູ້ທີ່ຢູ່ໃນລັກສະນະດຽວກັນນີ້ ທີ່ຈະອອກເດີນທາງໄປຍັງມີນາໃນຊ່ວງທ້າຍຂອງຄືນ; ເນື່ອງຈາກມີຫະດີສຈາກທ່ານຍິງອາອິຊະຮ໌, ທ່ານຍິງອຸມມຸສະລາມະຮ໌ ແລະ ທ່ານອື່ນໆ. ສ່ວນຜູ້ປະກອບພິທີຫັຈຄົນອື່ນໆ ນັ້ນ, ຖືເປັນສິ່ງທີ່ຖືກເນັ້ນໜັກສຳລັບພວກເຂົາທີ່ຈະຕ້ອງພັກຢູ່ທີ່ນັ້ນຈົນກວ່າຈະໄດ້ລະຫມາດຟະຈັຣ, ຫຼັງຈາກນັ້ນກໍໃຫ້ຢຸດຢູ່ທີ່ ອັລ-ມັຊອະຣິລ ຫະຣອມ, ແລ້ວຫັນໜ້າໄປທາງກິບລັດ ແລະ ໃຫ້ໝັ່ນເຮັດການລຳລຶກເຖິງພຣະອົງອັລລໍຫ໌, ກ່າວຕັກບີຣ ແລະ ຂໍດຸອາ ຈົນກວ່າທ້ອງຟ້າຈະແຈ້ງສະຫວ່າງຂຶ້ນເປັນຢ່າງຍິ່ງ. ແລະ ສຸນັດໃຫ້ຍົກມືທັ້ງ

ສອງຂຶ້ນຢູ່ທີ່ນີ້ລະຫວ່າງດຸອາ, ແລະ ບ່ອນໃດກໍຕາມທີ່ພວກເຂົາຢຸດຢູ່ທີ່ມຸຊດະລິຟະຫ໌ກໍຖືວ່າພຽງພໍແລ້ວ, ແລະ ບໍ່ຈຳເປັນສຳລັບພວກເຂົາທີ່ຈະຕ້ອງເຂົ້າໃກ້ ຫຼື ຂຶ້ນໄປເທິງມັຊອັຣ; ດັ່ງຄຳກ່າວຂອງທ່ານນະບີ ຊັລລັລລໍຮຸ ອະໄລຮິ ອະສັລລັມ:

«وَقَفْتُ هَاهُنَا - يَعْنِي عَلَى المَشْعَرِ الحَرَامِ - وَجَمْعٌ كُلُّهَا مَوْقِفٌ».

«ຂ້ອຍໄດ້ຢືນຢູ່ບ່ອນນີ້ - ໝາຍເຖິງ ຢູ່ທີ່ ອັລ-ມັຊອະຣິລ ຫະຣອມ - ແລະ ທັງຫມົດກໍເປັນສະຖານທີ່ວຸກູຟ»[1] ລາຍງານໂດຍອິມາມມຸສລິມ, ແລະ ອະຈຳອະ : ຄື ມຸຊດະລິຟະຫ໌.

ເມື່ອຮອດຕອນຮຸ່ງເຊົ້າແລ້ວ ກໍ່ໃຫ້ເດີນທາງໄປຍັງມີນາ ກ່ອນຕາເວັນຈະຂຶ້ນ, ແລະ ໃຫ້ກ່າວຕັລບີຍະຫ໌ໃຫ້ຫຼາຍໃນລະຫວ່າງການເດີນທາງ, ເມື່ອເດີນທາງໄປຮອດມຸຫັສຊິຣ ກໍ່ເປັນທີ່ສົ່ງເສີມໃຫ້ເລັ່ງຝີເທົ້າຂຶ້ນເລັກນ້ອຍ.

ເມື່ອພວກເຂົາເດີນທາງໄປຮອດມີນາ ກໍ່ໃຫ້ຢຸດເຊົາການກ່າວຕັລບີຍະຫ໌ ເມື່ອເຖິງເສົາຫີນອະກໍບະຫ໌, ຈາກນັ້ນ ກໍ່ໃຫ້ຂວ້າງເສົາຫີນນັ້ນທັນທີທີ່ໄປຮອດ ດ້ວຍກ້ອນຫີນເຈັດກ້ອນຢ່າງຕໍ່ເນື່ອງກັນ, ໂດຍໃຫ້ຍົກມືຂຶ້ນໃນເວລາຂວ້າງກ້ອນຫີນແຕ່ລະກ້ອນ ແລະ ໃຫ້ກ່າວຕັກບີຣ. ແລະ ສິ່ງທີ່ສົມຄວນຄື ໃຫ້ຂວ້າງຈາກກາງຮ່ອມຫີນ, ໂດຍໃຫ້ກະບະຮ໌ຢູ່ທາງເບື້ອງຊ້າຍຂອງຕົນ, ແລະ ໃຫ້ມີນາຢູ່ທາງເບື້ອງຂວາຂອງຕົນ; ທັ້ງນີ້ເພື່ອປະຕິບັດຕາມການກະທຳຂອງທ່ານນະບີ ﷺ. ແລະ ຫາກວ່າລາວຂວ້າງຈາກດ້ານອື່ນໆ ກໍຖືວ່າໃຊ້ໄດ້ ຖ້າຫາກກ້ອນຫີນຕົກລົງໃນອ່າງເປົ້າໝາຍ, ແລະ ບໍ່ໄດ້ມີເງື່ອນໄຂວ່າກ້ອນຫີນຈະຕ້ອງຄ້າງຢູ່ໃນອ່າງ

---

[1] ບັນທຶກໂດຍມຸສລິມ, ເລກທີ່ (1218), ຈາກຫະດີສຂອງ ຍາບີຣ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ.

, ແຕ່ເງື່ອນໄຂຄື ມັນຈະຕ້ອງຕົກລົງໃນອ່າງນັ້ນ. ສະນັ້ນ ຫາກກ້ອນຫີນໄດ້ຕົກລົງໃນອ່າງ ແລ້ວກະເດັນອອກມາ ກໍຖືວ່າໃຊ້ໄດ້ຕາມທັດສະນະທີ່ປາກົດຊັດຂອງບັນດານັກວິຊາການ, ແລະ ໃນບັນດາຜູ້ທີ່ໄດ້ລະບຸຢ່າງຊັດເຈນໃນເລື່ອງນີ້ ຄື ທ່ານ ອັນ-ນະວະວີ (ຂໍອັລລໍຮ໌ຊົງເມດຕາເພິ່ນ) ໃນປຶ້ມ ຊັຣຫ໌ ອັລ-ມຸຫັຊຊັບ. ແລະ ກ້ອນຫີນສຳລັບຂວ້າງເສົາຫີນນັ້ນ ຄວນມີຂະໜາດເທົ່າກັບກ້ອນຫີນທີ່ໃຊ້ດີດ, ເຊິ່ງຈະໃຫຍ່ກວ່າເມັດຖົ່ວດິນໜ້ອຍໜຶ່ງ.

ຫລັງຈາກນັ້ນ ເມື່ອຂວ້າງກ້ອນຫີນແລ້ວ ກໍ່ໃຫ້ເຮັດການເຊືອດສັດຮາດີຍ໌ຂອງຕົນ, ແລະ ສົມຄວນທີ່ຈະກ່າວໃນຂະນະທີ່ເຮັດການເຊືອດວ່າ: "ບິສມິລລາຫ໌ ວັລລໍຫຸ ອັກບັຣ, ອັລລໍຫຸມມະຮາຊາ ມິນກະ ວະລະກະ" ແລະ ໃຫ້ຫັນໜ້າສັດໄປທາງກິບລະຫ໌, ສ່ວນສຸນນະຫ໌ໃນການເຊືອດອູດນັ້ນ ແມ່ນໃຫ້ເຊືອດໃນທ່າຢືນໂດຍມັດຂາໜ້າເບື້ອງຊ້າຍໄວ້, ແລະ ການເຊືອດງົວ ແລະ ແບ້ແມ່ນໃຫ້ນອນຕະແຄງຊ້າຍ, ຫາກລາວເຊືອດໂດຍບໍ່ຫັນໜ້າໄປທາງກິບລະຫ໌ ກໍ່ຖືວ່າລາວໄດ້ລະຖິ້ມສຸນນະຫ໌ ແຕ່ການເຊືອດຂອງລາວກໍຍັງຖືວ່າໃຊ້ໄດ້; ເພາະການຫັນໜ້າໄປທາງກິບລະຫ໌ໃນເວລາເຊືອດນັ້ນເປັນສຸນນະຫ໌ ບໍ່ແມ່ນວາຈິບ, ແລະ ສົມຄວນທີ່ລາວຈະກິນຈາກສັດຮາດີຍ໌ຂອງລາວ, ແລະ ເອົາໄປເປັນຂອງຂວັນ ແລະ ບໍລິຈາກ; ດັ່ງຄຳດຳລັດຂອງພຣະອົງ ຕະອາລາ ທີ່ວ່າ:

﴿...فَكُلُوا مِنْهَا وَأَطْعِمُوا الْبَائِسَ الْفَقِيرَ﴾

(...ດັ່ງນັ້ນ ພວກເຈົ້າຈົ່ງກິນຈາກມັນ ແລະ ໃຫ້ອາຫານແກ່ຜູ້ທຸກຍາກຂາດເຂີນ) [ອັລ-ຮັຈ: 28] ແລະ ເວລາຂອງການເຊືອດແມ່ນຕໍ່ເນື່ອງໄປຈົນເຖິງຕາເວັນຕົກດິນຂອງວັນທີສາມຂອງບັນດາວັນອັດ-ຕັຊຣີກ, ຕາມທັດສະນະທີ່ຖືກຕ້ອງທີ່ສຸດຂອ

ງບັນດານັກວິຊາການ, ສະນັ້ນ ໄລຍະເວລາຂອງການເຊືອດຈຶ່ງແມ່ນ ວັນນະຫັຣ໌ ແລະ ສາມວັນຫຼັງຈາກນັ້ນ.

ຈາກນັ້ນ, ຫລັງຈາກການເຊືອດສັດພິທີກຳແລ້ວ ໃຫ້ໂກນຫົວ ຫຼື ຕັດຜົມ, ແລະ ການໂກນຫົວແມ່ນດີກວ່າ; ເພາະວ່າທ່ານນະບີ ﷺ ໄດ້ຂໍດຸອາໃຫ້ໄດ້ຮັບຄວາມເມດຕາ ແລະ ການອະໄພໂທດແກ່ບັນດາຜູ້ທີ່ໂກນຫົວ (ທ່ານໄດ້ກ່າວສາມເທື່ອ) ແລະ ແກ່ບັນດາຜູ້ທີ່ຕັດຜົມເທື່ອດຽວ. ການຕັດຜົມພຽງບາງສ່ວນຂອງຫົວແມ່ນບໍ່ພຽງພໍ, ແຕ່ຈຳເປັນຕ້ອງຕັດໃຫ້ທົ່ວທັງຫມົດຄືກັນກັບການໂກນຫົວ, ສ່ວນຜູ້ຍິງແມ່ນໃຫ້ຕັດຈາກປາຍຜົມທຸກມັດເປຍຂອງນາງ ປະມານເທົ່າກັບຫນຶ່ງຂໍ້ນິ້ວມື ຫຼື ນ້ອຍກວ່ານັ້ນ.

ຫຼັງຈາກການຂວ້າງເສົາຫີນອະກໍບະຫ໌ ແລະ ການໂກນຜົມ ຫຼື ການຕັດຜົມແລ້ວ, ທຸກສິ່ງທີ່ເຄີຍຖືກຫ້າມໃນສະພາວະອິຫ໌ຣອມກໍຈະເປັນທີ່ອະນຸຍາດແກ່ຜູ້ຄອງອິຫ໌ຣອມ, ຍົກເວັ້ນເລື່ອງຂອງແມ່ຍິງ, ແລະ ການພົ້ນຈາກສະພາວະນີ້ຖືກເອີ້ນວ່າ: ການພົ້ນຈາກສະພາວະອິຫ໌ຣອມຄັ້ງທຳອິດ. ແລະ ຫຼັງຈາກການພົ້ນຈາກສະພາວະດັ່ງກ່າວ, ສຸນນະຫ໌ໃຫ້ລາວໃສ່ນ້ຳຫອມ ແລະ ມຸ່ງຫນ້າໄປຍັງນະຄອນມັກກະຫ໌ ເພື່ອເຮັດການຕໍວາຟ ອິຟາເດາະຫ໌; ໂດຍອີງຕາມຫະດີສຈາກທ່ານນາງ ອາອິຊະຫ໌ ຣໍດິຍັລລໍຮຸ ອັນຮາ ທີ່ໄດ້ກ່າວວ່າ:

«كُنْتُ أُطَيِّبُ رَسُولَ اللَّهِ ﷺ لِإِحْرَامِهِ قَبْلَ أَنْ يُحْرِمَ، وَلِحِلِّهِ قَبْلَ أَنْ يَطُوفَ بِالبَيْتِ».

«ຂ້ອຍເຄີຍທາເຄື່ອງຫອມໃຫ້ທ່ານຣໍຊູລຂອງອັລລໍຮ໌ ເພື່ອການເຂົ້າອິຫ໌ຣອມຂອງທ່ານ ກ່ອນທີ່ທ່ານຈະຄອງອິຫ໌ຣອມ, ແ

ລະ ເພື່ອການອອກຈາກອິຫ໌ຣອມຂອງທ່ານ ກ່ອນທີ່ທ່ານຈະຕໍວາຟຮອບໄບຕຸລລໍຫ໌»[1] ລາຍງານໂດຍ ອັລ-ບຸກໍຣີ ແລະ ມຸສລິມ.

ການຕໍວາຟນີ້ ເອີ້ນວ່າ: ຕໍວາຟ ອິຟາເດາະຫ໌, ແລະ ຕໍວາຟ ຊິຍາເຣາະຫ໌, ເຊິ່ງເປັນຫຼັກການໜຶ່ງຂອງການເຮັດຫັຈຍ໌ ທີ່ພິທີຫັຈຍ໌ຈະບໍ່ສົມບູນໄດ້ເລີຍຫາກປາດສະຈາກມັນ, ແລະ ມັນຄືສິ່ງທີ່ຖືກກ່າວເຖິງໃນຄຳດຳລັດຂອງພຣະອົງ ຜູ້ຊົງສູງສົ່ງ ແລະ ຍິ່ງໃຫຍ່ ທີ່ວ່າ:

﴿ثُمَّ لْيَقْضُوا تَفَثَهُمْ وَلْيُوفُوا نُذُورَهُمْ وَلْيَطَّوَّفُوا بِالْبَيْتِ الْعَتِيقِ ٢٩﴾

(ຫຼັງຈາກນັ້ນ, ພວກເຂົາຈົ່ງກຳຈັດສະພາບທີ່ບໍ່ເປັນລະບຽບຮຽບຮ້ອຍຂອງພວກເຂົາ, ແລະ ປະຕິບັດຕາມຄຳປະຕິຍານຂອງພວກເຂົາໃຫ້ຄົບຖ້ວນ, ແລະ ຕໍວາຟ ໄບຕຸລລໍຫ໌ເຖິດ )

[ອັລ-ຮັຈ: 29].

ຫຼັງຈາກນັ້ນ, ພາຍຫຼັງການຕໍວາຟ ແລະ ການລະຫມາດສອງຣໍກະອັດດ້ານຫຼັງມະກອມອິບຣໍຫີມແລ້ວ, ກໍ່ໃຫ້ເຮັດການຍ່າງສະແອ້ ລະຫວາງພູເຂົາ ຊໍວາ ແລະ ມັຣວະຫ໌ ຖ້າຫາກລາວເປັນຜູ້ປະກອບພິທີຫັຈແບບຕະມັດຕຸອ໌, ໂດຍທີ່ການສະແອນີ້ແມ່ນເພື່ອການປະກອບພິທີຫັຈຂອງລາວ, ສ່ວນການສະແອຄັ້ງທຳອິດແມ່ນເພື່ອອຸມເຣາະຫ໌ຂອງລາວ.

ແລະ ການສະແອພຽງຄັ້ງດຽວແມ່ນບໍ່ພຽງພໍ ຕາມທັດສະນະທີ່ຖືກຕ້ອງທີ່ສຸດຂອງບັນດານັກວິຊາການ; ຈາກຫະດີຊຂອງທ່ານນາງ ອາອິຊະຫ໌ ຣໍດິຍັລລໍຮຸ ອັນຮາ ໄດ້ກ່າວວ່າ: «ພວກເຮົາໄດ້ອອກເດີນທາງກັບທ່ານຣໍຊູລຸລລໍຮ໌ ຊໍລລັລລໍຮຸ ອະໄລຮິ ວະສັ

1 ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1539) ແລະ ມຸສລິມ, ເລກທີ່ (1189).

ລລໍາ» ແລ້ວທ່ານນາງກໍ່ໄດ້ກ່າວຫະດີດຊຕໍ່, ເຊິ່ງໃນນັ້ນ ທ່ານໄດ້ກ່າວວ່າ:

«وَمَنْ كَانَ مَعَهُ هَدْيٌ فَلْيُهِلَّ بِالحَجِّ مَعَ العُمْرَةِ ثُمَّ لَا يَحِلَّ حَتَّى يَحِلَّ مِنْهُمَا جَمِيعًا».

«ແລະຜູ້ໃດທີ່ມີສັດມາເຊືອດມາພ້ອມກັບລາວ, ກໍ່ຈົ່ງຕັ້ງເຈດຕະນາເຮັດຮັຈຮ່ວມກັບອຸມເຣາະຫ໌, ຫຼັງຈາກນັ້ນຈະບໍ່ອອກຈາກການຄອງອິຫ໌ຣອມຈົນກວ່າຈະອອກຈາກການຄອງອິຫ໌ຣອມຂອງທັງສອງຢ່າງພ້ອມກັນ». ແລະ ກ່າວຕໍ່ອີກວ່າ:

«فَطَافَ الَّذِينَ أَهَلُّوا بِالعُمْرَةِ بِالبَيْتِ وَبِالصَّفَا وَالمَرْوَةِ ثُمَّ حَلُّوا ثُمَّ طَافُوا طَوَافًا آخَرَ بَعْدَ أَنْ رَجَعُوا مِنْ مِنًى لِحَجِّهِمْ».

ຄວາມໝາຍວ່າ: ບັນດາຜູ້ທີ່ໄດ້ຄອງອິຫ໌ຣອມເພື່ອອຸມເຣາະຫ໌ ກໍໄດ້ເຮັດການຕໍວາຟທີ່ໄບຕຸລລໍຫ໌ ແລະ ເຮັດການສະແອລະຫວ່າງຊໍຟາ ແລະ ມັຣວະຫ໌, ຫຼັງຈາກນັ້ນພວກເຂົາກໍ່ໄດ້ພົ້ນຈາກສະພາບການອິຫ໌ຣອມ, ແລ້ວພວກເຂົາກໍ່ໄດ້ເຮັດການຕໍວາຟອີກຄັ້ງໜຶ່ງ ຫຼັງຈາກທີ່ພວກເຂົາກັບມາຈາກມີນາ ເພື່ອການປະກອບພິທີຫັຈຂອງພວກເຂົາ[1]. ບັນທຶກໂດຍ ບຸກໍຣີ ແລະ ມຸສລິມ.

ແລະ ຄໍາກ່າວຂອງນາງ (ຂໍອັລລໍຫ໌ຊົງພໍພຣະໄທຕໍ່ນາງ) - ກ່ຽວກັບບັນດາຜູ້ທີ່ໄດ້ຕັ້ງໃຈເຮັດອຸມເຣາະຫ໌ - ທີ່ວ່າ: "ຫຼັງຈາກນັ້ນ, ພວກເຂົາໄດ້ຕໍວາຟອີກຄັ້ງໜຶ່ງ ຫຼັງຈາກທີ່ພວກເຂົາໄດ້ກັບມາຈາກມີນາ ເພື່ອການປະກອບພິທີຫັຈຂອງພວກເຂົາ", ນາງໝາຍເຖິງ: ການສະແອລະຫວ່າງເນີນພູຊໍຟາ ແລະ ມັຣວະຫ໌, ຕາມທັດສະນະທີ່ຖືກຕ້ອງທີ່ສຸດໃນການອະທິບາຍຫະດີສບົດນີ້

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1556) ແລະ ມຸສລິມ, ເລກທີ່ (1211).

. ສ່ວນທັດສະນະຂອງຜູ້ທີ່ກ່າວວ່າ ບາງໝາຍເຖິງການຕໍາວາຟ ອິຟາເດາະຫ໌ນັ້ນ, ມັນບໍ່ຖືກຕ້ອງ; ເພາະວ່າການຕໍາວາຟ ອິຟາເດາະຫ໌ ນັ້ນເປັນຫຼັກການພື້ນຖານ (ຣູກົນ) ສໍາລັບທຸກຄົນ ແລະ ພວກເຂົາກໍ່ໄດ້ກະທໍາມັນແລ້ວ. ຫາກແຕ່ສິ່ງທີ່ໝາຍເຖິງໃນທີ່ນີ້ກໍ່ຄື ສິ່ງທີ່ສະເພາະເຈາະຈົງກັບຜູ້ທີ່ປະກອບພິທີຫັຈແບບມຸຕະມັດຕິອ໌, ເຊິ່ງກໍຄືການສະແອເປັນຄັ້ງທີສອງ ຫຼັງຈາກທີ່ກັບມາຈາກມີນາ ເພື່ອເຮັດໃຫ້ການປະກອບພິທີຫັຈຂອງລາວສົມບູນ. ແລະສິ່ງດັ່ງກ່າວກໍ່ເປັນທີ່ຊັດເຈນແລ້ວ ດ້ວຍການສັນລະເສີນແດ່ອັລລໍຫ໌, ແລະ ນີ້ຄືທັດສະນະຂອງນັກວິຊາການສ່ວນໃຫຍ່.

ແລະ ສິ່ງທີ່ຢັ້ງຢືນເຖິງຄວາມຖືກຕ້ອງຂອງເລື່ອງນີ້ອີກຢ່າງໜຶ່ງກໍ່ຄືສິ່ງທີ່ທ່ານອັລ-ບຸກໍຣີໄດ້ອ້າງອີງໄວ້ຢ່າງໜັກແໜ້ນໃນຕໍາລາສໍຮີຫ໌ຂອງທ່ານ, ເຊິ່ງເປັນລາຍງານຈາກທ່ານອິບນຸ ອັບບາສ ຣໍດີຢັລລໍຮຸ ອັນຮຸມາ ວ່າທ່ານໄດ້ຖືກຖາມກ່ຽວກັບການເຮັດຫັຈແບບຕະມັດຕຸອ໌, ເພິ່ນຈຶ່ງກ່າວວ່າ: «ບັນດາຊາວມຸຮາຈີຣູນ, ຊາວອັນຊໍຣ ແລະ ບັນດາພັນລະຍາຂອງທ່ານນະບີ ﷺ ໄດ້ຕັ້ງເຈດຕະນາ (ຄອງອິຫ໌ຣອມ) ໃນການເຮັດຮັຈຍ໌ອໍາລາ, ແລະ ພວກເຮົາກໍ່ໄດ້ຕັ້ງເຈດຕະນາເຊັ່ນກັນ. ເມື່ອພວກເຮົາເດີນທາງມາຮອດນະຄອນມັກກະຫ໌, ທ່ານສາດສະດາຂອງອັລລໍຣ໌ ﷺ ໄດ້ກ່າວວ່າ: ຈົ່ງປ່ຽນການຕັ້ງເຈດຕະນາ (ອິຫ໌ລາ) ຂອງພວກເຈົ້າຈາກການເຮັດຮັຈຍ໌ໃຫ້ເປັນອຸມເຣາະຣ໌, ຍົກເວັ້ນຜູ້ທີ່ໄດ້ນໍາສັດມາພ້ອມເຊືອດ (ອັລ-ຮັດຍຸ) . ດັ່ງນັ້ນ ພວກເຮົາຈຶ່ງໄດ້ຕໍາວາຟຣອບວິຫານກະບະຫ໌, ຍ່າງສະແອ້ລະຫວ່າງເນີນພູຊໍຟາ ແລະ ມັຣວະຫ໌, ໄດ້ຮ່ວມຫຼັບນອນກັບບັນດາພັນລະຍາ, ແລະ ໄດ້ສວມໃສ່ເສື້ອຜ້າປົກກະຕິ. ແລະ ທ່ານໄດ້ກ່າວວ່າ: ຜູ້ໃດທີ່ໄດ້ນໍາສັດເຊືອ

໑ (ອັລ-ຮັດຍຸ) ມາພ້ອມ, ລາວຈະຍັງບໍ່ສາມາດອອກຈາກສະພ າວະອິຫ໌ຣອມໄດ້ ຈົນກວ່າສັດເຊືອດຈະໄປເຖິງສະຖານທີ່ເຊືອດ ຂອງມັນ. ຫຼັງຈາກນັ້ນ ໃນຕອນຄໍ່າຂອງວັນຕັຣວິຍະຫ໌ ທ່ານໄດ້ ສັ່ງພວກເຮົາໃຫ້ຕັ້ງເຈດຕະນາເພື່ອເຮັດຮັຈຍ໌ຄືນໃໝ່, ເມື່ອພ ວກເຮົາປະກອບພິທີກໍາຕ່າງໆ ສໍາເລັດແລ້ວ, ພວກເຮົາກໍ່ໄດ້ມ າຕໍ່ວາຟຮອບວິຫານກະບະຫ໌ ແລະ ເດີນສະແອ້ ລະຫວ່າງເນີນ ພູຊໍຟາ ແລະ ມັຣວະຫ໌»[1]. ສິ້ນສຸດຄໍາເວົ້າທີ່ຕ້ອງການຍົກມາ, ແ ລະ ນີ້ເປັນສິ່ງທີ່ຊັດເຈນໃນການສະແອຂອງຜູ້ທີ່ເຮັດຫັຈແບບ ຕະມັດຕຸອ໌ສອງຄັ້ງ, ແລະ ອັລລໍຫ໌ເປັນຜູ້ຊົງຮອບຮູ້ຍິ່ງ.

ແລະ ສ່ວນສິ່ງທີ່ອິໝາມມຸສລິມໄດ້ລາຍງານໄວ້ ຈາກທ່ານຈາ ບິຣ ຣໍດິຍັລລໍຮຸ ອັນຮຸ: «ທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລັ ມ ແລະ ສາວົກຂອງທ່ານ ບໍ່ໄດ້ຍ່າງລະຫວ່າງພູຊໍຟາ ແລະ ມັຣວ ະຫ໌ ເວັ້ນເສຍແຕ່ພຽງຄັ້ງດຽວ»[2], ການຕໍ່ວາຟຄັ້ງທໍາອິດຂອງ ພວກເຂົານັ້ນ ໝາຍເຖິງບັນດາຊໍຮາບະຫ໌ທີ່ໄດ້ນໍາເອົາສັດມາຂ້ າໃນພິທີຫັຈ; ເພາະວ່າພວກເຂົາຍັງຄົງຢູ່ໃນສະພາວະອິຫ໌ຣອມ ຂອງພວກເຂົາ ພ້ອມກັບທ່ານນະບີ ﷺ ຈົນກວ່າພວກເຂົາຈະໄ ດ້ພົ້ນຈາກສະພາວະອິຫ໌ຣອມຂອງທັງການປະກອບພິທີຫັຈ ແ ລະ ອຸມເຣາະຫ໌ພ້ອມກັນ, ແລະ ທ່ານນະບີ ﷺ ກໍ່ໄດ້ຕັ້ງເຈດຕະນ າເຂົ້າສູ່ສະພາວະອິຫ໌ຣອມເພື່ອການປະກອບພິທີຫັຈ ແລະ ອຸມ ເຣາະຫ໌ ແລະ ໄດ້ສັ່ງໃຫ້ຜູ້ທີ່ນໍາເອົາສັດມາຂ້າໃນພິທີກໍານັ້ນ ໃຫ້ ຕັ້ງເຈດຕະນາເຂົ້າສູ່ສະພາວະອິຫ໌ຣອມເພື່ອການປະກອບພິທີ ຫັຈພ້ອມກັບອຸມເຣາະຫ໌, ແລະ ບໍ່ໃຫ້ພົ້ນຈາກສະພາວະອິຫ໌ຣອ ມ ຈົນກວ່າຈະໄດ້ພົ້ນຈາກທັງສອງຢ່າງພ້ອມກັນ. ສ່ວນຜູ້ທີ່ປະ

---

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1572).

[2] ບັນທຶກໂດຍມຸສລິມ, ເລກທີ່ (1215).

ກອບພິທີຫັຈ ແລະ ອຸມເຣາະຫ໌ຮ່ວມກັນນັ້ນ ຈະຕ້ອງເຮັດການ ສະແອພຽງຄັ້ງດຽວ, ດັ່ງທີ່ໄດ້ຖືກລະບຸໄວ້ໃນຫະດີສຂອງທ່ານຈາບີຣທີ່ໄດ້ກ່າວມານັ້ນ ແລະ ຫະດີສທີ່ຖືກຕ້ອງໄດ້ບົດອື່ນໆ.

ແລະ ໃນທຳນອງດຽວກັນ, ຜູ້ທີ່ເຮັດຫັຈແບບອິຟຣອດ ແລະ ຍັງຄົງຢູ່ໃນສະພາບອິຫ໌ຣອມຂອງຕົນຈົນເຖິງວັນນະຫ໌ຣ, ລາວຈະຕ້ອງເຮັດການສະແອພຽງຄັ້ງດຽວ. ດັ່ງນັ້ນ, ເມື່ອຜູ້ປະກອບພິທີຫັຈແບບກິຣ໊ອນ ແລະ ອິຟຣອດ ໄດ້ເຮັດການສະແອຫຼັງຈາກຕໍວາຟ ອັລ-ກຸດູມແລ້ວ, ການສະແອດັ່ງກ່າວກໍພຽງພໍແລ້ວ ແທນການສະແອຫຼັງຈາກຕໍວາຟ ອິຟາເດາະຫ໌. ແລະ ນີ້ຄືການລວມຄວາມໝາຍລະຫວ່າງສອງຫະດີຊຂອງທ່ານນາງອາອິຊະຫ໌ ແລະ ທ່ານອິບນຸ ອັບບາສ ກັບຫະດີຊຂອງທ່ານຈາບີຣ ທີ່ໄດ້ກ່າວມາ, ແລະ ດ້ວຍເຫດນີ້ ຄວາມຂັດແຍ້ງກໍຈະໝົດໄປ ແລະ ເຮັດໃຫ້ສາມາດປະຕິບັດຕາມບັນດາຫະດີຊທັງໝົດໄດ້.

ແລະ ສິ່ງທີ່ສະໜັບສະໜູນການລວມຄວາມໝາຍນີ້ກໍຄື ລາຍງານຂອງທ່ານຍິງອາອິຊະຫ໌ ແລະ ທ່ານອິບນຸ ອັບບາສ ເປັນສອງລາຍງານທີ່ຖືກຕ້ອງ, ເຊິ່ງທັງສອງໄດ້ຢືນຢັນການສະແອຄັ້ງທີ່ສອງສຳລັບຜູ້ທີ່ເຮັດຮັຈແບບຕະມັດຕຸອ໌, ໃນຂະນະທີ່ຄວາມໝາຍທີ່ປາກົດໃນລາຍງານຂອງທ່ານຈາບີຣນັ້ນ ໄດ້ປະຕິເສດເລື່ອງດັ່ງກ່າວ. ແລະ ຫຼັກຖານທີ່ຢືນຢັນນັ້ນຍ່ອມມີນ້ຳໜັກກວ່າຫຼັກຖານທີ່ປະຕິເສດ, ດັ່ງທີ່ໄດ້ຖືກກຳນົດໄວ້ໃນວິຊາອຸສູລ ແລະ ວິຊາມຸສຕໍລະຫ໌ ຫະດີສ. ແລະ ອັລລໍຫ໌ ຊຸບຮານະຮູ ວະຕະອາລາ ຄືຜູ້ຊີ້ງນຳພາສູ່ຄວາມຖືກຕ້ອງ, ແລະ ບໍ່ມີພະລັງອຳນາດໃດໆ ເວັ້ນແຕ່ດ້ວຍກັບອັລລໍຫ໌.

# ບົດວ່າດ້ວຍ
# ຄວາມປະເສີດຂອງສິ່ງທີ່ຜູ້ສະແຫວງບຸນກະທຳໃນວັນແຫ່ງການເຊືອດ (ນະຫັຣ)

ແລະ ສິ່ງທີ່ດີທີ່ສຸດສຳລັບຜູ້ເຮັດຫັຈຍ໌ຄື ການຈັດລຽງສີ່ປະການນີ້ຕາມລຳດັບໃນວັນນະຫັຣ (ວັນແຫ່ງການເຊືອດ) ດັ່ງທີ່ໄດ້ລະບຸໄວ້, ໂດຍໃຫ້ເລີ່ມຈາກການຂວ້າງເສົາຫີນອະກໍບະຫ໌, ຈາກນັ້ນຈຶ່ງເຮັດການເຊືອດ, ຈາກນັ້ນກໍ່ໂກນຜົມ ຫຼື ຕັດຜົມ, ຈາກນັ້ນກໍ່ເຮັດການຕໍວາຟຮອບກະບະຫ໌ ແລະ ເຮັດການສະແອຫຼັງຈາກນັ້ນ ; ສຳລັບຜູ້ທີ່ເຮັດຫັຈແບບຕະມັດຕຸອ໌, ແລະ ເຊັ່ນດຽວກັນສຳລັບຜູ້ທີ່ເຮັດຫັຈແບບອິຟຣອດ ແລະ ກິຣອນ ຖ້າຫາກພວກເຂົາບໍ່ໄດ້ເຮັດການສະແອພ້ອມກັບການຕໍວາຟ ກຸດູມ. ແຕ່ຖ້າຫາກລາວໄດ້ສະຫຼັບລຳດັບການປະຕິບັດໃນສິ່ງເຫຼົ່ານີ້ ກໍຖືວ່າເປັນທີ່ອະນຸຍາດ; ເນື່ອງຈາກມີການຜ່ອນຜັນທີ່ໄດ້ຮັບການຢັ້ງຢືນຈາກທ່ານນະບີ ﷺ ໃນເລື່ອງດັ່ງກ່າວ, ແລະ ນີ້ກໍລວມເຖິງການເຮັດສະແອກ່ອນການຕໍວາຟ; ເພາະມັນເປັນສ່ວນໜຶ່ງຂອງກິດຈະການທີ່ຖືກປະຕິບັດໃນວັນນະຫັຣ, ຈຶ່ງຖືກລວມຢູ່ໃນຄຳກ່າວຂອງສໍຫາບະຫ໌ທີ່ວ່າ: ເພິ່ນບໍ່ໄດ້ຖືກຖາມໃນວັນນັ້ນກ່ຽວກັບສິ່ງໃດທີ່ຖືກກະທຳກ່ອນ ຫຼື ຫຼັງ ເວັ້ນເສຍແຕ່ທ່ານຈະກ່າວວ່າ:

«افْعَلْ وَلَا حَرَجَ».

(ຈົ່ງປະຕິບັດ ແລະ ບໍ່ມີຄວາມຜິດ)[1], ແລະ ເນື່ອງຈາກວ່າມັນເປັນສິ່ງທີ່ເກີດຂຶ້ນຈາກຄວາມລືມລືມແລະ ຄວາມບໍ່ຮູ້, ມັນຈຶ່

---

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (83) ແລະ ມຸສລິມ, ເລກທີ່ (1306).

ງຈຳເປັນຕ້ອງລວມຢູ່ໃນຂໍ້ກຳນົດທົ່ວໄປນີ້; ເພາະໃນນັ້ນມີການອຳນວຍຄວາມສະດວກ ແລະ ການຜ່ອນຜັນ.

ແລະ ໄດ້ມີການຢືນຢັ້ງຈາກ ທ່ານນະບີ ﷺ ວ່າທ່ານໄດ້ຖືກຖາມກ່ຽວກັບຜູ້ທີ່ໄດ້ເຮັດການສະແອກ່ອນເຮັດຕໍ່ວາຟ, ແລ້ວທ່ານກໍໄດ້ກ່າວວ່າ:

«لَا حَرَجَ».

"ບໍ່ມີຄວາມຜິດ"[1] ບັນທຶກໂດຍ ອາບູດາວູດ, ຈາກຫະດີດຂອງທ່ານ ອຸສາມະ ບິນ ຊະຣີກ ດ້ວຍສາຍລາຍງານທີ່ໜ້າເຊື່ອຖື ແລະ ຖືກຕ້ອງ, ຈຶ່ງເຮັດໃຫ້ເປັນທີ່ແຈ່ມແຈ້ງວ່າສິ່ງດັ່ງກ່າວແມ່ນຢູ່ພາຍໃຕ້ຂໍ້ກຳນົດທົ່ວໄປຢ່າງບໍ່ຕ້ອງສົງໄສ, ແລະ ອັລລໍຫ໌ຊົງເປັນຜູ້ໃຫ້ຄວາມສຳເລັດ.

ສຳລັບບັນດາສິ່ງທີ່ເຮັດໃຫ້ຜູ້ປະກອບພິທີຫັຈໄດ້ພົ້ນຈາກສະພາບຂອງອິຫ໌ຣອມຢ່າງສົມບູນນັ້ນ ມີສາມປະການຄື: ການຂວ້າງເສົາຫີນ ຈໍ່າຣະຕຸລ ອະກໍບະຫ໌, ການໂກນ ຫຼື ຕັດຜົມ, ແລະ ການຕໍ່ວາຟ ອິຟາເດາະຫ໌ ພ້ອມກັບການສະແອຫຼັງຈາກນັ້ນຕາມທີ່ໄດ້ກ່າວມາຂ້າງຕົ້ນ. ເມື່ອລາວໄດ້ປະຕິບັດຄົບທັ້ງສາມປະການນີ້ແລ້ວ, ທຸກສິ່ງທີ່ເຄີຍເປັນສິ່ງຕ້ອງຫ້າມສຳລັບລາວໃນຂະນະຄອງອິຫ໌ຣອມກໍຈະເປັນທີ່ອະນຸຍາດທັ້ງໝົດ, ເຊັ່ນ: ການມີເພດສຳພັນ, ການໃຊ້ນ້ຳຫອມ ແລະ ອື່ນໆ. ແລະ ຜູ້ໃດທີ່ປະຕິບັດສອງໃນສາມປະການນີ້, ທຸກສິ່ງທີ່ເຄີຍເປັນສິ່ງຕ້ອງຫ້າມສຳລັບລາວໃນຂະນະຄອງອິຫ໌ຣອມກໍຈະເປັນທີ່ອະນຸຍາດ ເວັ້ນເສຍແຕ່ການມີເພດສຳພັນ, ແລະ ສິ່ງນີ້ຖືກເອີ້ນວ່າ: ການພົ້ນຈາກສະພາວະອິຫ໌ຣອມຄັ້ງທຳອິດ.

---

[1] ບັນທຶກໂດຍ ອະບູ ດາວູດ ເລກທີ່: (2015).

ແລະ ສົ່ງເສີມໃຫ້ຜູ້ປະກອບພິທີຮັຈ ໄດ້ດື່ມນ້ຳຊຳຊຳ ແລະ ດື່ມໃຫ້ເຕັມທີ່, ແລະ ຂໍດຸອາຕາມທີ່ສະດວກ ດ້ວຍດຸອາທີ່ມີປະໂຫຍດ, ແລະ

«مَاءُ زَمْزَمَ لِمَا شُرِبَ لَهُ».

«ນ້ຳຊຳຊຳ ເປັນໄປຕາມຈຸດປະສົງທີ່ດື່ມ»[1]. ດັ່ງທີ່ ໄດ້ມີການລາຍງານໃນໜັງສືຫະດີຊ ສໍເຮັຍຫ໌ຂອງມຸສລິມ ຈາກທ່ານອະບີ ດັຣ ວ່າ: ແທ້ຈິງ ທ່ານນະບີ ﷺ ໄດ້ກ່າວກ່ຽວກັບນ້ຳຊຳຊຳວ່າ:

«إِنَّهُ طَعَامُ طُعْمٍ».

«ແທ້ຈິງມັນ ແມ່ນອາຫານສຳລັບການບໍລິໂພກ»[2]. ເພີ່ມເຕີມໂດຍອະບູດາວູດ:

«وَشِفَاءُ سُقْمٍ».

"ແລະ ການປິ່ນປົວໂລກພະຍາດ"[3].

ແລະ ຫຼັງຈາກຕໍ່ວາຟອິຟາເດາະຫ໌ ແລະ ການສະແອ ສຳຫຼັບຜູ້ທີ່ຈຳເປັນຕ້ອງປະຕິບັດ, ບັນດາຜູ້ປະກອບພິທີຫັຈກໍ່ຈະກັບຄືນໄປຍັງມີນາ ເພື່ອພຳນັກຢູ່ທີ່ນັ້ນເປັນເວລາສາມມື້ສາມຄືນ, ແລະ ຈະເຮັດການຂວ້າງເສົາຫີນທັງສາມຕົ້ນໃນແຕ່ລະວັນຂອງສາມວັນດັ່ງກ່າວ ຫຼັງຈາກຕາເວັນຄ້ອຍ, ແລະ ຈຳເປັນຕ້ອງຮັກສາການລຽງລຳດັບໃນການຂວ້າງ.

ໃຫ້ເລີ່ມຈາກເສົາຫີນຕົ້ນທຳອິດ: ເຊິ່ງແມ່ນຕົ້ນທີ່ຢູ່ຖັດຈາ

---

[1] ບັນທຶກໂດຍ ອິບນຸ ມາຢະຫ໌, ເລກທີ່ (3062), ຈາກ ຈາບິຣ ບິນ ອັບດຸລລໍຫ໌ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ.

[2] ບັນທຶກໂດຍມຸສລິມ, ເລກທີ່ (2473).

[3] ໝາຍເຖິງ: ອະບູ ດາວູດ ອັຕ-ຕໍຍາລິຊີ ເຊິ່ງເພິ່ນໄດ້ບັນທຶກໄວ້ໃນຫະດີຊບົດດຽວກັນກັບເລື່ອງລາວການເຂົ້າຮັບອິສລາມຂອງ ອະບີ ດັຣ (ຂໍອັລລໍຣ໌ຊົງພໍພຣະໄທຕໍ່ເພິ່ນ). ເບິ່ງທີ່ ມຸສນັດ ອະບີ ດາວູດ ອັຕ-ຕໍຍາລິຊີ ເລກທີ່ (459).

ກມັສຍິດອັລ-ຄອຍຟ໌ ໂດຍໃຫ້ຂວ້າງດ້ວຍກ້ອນຫີນເຈັດກ້ອນຢ່າງຕໍ່ເນື່ອງ, ໃຫ້ຍົກມືຂຶ້ນພ້ອມກັບການຂວ້າງທຸກກ້ອນ, ແລະ ສຸນນະຫ໌ໃຫ້ກ້າວອອກຈາກຈຸດນັ້ນໄປ ໂດຍໃຫ້ເສົາຫີນຢູ່ທາງເບື້ອງຊ້າຍຂອງຕົນ, ແລ້ວຜິນໜ້າໄປທາງກິບລັດ, ຍົກມືທັງສອງຂ້າງຂຶ້ນ ແລະ ໝັ່ນໃນການຂໍດຸອາ ແລະ ວິງວອນຂໍຢ່າງຫຼວງຫຼາຍ.

ຫຼັງຈາກນັ້ນ ໃຫ້ຂວ້າງຫີນທີ່ ຈຳມະເຣາະຫ໌ທີ່ສອງຄືກັບຈຳມະເຣາະຫ໌ທີ່ທຳອິດ, ແລະ ສຸນນະຫ໌ໃຫ້ກ້າວໄປຂ້າງໜ້າເລັກນ້ອຍຫຼັງຈາກຂວ້າງຫີນແລ້ວ ໂດຍໃຫ້ຈຳມະເຣາະຫ໌ຢູ່ທາງເບື້ອງຂວາຂອງຕົນ, ຫັນໜ້າໄປທາງທິດກະບະຫ໌, ຍົກມືທັງສອງຂຶ້ນ ແລະ ວິງວອນຂໍດຸອາຢ່າງຫຼວງຫຼາຍ.

ຈາກນັ້ນ ກໍ່ໃຫ້ຂວ້າງຈຳມະເຣາະຫ໌ທີ່ສາມ ແລະ ບໍ່ໃຫ້ຢຸດຢູ່ທີ່ນັ້ນ.

ຈາກນັ້ນ ໃຫ້ຂວ່າງເສົາຫີນໃນວັນທີສອງຂອງວັນຕັຊຣີກ ຫຼັງຈາກຕາເວັນຄ້ອຍ, ຄືກັນກັບທີ່ໄດ້ຂວ້າງໃນວັນທຳອິດ, ແລະ ໃຫ້ປະຕິບັດທີ່ເສົາຫີນຕົ້ນທີໜຶ່ງ ແລະ ຕົ້ນທີສອງ ຄືດັ່ງທີ່ໄດ້ປະຕິບັດໃນວັນທຳອິດ; ເພື່ອເປັນການເອົາແບບຢ່າງຕາມທ່ານນະບີ ﷺ.

ການຂວ້າງເສົາຫີນໃນສອງວັນທຳອິດຂອງບັນດາວັນຕັຊຣີກແມ່ນເປັນວາຈິບໜຶ່ງໃນບັນດາວາຈິບຂອງຫັຈ, ແລະ ການພັກຄ້າງຄືນທີ່ທົ່ງມີນາໃນຄືນທີໜຶ່ງ ແລະ ຄືນທີສອງກໍເປັນວາຈິບເຊັ່ນກັນ, ແຕ່ວ່າບໍ່ເປັນວາຈິບສຳລັບຜູ້ໃຫ້ນ້ຳ, ຜູ້ລ້ຽງສັດ ແລະ ຜູ້ທີ່ມີໜ້າທີ່ຄ້າຍຄືກັນ.

ຈາກນັ້ນ, ຫຼັງຈາກການຂວ້າງເສົາຫີນໃນສອງວັນທີ່ກ່າວມາ, ຫາກຜູ້ໃດປະສົງທີ່ຈະຮີບກັບຈາກມີນາ ກໍ່ເປັນທີ່ອະນຸຍາດແ

ກ່ລາວ, ໂດຍໃຫ້ລາວອອກເດີນທາງກ່ອນຕະເວັນຕົກດິນ ແລະ ຫາກຜູ້ໃດຢູ່ຕໍ່ຈົນຄົບສາມຄືນ ແລະ ໄດ້ຂວ້າງເສົາຫີນຕ່າງ ໆ ໃນວັນທີ່ສາມ ກໍ່ເປັນການດີກວ່າ ແລະ ມີຜົນຕອບແທນທີ່ຍິ່ງໃຫຍ່ກວ່າ, ດັ່ງທີ່ອັລລໍຫ໌ ຕະອາລາ ໄດ້ດຳລັດໄວ້ວ່າ:

﴿وَاذْكُرُوا اللَّهَ فِي أَيَّامٍ مَعْدُودَاتٍ فَمَنْ تَعَجَّلَ فِي يَوْمَيْنِ فَلَا إِثْمَ عَلَيْهِ وَمَنْ تَأَخَّرَ فَلَا إِثْمَ عَلَيْهِ لِمَنِ اتَّقَى...﴾

(ແລະ ພວກເຈົ້າຈົ່ງລຳລຶກເຖິງອັລລໍຫ໌ ໃນຫຼາຍໆ ວັນທີ່ຖືກກຳນົດໄວ້, ຜູ້ໃດທີ່ຮີບຮ້ອນໃນສອງວັນ ກໍ່ບໍ່ມີບາບໃດໆ ແກ່ເຂົາ ແລະ ຜູ້ໃດທີ່ຢູ່ຕໍ່ ກໍ່ບໍ່ມີບາບໃດໆ ແກ່ເຂົາ, ສຳຫຼັບຜູ້ທີ່ຍຳເກງ...) [ສູເຣາະຫ໌ ອັລ-ບາກໍເຣາະຫ໌: 203]. ແລະ ເນື່ອງຈາກວ່າທ່ານນະບີ ຊໍລລັລລໍຮຸ ອະລັຍຮິ ວະສັລລັມ ໄດ້ຜ່ອນຜັນໃຫ້ຜູ້ຄົນໃນການຮີບຮ້ອນອອກເດີນທາງ, ແຕ່ທ່ານເອງບໍ່ໄດ້ຮີບຮ້ອນ, ແຕ່ທ່ານໄດ້ພັກຢູ່ທີ່ມີນາຈົນໄດ້ຂວ້າງເສົາຫີນໃນວັນທີສິບສາມ ຫລັງຈາກຕາເວັນຄ້ອຍ, ຈາກນັ້ນຈຶ່ງອອກເດີນທາງກ່ອນທີ່ຈະໄດ້ລະຫມາດຊຸຮ໌ຮິ.

ອະນຸຍາດໃຫ້ຜູ້ປົກຄອງຂອງເດັກນ້ອຍຜູ້ຊາຍທີ່ບໍ່ສາມາດດຳເນີນການຂວ້າງຫີນດ້ວຍຕົນເອງ, ສາມາດຂວ້າງຫີນທີ່ ເສົາຫີນ ຈຳມະເຣາະຫ໌ ຕຸລອະກໍບະຫ໌ ແລະ ຈຳມະເຣາະຫ໌ອື່ນ ໆ ທັງໝົດແທນໄດ້, ຫຼັງຈາກທີ່ຕົນໄດ້ຂວ້າງຫີນສ່ວນຂອງຕົນເອງແລ້ວ, ເຊັ່ນດຽວກັນ, ເດັກນ້ອຍຜູ້ຍິງທີ່ບໍ່ສາມາດຂວ້າງຫີນໄດ້ ຜູ້ປົກຄອງຂອງນາງກໍຈະເປັນຜູ້ຂວ້າງຫີນແທນ; ຕາມຫະດີສຈາກທ່ານ ຈາບີຣ, ເຊິ່ງເພິ່ນໄດ້ກ່າວວ່າ:

«حَجَجْنَا مَعَ رَسُولِ اللَّهِ ﷺ، وَمَعَنَا النِّسَاءُ وَالصِّبْيَانُ، فَلَبَّيْنَا عَنِ الصِّبْيَانِ وَرَمَيْنَا عَنْهُمْ».

«ພວກເຮົາໄດ້ເຮັດຫັຈຮ່ວມກັບທ່ານຣໍຊູລ ລຸລລໍຮ໌ ຊໍລລັລ ລໍຮຸ ອະໄລຮີ ວະສັລລໍາ, ແລະ ບັນດາແມ່ຍິງ ແລະ ບັນດາເດັກນ້ອຍກໍ່ໄດ້ຢູ່ກັບພວກເຮົາ, ພວກເຮົາຈຶ່ງໄດ້ກ່າວຕັລບິຍະຫ໌ແທນບັນດາເດັກນ້ອຍ ແລະ ໄດ້ຂວ້າງຫີນແທນພວກເຂົາ»[1] ບັນທຶກໂດຍ ທ່ານອິບນຸມາຈະຫ໌.

ອະນຸຍາດໃຫ້ຜູ້ທີ່ບໍ່ສາມາດຂວ້າງເສົາຫີນ ເນື່ອງຈາກການເຈັບປ່ວຍ ຫຼື ຄວາມແກ່ຊະລາ ຫຼື ການຖືພາ ມອບໝາຍໃຫ້ຜູ້ອື່ນຂວ້າງແທນຕົນໄດ້; ດັ່ງດໍາລັດຂອງອັລລໍຮ໌ ຕະອາລາ ທີ່ວ່າ:

﴿فَاتَّقُوا اللَّهَ مَا اسْتَطَعْتُمْ...﴾

(ດັ່ງນັ້ນ ຈົ່ງຍໍາເກຮງອັລລໍຫ໌ເຖີດ ເທົ່າທີ່ພວກເຈົ້າມີຄວາມສາມາດ....) [ອັດ-ຕະກໍາບຸນ: 16] ສ່ວນຄົນເຫຼົ່ານີ້ ພວກເຂົາບໍ່ສາມາດທີ່ຈະໄປບຽດສຽດກັບຜູ້ຄົນທີ່ຈໍານະຮອດ (ສະຖານທີ່ຂວ້າງເສົາຫີນ) ໄດ້, ແລະ ເວລາຂອງການຂວ້າງເສົາຫີນກໍ່ຈະຜ່ານພົ້ນໄປ ໂດຍທີ່ບໍ່ໄດ້ຖືກບັນຍັດໃຫ້ທົດແທນຄືນໄດ້, ດັ່ງນັ້ນ ຈຶ່ງເປັນທີ່ອະນຸຍາດໃຫ້ພວກເຂົາມອບໝາຍໃຫ້ຄົນອື່ນເຮັດແທນໄດ້, ເຊິ່ງຕ່າງຈາກພິທີກໍາອື່ນໆ. ສະນັ້ນ, ບໍ່ສົມຄວນທີ່ຜູ້ຄອງອິຫ໌ຣອມຈະແຕ່ງຕັ້ງຕົວແທນເພື່ອປະກອບພິທີກໍາແທນຕົນເອງ ເຖິງແມ່ນວ່າການເຮັດຫັຈຂອງລາວຈະເປັນການເຮັດຫັຈທີ່ສະໝັກໃຈ (ນາຟິລະຫ໌) ກໍ່ຕາມ; ເພາະວ່າຜູ້ໃດທີ່ໄດ້ຄອງອິຫ໌ຣອມເພື່ອປະກອບພິທີຮັຈ ຫຼື ອຸມເຣາະຫ໌, ເຖິງແມ່ນວ່າທັ້ງສອງຈະເປັນການກະທໍາທີ່ສະໝັກໃຈກໍ່ຕາມ, ລາວກໍ່ຈໍາເປັນຕ້ອງເຮັດທັ້ງສອງຢ່າງນັ້ນໃຫ້ສົມບູນ; ຕາມດໍາລັດຂອງອົງອັລລໍອ໌ຜູ້ຊົງສູງສົ່ງ ທີ່ວ່າ:

---

[1] ບັນທຶກໂດຍ ອັດຕິຣມີຊີ ເລກທີ່ (927).

﴿وَأَتِمُّوا الْحَجَّ وَالْعُمْرَةَ لِلَّهِ...﴾

(ແລະ ພວກເຈົ້າຈົ່ງເຮັດພິທີຮັຈ ແລະ ອຸມເຣາະຫ໌ ໃຫ້ຄົບຖ້ວນສົມບູນເພື່ອອັລລໍຫ໌) [ອັລ-ບະກໍເຣາະຫ໌: 196] ແລະ ເວລາຂອງການຕໍວາຟ ແລະ ການສະແອ ຈະບໍ່ຜ່ານພົ້ນໄປ, ເຊິ່ງແຕກຕ່າງຈາກເວລາຂອງການຂວ້າງເສົາຫີນ.

ສ່ວນການຢຸດພັກທີ່ທົ່ງອະຣໍຟະຫ໌ ແລະ ການພັກຄ້າງຄືນທີ່ມຸຊດາລິຟະຫ໌ ແລະ ທົ່ງມີນາ, ບໍ່ຕ້ອງສົງໄສເລີຍວ່າເວລາຂອງມັນຈະຜ່ານພົ້ນໄປ, ແຕ່ທະວ່າການໄປຢູ່ໃນສະຖານທີ່ເຫຼົ່ານີ້ຂອງຜູ້ທີ່ບໍ່ສາມາດນັ້ນ ເປັນສິ່ງທີ່ເປັນໄປໄດ້ ເຖິງແມ່ນວ່າຈະມີຄວາມລໍາບາກກໍ່ຕາມ, ເຊິ່ງແຕກຕ່າງຈາກການລົງມືຂວ້າງຫີນດ້ວຍຕົນເອງ, ແລະ ເນື່ອງຈາກວ່າການຂວ້າງຫີນນັ້ນ ມີການລາຍງານເຖິງການມອບໝາຍໃຫ້ຜູ້ອື່ນເຮັດແທນຈາກບັນພະຊົນຊາວຊາລັຟຜູ້ຊອບທັມ ໃນກໍລະນີຂອງຜູ້ທີ່ໄດ້ຮັບການຜ່ອນຜັນ, ເຊິ່ງຕ່າງຈາກກໍລະນີອື່ນ ໆ.

ແລະ ການອິບາດະຫ໌ນັ້ນຈະຕ້ອງມີຫຼັກຖານອ້າງອີງທີ່ຊັດເຈນ, ສະນັ້ນ ບໍ່ອະນຸຍາດໃຫ້ຜູ້ໃດບັນຍັດສິ່ງໃດຂຶ້ນມາໄດ້ ເວັ້ນເສຍແຕ່ຈະມີຫຼັກຖານ, ແລະ ອະນຸຍາດໃຫ້ຜູ້ທີ່ເປັນຕົວແທນຂວ້າງກ້ອນຫີນແທນຕົນເອງ ແລ້ວຈຶ່ງຂວ້າງແທນຜູ້ທີ່ມອບໝາຍໃຫ້ລາວ ໃສ່ເສົາຫີນແຕ່ລະຕົ້ນຈາກສາມຕົ້ນ ໃນຂະນະທີ່ລາວຢືນຢູ່ບ່ອນດຽວກັນ, ແລະ ບໍ່ຈໍາເປັນທີ່ລາວຈະຕ້ອງຂວ້າງເສົາຫີນທັງສາມໃຫ້ຄົບຖ້ວນແທນຕົນເອງກ່ອນ ແລ້ວຈຶ່ງກັບມາຂວ້າງແທນຜູ້ທີ່ມອບໝາຍໃຫ້ລາວ ຕາມທັດສະນະທີ່ຖືກຕ້ອງກວ່າຂອງບັນດາອຸລະມາອ໌; ເນື່ອງຈາກບໍ່ມີຫຼັກຖານທີ່ບັງຄັບໃຫ້ເຮັດເຊັ່ນນັ້ນ, ແລະ ເນື່ອງຈາກໃນການກະທໍາດັ່ງກ່າວນັ້ນມີຄວາມຍຸ້ງຍາກລໍາບາກ, ແລະ ພຣະອົງ ອັລລໍຮ໌ ຊຸບຮານະ ຮູ ວະ

ຕະອາລາ ໄດ້ຊົງດຳລັດວ່າ:

﴿...وَمَا جَعَلَ عَلَيْكُمْ فِي الدِّينِ مِنْ حَرَجٍ...﴾

(...ແລະພຣະອົງບໍ່ໄດ້ຊົງເຮັດໃຫ້ມີຄວາມຍຸ້ງຍາກໃດ ໆ ແກ່ພວກເຈົ້າໃນສາສະນາ...) [ອັລ-ຮັຈ: 78]. ທ່ານນະບີ ﷺ ໄດ້ກ່າວວ່າ:

«يَسِّرُوا وَلَا تُعَسِّرُوا».

«ຈົ່ງອຳນວຍຄວາມສະດວກ ແລະ ຢ່າສ້າງຄວາມລຳບາກ»[1]. ແລະ ເພາະວ່າສິ່ງດັ່ງກ່າວບໍ່ໄດ້ຖືກລາຍງານຈາກບັນດາສໍຫາບະຣ໌ຂອງທ່ານລໍຊູລຂອງອັລລໍຣ໌ ﷺ ໃນຕອນທີ່ພວກເຂົາຂ້າງແທນເດັກນ້ອຍຂອງພວກເຂົາ ແລະ ຜູ້ທີ່ບໍ່ສາມາດໃນໝູ່ພວກເຂົາ, ແລະຫາກພວກເຂົາໄດ້ກະທຳເຊັ່ນນັ້ນ ກໍ່ຍ່ອມທີ່ຈະຖືກລາຍງານໄວ້; ເພາະວ່າມັນເປັນເລື່ອງທີ່ບັນດາຜູ້ຄົນຈະພ້ອມພຽງກັນລາຍງານ, ແລະອັລລໍຣ໌ຊົງຮູ້ດີຍິ່ງ.

## ບົດວ່າດ້ວຍ
## ການບັງຄັບໃຫ້ເຊືອດສັດສຳລັບຜູ້ທີ່ເປັນມຸຕະມັດຕິອ໌ ແລະ ກໍຣິນ

ເປັນຂໍ້ບັງຄັບສຳລັບຜູ້ປະກອບພິທີຫັຈທີ່ປະກອບພິທີແບບຕະມັດຕຸອ໌ ຫຼື ກິຣອນ - ແລະ ຜູ້ທີ່ບໍ່ໄດ້ອາໄສຢູ່ໃນເຂດມັສຍິດອັລຫະຣອມ - ທີ່ຕ້ອງໄດ້ເຊືອດສັດ, ເຊິ່ງໄດ້ແກ່: ແບ້ໜຶ່ງໂຕ, ຫຼືໜຶ່ງສ່ວນເຈັດຂອງອູດ, ຫຼື ໜຶ່ງສ່ວນເຈັດຂອງງົວ. ແລະ ຈຳເປັນທີ່ສັດດັ່ງກ່າວຈະຕ້ອງມາຈາກຊັບສິນທີ່ຫະລາລ ແລະ ລາຍໄ

[1] ບັນທຶກໂດຍ ອັລບຸກໍຣີ, ຈາກຫະດີສຂອງ ອະນັສ (ຂໍໃຫ້ອັລລໍຫ໌ຊົງພໍພຣະໄທຕໍ່ທ່ານ), ເລກທີ່ (69).

ດ້ທີ່ດີງາມ; ເພາະວ່າອົງອັລລໍຫ໌ ຜູ້ຊົງສູງສົ່ງນັ້ນ ຊົງເປັນຜູ້ທີ່ດີງາມ ແລະ ຈະບໍ່ຊົງຮັບສິ່ງໃດ ນອກຈາກສິ່ງທີ່ດີງາມເທົ່ານັ້ນ.

ສົມຄວນຢ່າງຍິ່ງ  ທີ່ມຸສລິມຈະຕ້ອງຮັກສາຕົນເອງຈາກການຂໍຕໍ່ຜູ້ຄົນ ບໍ່ວ່າຈະເປັນຂອງຂວັນ ຫຼື ສິ່ງອື່ນໆ, ບໍ່ວ່າພວກເຂົາຈະເປັນກະສັດ ຫຼື ຜູ້ໃດກໍ່ຕາມ ເມື່ອອັລລໍຫ໌ໄດ້ຊົງເຮັດໃຫ້ລາວມີຊັບສິນທີ່ພຽງພໍແກ່ຕົນເອງ ແລະ ບໍ່ຕ້ອງເພິ່ງພາສິ່ງທີ່ຢູ່ໃນມືຂອງຜູ້ຄົນ; ເນື່ອງຈາກມີລາຍງານໃນຫະດີສຈຳນວນຫຼວງຫຼາຍຈາກທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລັມ ທີ່ກ່າວຕຳໜິ ແລະ ຊີ້ໃຫ້ເຫັນຂໍ້ເສຍຂອງການຮ້ອງຂໍ, ແລະ ຍ້ອງຍໍຜູ້ທີ່ລະເວັ້ນຈາກມັນ.

ຖ້າຫາກຜູ້ທີ່ປະກອບພິທີຫັຈແບບຕະມັດຕຸອ໌ ແລະ ກິ່ຣອນ ບໍ່ສາມາດຫາສັດມາເຊືອດໄດ້, ຈຳເປັນທີ່ລາວຈະຕ້ອງຖືສິນອົດສາມວັນໃນພິທີຫັຈ ແລະ ເຈັດວັນເມື່ອລາວກັບເຖິງຄອບຄົວຂອງລາວ, ແລະ ລາວມີສິດເລືອກໃນການຖືສິນອົດສາມວັນນັ້ນ, ຖ້າລາວປະສົງກໍ່ໃຫ້ຖືສິນອົດກ່ອນວັນນະຫັຣ, ແລະ ຖ້າລາວປະສົງກໍ່ໃຫ້ຖືສິນອົດໃນສາມວັນຕັຊຣີກ, ພຣະອົງຕາອາລາໄດ້ຕັດວ່າ:

﴿...فَمَنْ تَمَتَّعَ بِالْعُمْرَةِ إِلَى الْحَجِّ فَمَا اسْتَيْسَرَ مِنَ الْهَدْيِ فَمَنْ لَمْ يَجِدْ فَصِيَامُ ثَلَاثَةِ أَيَّامٍ فِي الْحَجِّ وَسَبْعَةٍ إِذَا رَجَعْتُمْ تِلْكَ عَشَرَةٌ كَامِلَةٌ ذَلِكَ لِمَنْ لَمْ يَكُنْ أَهْلُهُ حَاضِرِى الْمَسْجِدِ الْحَرَامِ...﴾

ຄວາມວ່າ : (...ດັ່ງນັ້ນ ຜູ້ໃດທີ່ເຮັດອຸມເຣາະຫ໌ຕໍ່ດ້ວຍການເຮັດຫັຈ (ໃນຮູບແບບຕະມັດຕຸອ໌) ກໍໃຫ້ເຊືອດສັດຕາມທີ່ຫາໄດ້ງ່າຍ, ສ່ວນຜູ້ໃດທີ່ຫາບໍ່ໄດ້ເຊືອດ ກໍ່ໃຫ້ຖືສິນອົດສາມວັນໃນຂະນະເຮັດຫັຈ ແລະ ເຈັດວັນເມື່ອພວກເຈົ້າກັບຄືນບ້ານເມືອງ ນັ້

ນແມ່ນສິບວັນຄືນກ່ອນ ຂໍ້ກຳໜົດນີ້ແມ່ນສຳລັບຜູ້ທີ່ຄອບຄົວຂອງລາວບໍ່ໄດ້ອາໄສຢູ່ໃນເຂດມັດສະຍິດອັນຫະຣອມ...)

[ສູເຣາະຫ໌ ອັລ-ບາກໍເຣາະຫ໌: 196]. ອັລ-ອາຍະຫ໌.

ແລະ ໃນສໍເຮັຍຫ໌ ບຸຄໍຣີ, ລາຍງານຈາກທ່ານນາງ ອາອີຊະຫ໌ ແລະ ທ່ານ ອິບນຸ ອຸມັຣ ຣໍດີຍັລລໍຣຸ ອັນຮຸມ ທັງສອງໄດ້ກ່າວວ່າ:

«لَمْ يُرَخَّصْ فِي أَيَّامِ التَّشْرِيقِ أَنْ يُصَمْنَ إِلَّا لِمَنْ لَمْ يَجِدِ الهَدْيَ».

«ບໍ່ໄດ້ຖືກອະນຸຍາດໃຫ້ຖືສິນອົດໃນວັນຕ່າງໆ ຂອງຕັຊຣີກ, ຍົກເວັ້ນຜູ້ໃດທີ່ບໍ່ມີສັດເຊືອດຮັດຍະ»[1], ແລະ ນີ້ຢູ່ໃນສະຖານະດຽວກັບສິ່ງທີ່ສືບທອດມາຈາກທ່ານນະບີ ﷺ, ແລະ ສິ່ງທີ່ປະເສີດກວ່າແມ່ນໃຫ້ຖືສິນອົດສາມມື້ກ່ອນວັນອະຣໍຟະຫ໌, ເພື່ອທີ່ຈະບໍ່ໄດ້ຖືສິນອົດໃນວັນອະຣໍຟະຫ໌; ເພາະວ່າທ່ານນະບີ ຊັລລັລລໍຫຸ ອະໄລຮິ ວະສັລລັມ ໄດ້ຢືນໃນວັນອະຣໍຟະຫ໌ໂດຍບໍ່ໄດ້ຖືສິນອົດ, ແລະ ໄດ້ຫ້າມການຖືສິນອົດໃນວັນອະຣໍຟະຫ໌ທີ່ທົ່ງອະຣໍຟະຫ໌, ແລະ ເພາະວ່າການບໍ່ຖືສິນອົດໃນວັນນັ້ນ ຈະເຮັດໃຫ້ມີກຳລັງໃນການລະນຶກເຖິງອັລລໍຣ໌ ແລະ ການຂໍພອນຫຼາຍຂຶ້ນ, ແລະ ອະນຸຍາດໃຫ້ຖືສິນອົດສາມມື້ທີ່ກ່າວມານັ້ນແບບຕິດຕໍ່ກັນ ຫຼື ແຍກກັນກໍ່ໄດ້, ແລະ ເຊັ່ນດຽວກັນ, ການຖືສິນອົດເຈັດມື້ກໍ່ບໍ່ໄດ້ບັງຄັບໃຫ້ຕ້ອງຕິດຕໍ່ກັນ, ແຕ່ອະນຸຍາດໃຫ້ຖືສິນອົດແບບລວມກັນ ຫຼື ແຍກກັນກໍ່ໄດ້; ເພາະວ່າອັລລໍຫ໌ ຊຸບຮານະຮູ ວະຕະອາລາ ບໍ່ໄດ້ກຳນົດເງື່ອນໄຂໃຫ້ຕ້ອງຕິດຕໍ່ກັນ, ແລະ ເຊັ່ນດຽວກັນກັບທ່ານຣໍຊູລຂອງພະອົງ ຊໍລລັລລໍຫຸ ອະໄລຮິ ວະສັລລັມ, ແລະ ສິ່ງທີ່ປະເສີດກວ່າແມ່ນໃຫ້ເລື່ອນການຖືສິນອົດເຈັດມື້ອອກໄ

---

[1] ບັນທຶກໂດຍອັລບຸກໍຣີ : ເລກທີ່ (1998).

ບ ຈົນກວ່າຈະໄດ້ກັບຄືນໄປຫາຄອບຄົວຂອງຕົນ; ຕາມຄຳດຳລັດຂອງພຣະອົງທີ່ວ່າ:

﴿...وَسَبْعَةٍ إِذَا رَجَعْتُمْ...﴾

(...ແລະ ອີກເຈັດມື້ ເມື່ອພວກເຈົ້າໄດ້ກັບຄືນມາ...)

[ອັລ-ບະກໍເຣາະຫ໌: 196].

ແລະ ການຖືສິນອົດສຳລັບຜູ້ທີ່ບໍ່ມີຄວາມສາມາດໃນການຈັດຫາສັດເຊືອດ ແມ່ນດີກວ່າການໄປຂໍສັດເຊືອດຈາກບັນດາກະສັດ ແລະ ຜູ້ອື່ນໆ ເພື່ອມາເຊືອດແທນຕົນເອງ. ແລະ ຜູ້ໃດທີ່ໄດ້ຮັບສັດເຊືອດ ຫຼື ສິ່ງອື່ນໆ ໂດຍທີ່ບໍ່ໄດ້ຮ້ອງຂໍ ແລະ ບໍ່ໄດ້ສະແດງຄວາມຕ້ອງການອອກມາ ກໍ່ຖືວ່າເປັນທີ່ອະນຸຍາດ, ເຖິງແມ່ນວ່າລາວຈະເປັນຜູ້ທຳຫັຈແທນຄົນອື່ນກໍ່ຕາມ, ກ່າວຄື: ຖ້າຫາກຜູ້ທີ່ມອບໝາຍໃຫ້ລາວເຮັດຫັຈແທນ ບໍ່ໄດ້ກຳນົດເງື່ອນໄຂວ່າລາວຈະຕ້ອງຊື້ສັດເຊືອດຈາກເງິນທີ່ມອບໃຫ້ລາວ. ສ່ວນສິ່ງທີ່ບາງຄົນປະຕິບັດກັນ ໂດຍການໄປຂໍສັດເຊືອດສ່ວນໜຶ່ງຈາກລັດຖະບານ ຫຼື ຈາກແຫຼ່ງອື່ນໆ ໂດຍອ້າງຊື່ຂອງບຸກຄົນຕ່າງໆ ທີ່ລາວກ່າວຂຶ້ນມາທັງໆ ທີ່ລາວເປັນຄົນຂີ້ຕົວະ, ການກະທຳເຊັ່ນນີ້ແມ່ນເປັນສິ່ງຕ້ອງຫ້າມຢ່າງບໍ່ຕ້ອງສົງໄສ; ເພາະມັນເປັນການສະແຫວງຫາຜົນປະໂຫຍດໂດຍການຕົວະ. ຂໍອັລລໍຫ໌ຊົງຄຸ້ມຄອງພວກເຮົາ ແລະ ຊາວມຸສລິມທັງຫຼາຍໃຫ້ພົ້ນຈາກສິ່ງດັ່ງກ່າວດ້ວຍເທີ້ນ.

# ບົດ
# ວ່າດ້ວຍ
# ການເປັນວາຈິບຂອງການສັ່ງໃຊ້ໃຫ້ເຮັດຄວາມດີ ຕໍ່ບັນດາຜູ້ປະກອບພິທີຮັຈ ແລະ ຜູ້ອື່ນໆ

ແລະ ສິ່ງຫນຶ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ເປັນຫນ້າທີ່ບັງຄັບເຫນືອຜູ້ປະກອບພິທີຮັຈ ແລະ ຄົນອື່ນໆ ກໍ່ຄື ການສົ່ງເສີມຄວາມດີ ແລະ ຫ້າມປາມຄວາມຊົ່ວ, ແລະ ການຮັກສາການລະຫມາດທັງ 5 ເວລາໃນຈະມາອະຫ໌, ດັ່ງທີ່ອັລລໍຫ໌ໄດ້ສັ່ງໄວ້ໃນຄໍາພີຂອງພຣະອົງ, ແລະ ຜ່ານຄໍາກ່າວຂອງທ່ານສາສະດາຂອງພຣະອົງ ຂໍຄວາມສັນຕິສຸກຈົ່ງມີແດ່ທ່ານ.

ສ່ວນສິ່ງທີ່ຜູ້ຄົນຈໍານວນຫຼາຍໄດ້ກະທໍາຈາກຊາວມັກກະຫ໌ ແລະ ເມືອງອື່ນໆ ໃນການລະຫມາດຢູ່ເຮືອນ ແລະ ປະລະໃຫ້ມັສຍິດວ່າງເປົ່ານັ້ນ, ຖືເປັນຄວາມຜິດພາດທີ່ຂັດກັບຫລັກຊະຣີອະຫ໌, ສະນັ້ນ ຈຶ່ງຈໍາເປັນຕ້ອງຫ້າມປາມສິ່ງດັ່ງກ່າວ ແລະ ສັ່ງໃຊ້ໃຫ້ຜູ້ຄົນຮັກສາການລະຫມາດຢູ່ທີ່ມັສຍິດ; ເນື່ອງຈາກມີຫຼັກຖານຢືນຢັນຈາກທ່ານນະບີ ສັລລັລລໍຮຸ ອະໄລຮິ ວະສັລລໍາ ວ່າທ່ານໄດ້ກ່າວແກ່ ອິບນຸ ອຸມມິ ມັກຕູມ ຣໍດີຢັລລໍຮຸ ອັນຮຸ ເມື່ອລາວໄດ້ຂໍອະນຸຍາດຈາກທ່ານເພື່ອທີ່ຈະລະຫມາດຢູ່ທີ່ເຮືອນຂອງລາວ; ຍ້ອນວ່າລາວເປັນຄົນຕາບອດ ແລະ ເຮືອນຂອງລາວຢູ່ໄກຈາກມັສຍິດ:

«هَلْ تَسْمَعُ النِّدَاءَ بِالصَّلَاةِ؟ قَالَ: نَعَمْ، قَالَ: فَأَجِبْ».

«ເຈົ້າໄດ້ຍິນສຽງອະຊານບໍ່? ລາວຕອບວ່າ: ໄດ້ຍິນ. ທ່ານຈຶ່ງ

ກ່າວວ່າ: ດັ່ງນັ້ນ ເຈົ້າຈົ່ງຕອບຮັບເຖີດ»[1], ແລະ ໃນອີກລາຍງານໜຶ່ງ:

«لَا أَجِدُ لَكَ رُخْصَةً».

"ຂ້າບໍ່ເຫັນຂໍ້ຜ່ອນຜັນໃດໆ ແກ່ທ່ານ"[2], ແລະ ທ່ານນະບີ ﷺ ໄດ້ກ່າວວ່າ:

«لَقَدْ هَمَمْتُ أَنْ آمُرَ بِالصَّلَاةِ فَتُقَامَ، ثُمَّ آمُرَ رَجُلًا فَيُؤُمَّ النَّاسَ، ثُمَّ أَنْطَلِقَ إِلَى رِجَالٍ لَا يَشْهَدُونَ الصَّلَاةَ فَأُحَرِّقَ عَلَيْهِمْ بُيُوتَهُمْ بِالنَّارِ».

« ແທ້ຈິງ ຂ້ອຍຕັ້ງໃຈທີ່ຈະບັນຊາໃຫ້ດຳລົງການລະຫມາດ, ຫຼັງຈາກນັ້ນກໍ່ບັນຊາ ຊາຍຄົນໜຶ່ງໃຫ້ນຳພາຜູ້ຄົນ, ແລ້ວກໍ່ອອກໄປຫາບັນດາຜູ້ຊາຍທີ່ບໍ່ມາຮ່ວມການລະຫມາດ ແລ້ວຈູດເຮືອນຂອງພວກເຂົາໃສ່ພວກເຂົາດ້ວຍໄຟ»[3], ໃນຫນັງສືຫະດີຊ ສຸນັນຂອງອິບນຸມາຈະຫ໌ ແລະ ອື່ນໆ, ເຊິ່ງເປັນລາຍງານຈາກທ່ານອິບນຸ ອັບບາສ ຣໍດີຍັລລໍຮຸ ອັນຮຸມາ ດ້ວຍສາຍລາຍງານທີ່ຫະສັນ ມີວ່າ ທ່ານນະບີ ﷺ ກ່າວວ່າ:

«مَنْ سَمِعَ النِّدَاءَ فَلَمْ يَأْتِ فَلَا صَلَاةَ لَهُ إِلَّا مِنْ عُذْرٍ».

«ຜູ້ໃດທີ່ໄດ້ຍິນສຽງເອີ້ນ ແລ້ວບໍ່ມາ, ການລະຫມາດຂອງລາວກໍຈະບໍ່ຖືກຕອບຮັບ ເວັ້ນເສຍແຕ່ມີອຸປະສັກ»[4], ແລະ ລາຍງານທີ່ຖືກຕ້ອງຈາກທ່ານມຸສລິມ ຈາກທ່ານອິບນຸ ມັສອູດ ຣໍດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: « ຜູ້ໃດທີ່ປາດຖະໜາທີ່ຈະພົບກັບອັ

---

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (2420) ແລະ ມຸສລິມ, ເລກທີ່ (651).

[2] ບັນທຶກໂດຍມຸສລິມ ຈາກ ອະບີ ຮຸຣອຍຣໍຫ໌ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ, ເລກທີ່ (653).

[3] ບັນທຶກໂດຍ ອະບູ ດາວູດ ເລກທີ່: (552) ຈາກການລາຍງານຂອງ ທ່ານ ອັບດຸລລໍຮ໌ ບິນ ອຸມມີ ມັກຕູມ.

[4] ບັນທຶກໂດຍມຸສລິມ, ເລກທີ່ (654).

ລລໍຮ໌ໃນມື້ອື່ນໃນສະພາບທີ່ເປັນມຸສລິມ, ກໍ່ຈົ່ງຮັກສາການລະ
ຫມາດຕ່າງໆ ເຫຼົ່ານີ້ ບ່ອນທີ່ມີການປະກາດເຊີນຊວນສູ່ມັນ, ເ
ພາະແທ້ຈິງ ອັລລໍຮ໌ໄດ້ຊົງກຳຫນົດບັນດາສຸນນະຫ໌ແຫ່ງການຊີ້
ນຳໃຫ້ແກ່ນະບີຂອງພວກທ່ານ, ແລະ ແທ້ຈິງການລະຫມາດເ
ຫຼົ່ານັ້ນແມ່ນສ່ວນຫນຶ່ງຈາກບັນດາສຸນນະຫ໌ແຫ່ງການຊີ້ນຳ.
ຫາກວ່າພວກທ່ານລະຫມາດໃນເຮືອນຂອງພວກທ່ານ ເຫມືອ
ນດັ່ງທີ່ຜູ້ທີ່ບໍ່ເຂົ້າຮ່ວມຄົນນີ້ລະຫມາດໃນເຮືອນຂອງລາວ, ພ
ວກທ່ານກໍ່ໄດ້ລະຖິ້ມສຸນນະຫ໌ຂອງນະບີຂອງພວກທ່ານແລ້ວ.
ແລະຫາກວ່າພວກທ່ານລະຖິ້ມສຸນນະຫ໌ຂອງນະບີຂອງພວກທ່
ານ, ພວກທ່ານກໍ່ຈະຫລົງທາງຢ່າງແນ່ນອນ. ແລະ ບໍ່ມີຊາຍຄົນ
ໃດທີ່ເຮັດຄວາມສະອາດ ແລະ ເຮັດການຊຳລະລ້າງຢ່າງດີງາມ,
ຫຼັງຈາກນັ້ນກໍ່ມຸ່ງຫນ້າໄປສູ່ມັສຍິດແຫ່ງໃດແຫ່ງຫນຶ່ງຈາກບັນ
ດາມັສຍິດເຫຼົ່ານີ້, ນອກຈາກວ່າອັລລໍຮ໌ຈະຊົງບັນທຶກໃຫ້ແກ່ລາ
ວໃນທຸກໆ ບາດກ້າວທີ່ລາວກ້າວເດີນໄປນັ້ນ ຫນຶ່ງຄວາມດີ, ແ
ລະ ພຣະອົງຈະຊົງຍົກລະດັບຂັ້ນໃຫ້ແກ່ລາວຫນຶ່ງລະດັບຂັ້ນດ້
ວຍກັບມັນ ແລະ ຈະຊົງລົບລ້າງຄວາມຜິດບາບຫນຶ່ງອອກຈາ
ກລາວດ້ວຍກັບມັນ. ແລະ ແທ້ຈິງ ພວກເຮົາໄດ້ເຫັນມາແລ້ວວ່
າ ບໍ່ມີຜູ້ໃດທີ່ຈະຂາດຈາກມັນ ນອກຈາກຜູ້ທີ່ເປັນມຸນາຟິກ ທີ່
ການເປັນມຸນາຟິກຂອງລາວເປັນທີ່ຮູ້ກັນດີ, ແລະ ແທ້ຈິງ ເຄີຍ
ມີຊາຍຄົນຫນຶ່ງທີ່ຖືກນຳຕົວມາ ໂດຍຖືກພະຍຸງລະຫວ່າງຊາຍ
ສອງຄົນ ຈົນກວ່າຈະຖືກນຳໄປຕັ້ງໄວ້ໃນແຖວ »[1].

ຜູ້ປະກອບພິທີຮັຈຫ໌ ແລະ ຜູ້ອື່ນໆ ຈຳເປັນຕ້ອງຫລີກລ່ຽງຈ
າກຂໍ້ຫ້າມຕ່າງໆ ຂອງພຣະອົງອັລລໍຫ໌ ແລະ ລະມັດລະວັງບໍ່ໃຫ້

---

[1] ບັນທຶກໂດຍ ອະບູ ດາວູດ ຈາກການລາຍງານຂອງ ທ່ານ ອິບນຸ ອັບບາສ ຂໍອັລລໍຮ໌ຊົງພໍພຣະໄທຕໍ່ເພິ່ນທັ້ງສອງ ເລກທີ່ (551).

ລະເມີດຂໍ້ຫ້າມເຫລົ່ານັ້ນ; ເຊັ່ນ ການຜິດປະເວນີ, ການມີເພດສໍາພັນທາງທະວານ, ການລັກຂະໂມຍ, ການກິນດອກເບ້ຍ, ການຍຶດເອົາສິນບັດຂອງເດັກກໍາພ້າ, ການສໍ້ໂກງໃນການຊື້ຂາຍ, ການບິດພື້ອໃນສິ່ງທີ່ໄດ້ຮັບຄວາມໄວ້ວາງໃຈ, ການດື່ມສິ່ງມຶນເມົາ, ການສູບຢາ, ການນຸ່ງເຄື່ອງຍາວລາກພື້ນ, ຄວາມເຍີຍິ່ງ, ຄວາມອິດສາ, ການໂອ້ອວດ, ການເວົ້າຈາສຽດສີນິນທາປ້າຍຮ້າຍຜູ້ອື່ນ, ການເຍາະເຍີ້ຍຊາວມຸສລິມ, ແລະ ການໃຊ້ເຄື່ອງດົນຕີເພື່ອຄວາມບັນເທີງ; ເຊັ່ນ ແຜ່ນສຽງ, ເຄື່ອງດົນຕີອູດ, ເຄື່ອງດົນຕີຣະບັບ, ປີ່ຊຸ່ຍ, ແລະ ສິ່ງທີ່ຄ້າຍຄືກັນ, ການຮັບຟັງບົດເພງ ແລະ ເຄື່ອງດົນຕີຈາກວິທະຍຸ ແລະ ສື່ອື່ນໆ, ການຫຼີ້ນໝາກກະລ໊ອກ ແລະ ໝາກກະດານ, ການພົວພັນກັບການພະນັນ, ການສ້າງຮູບພາບສິ່ງທີ່ມີວິນຍານບໍ່ວ່າຈະເປັນມະນຸດ ຫຼື ສິ່ງອື່ນໆ, ແລະ ການພໍໃຈກັບການກະທໍາດັ່ງກ່າວ, ເພາະສິ່ງເຫຼົ່ານີ້ທັງໝົດລ້ວນແຕ່ເປັນສິ່ງທີ່ຊົ່ວຮ້າຍທີ່ພຣະອົງອັລລໍຫ໌ໄດ້ຫ້າມປາມປວງບ່າວຂອງພຣະອົງໃນທຸກເວລາ ແລະ ທຸກສະຖານທີ່, ດັ່ງນັ້ນ ບັນດາຜູ້ປະກອບພິທີຮັຈຫ໌ ແລະ ຜູ້ທີ່ອາໄສຢູ່ໃນບ້ານອັນສັກສິດຂອງອັລລໍຫ໌ ຕ້ອງລະມັດລະວັງຈາກສິ່ງເຫລົ່ານີ້ຫລາຍກວ່າຄົນອື່ນ; ເພາະວ່າການຝ່າຝືນໃນເມືອງທີ່ປອດໄພແຫ່ງນີ້ບາບຂອງມັນນັ້ນໜັກໜ່ວງກວ່າ ແລະ ການລົງໂທດກໍ່ຍິ່ງໃຫຍ່ກວ່າ.

ແລະ ແທ້ຈິງ ອັລລໍຫ໌ ໄດ້ກ່າວວ່າ:

﴿...وَمَنْ يُرِدْ فِيهِ بِإِلْحَادٍ بِظُلْمٍ نُذِقْهُ مِنْ عَذَابٍ أَلِيمٍ﴾

(...ແລະ ຜູ້ໃດທີ່ປາດຖະນາຝ່າຝືນໃນນັ້ນດ້ວຍການອະທໍາ, ເຮົາຈະໃຫ້ເຂົາໄດ້ລີ້ມລົດຈາກການລົງໂທດອັນເຈັບແສບ) [ອັລ-ຮັຈ : 25], ສະນັ້ນ ຫາກວ່າອັລລໍຫ໌ໄດ້ຊົງຄາດໂທດຜູ້ທີ່ມີເຈດ

ຕະນາທີ່ຈະກະທຳຄວາມອະທຳໃນເຂດຫະຣອມ, ແລ້ວການລົງໂທດຂອງຜູ້ທີ່ໄດ້ກະທຳມັນຈະເປັນແນວໃດ?! ບໍ່ຕ້ອງສົງໄສເລີຍວ່າມັນຍິ່ງໃຫຍ່ກວ່າ ແລະ ຮ້າຍແຮງກວ່າ, ດັ່ງນັ້ນ ຈຳເປັນຕ້ອງລະມັດລະວັງຈາກສິ່ງດັ່ງກ່າວ ແລະ ຈາກການຝ່າຝືນທັງປວງ.

ບັນດາຜູ້ປະກອບພິທີຮັຈ ຈະບໍ່ໄດ້ຮັບຄວາມດີງາມຂອງພິທີຮັຈ ແລະ ການອະໄພໂທດຈາກບາບຕ່າງໆ ເວັ້ນເສຍແຕ່ດ້ວຍການລະວັງຕົນຈາກການກະທຳບາບເຫຼົ່ານີ້ ແລະ ບາບອື່ນໆທີ່ອັລລໍຮ໌ໄດ້ຊົງຫ້າມພວກເຂົາ, ດັ່ງທີ່ກ່າວໄວ້ໃນຫະດີຊຈາກທ່ານນະບີ ﷺ ວ່າ:

«مَنْ حَجَّ فَلَمْ يَرْفُثْ وَلَمْ يَفْسُقْ رَجَعَ كَيَوْمِ وَلَدَتْهُ أُمُّهُ».

« ຜູ້ໃດເຮັດພິທີຫັຈ ໂດຍບໍ່ເວົ້າຈາລາມົກ (ເວົ້າບໍ່ດີ ຈົມ) ແລະ ບໍ່ເຮັດບາບ ລາວຈະກັບມາຈາກຫັຈ ປຽບດັ່ງຫາກໍ່ເກີດອອກຈາກທ້ອງແມ່ »[1].

ແລະ ສິ່ງທີ່ຮ້າຍແຮງ ແລະ ໃຫຍ່ຫລວງກວ່າບັນດາສິ່ງທີ່ຊົ່ວຊ້າເຫຼົ່ານີ້ຄື: ການວິງວອນຂໍຕໍ່ຄົນຕາຍ, ການຂໍຄວາມຊ່ວຍເຫລືອຈາກພວກເຂົາ, ການສາບານຕໍ່ພວກເຂົາ, ແລະ ການຂ້າສັດເພື່ອຖະວາຍແກ່ພວກເຂົາ; ໂດຍຫວັງວ່າພວກເຂົາຈະເປັນສື່ກາງຂໍຕໍ່ອັລລໍຫ໌ໃຫ້ແກ່ຜູ້ທີ່ວິງວອນຕໍ່ພວກເຂົາ, ຫຼື ເຮັດໃຫ້ຄົນປ່ວຍຂອງລາວຫາຍດີ ຫຼື ເຮັດໃຫ້ຜູ້ທີ່ຫ່າງໄກຂອງລາວໄດ້ກັບຄືນມາ ແລະ ສິ່ງອື່ນໆ ທີ່ຄ້າຍຄືກັນນີ້.

ແລະ ນີ້ເປັນສ່ວນໜຶ່ງຂອງຊີຣິກໃຫຍ່ທີ່ອັລລໍຫ໌ໄດ້ຊົງຫ້າມ,

---

[1] ບັນທຶກໂດຍ ອັລບຸກໍຄໍຣີ, ເລກທີ່ (1521) ແລະ ມຸສລິມ, ເລກທີ່ (1350), ຈາກຫະດີສຂອງ ອະບີ ຮຸຣອຍເຣາະຫ໌ ຂໍໃຫ້ອັລລໍຣຸຊົງພໍພຣະໄທເພິ່ນ.

ເຊິ່ງມັນຄືສາສະໜາຂອງບັນດາຜູ້ຕັ້ງພາຄີໃນສະໄໝຈາຮິລີຍະຫ໌, ແລະ ອັລລໍຫ໌ໄດ້ສົ່ງບັນດາຣໍຊູລ ແລະ ໄດ້ປະທານບັນດາຄຳພີລົງມາ ກໍເພື່ອປະຕິເສດ ແລະ ຫ້າມປາມຈາກມັນ.

ສະນັ້ນ ຈຶ່ງເປັນໜ້າທີ່ ທີ່ຈຳເປັນຂອງທຸກໆ ຄົນ ບໍ່ວ່າຈະເປັນຜູ້ປະກອບພິທີຮັຈ ຫຼື ຄົນອື່ນໆ ທີ່ຈະຕ້ອງລະມັດລະວັງຈາກມັນ, ແລະ ຕ້ອງເຕົາບະຫ໌ຕໍ່ອັລລໍຫ໌ຈາກສິ່ງດັ່ງກ່າວ ຖ້າຫາກວ່າຕົນເຄີຍໄດ້ກະທຳມັນມາແລ້ວ, ແລະ ໃຫ້ເລີ່ມຕົ້ນປະກອບພິທີຮັຈຄັ້ງໃໝ່ ຫຼັງຈາກທີ່ໄດ້ເຕົາບະຫ໌ແລ້ວ; ເພາະວ່າການຊີຣິກທີ່ໃຫຍ່ທີ່ສຸດນັ້ນຈະລົບລ້າງການງານທັງໝົດ, ດັ່ງທີ່ອັລລໍຫ໌ ໄດ້ຊົງດຳລັດໄວ້ວ່າ:

﴿...وَلَوْ أَشْرَكُوا لَحَبِطَ عَنْهُم مَّا كَانُوا يَعْمَلُونَ﴾

ຄວາມໝາຍວ່າ : (...ແລະ ຖ້າຫາກພວກເຂົາໄດ້ຕັ້ງພາຄີຂຶ້ນ ແນ່ນອນສິ່ງທີ່ພວກເຂົາໄດ້ກະທຳກັນ ກໍ່ຈະສູນເສຍໄປຈາກພວກເຂົາ ) [ອັລ-ອັນອາມ: 88].

ແລະ ຫນຶ່ງໃນບັນດາປະເພດຂອງຊີຣິກນ້ອຍແມ່ນ: ການສາບານດ້ວຍນາມອື່ນນອກຈາກອັລລໍຫ໌; ເຊັ່ນ ການສາບານຕໍ່ທ່ານນະບີ ﷺ, ຕໍ່ກະບະຫ໌, ຕໍ່ອະມານະຫ໌ ແລະ ອື່ນໆເປັນຕົ້ນ.

ແລະ ຈາກຕົວຢ່າງເຊັ່ນ: ອັລຮິຍາອ໌ ແລະ ອັສຊຸມອະຫ໌, ແລະ ການກ່າວວ່າ ສິ່ງທີ່ອັລລໍຫ໌ປະສົງ ແລະ ທ່ານປະສົງ, ແລະ ຖ້າບໍ່ແມ່ນເພາະອັລລໍຫ໌ ແລະ ທ່ານ, ແລະ ສິ່ງນີ້ມາຈາກອັລລໍຫ໌ ແລະ ຈາກທ່ານ, ແລະ ສິ່ງທີ່ຄ້າຍຄືກັບນີ້.

ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງລະມັດລະວັງຈາກບັນດາຄວາມຊົ່ວຮ້າຍທີ່ເປັນການຕັ້ງພາຄີເຫຼົ່ານີ້, ແລະ ຕັກເຕືອນຊຶ່ງກັນແລະກັນໃຫ້ລະຖິ້ມມັນ; ເພາະວ່າໄດ້ມີການຢືນຢັນຈາກທ່ານນະບີ ﷺ ທ່ານໄດ້ກ່າວວ່າ:

«مَنْ حَلَفَ بِغَيْرِ اللهِ فَقَدْ كَفَرَ أَوْ أَشْرَكَ».

“ຜູ້ໃດກໍຕາມທີ່ໄດ້ສາບານດ້ວຍນາມອື່ນນອກຈາກອັລລໍຮ໌ ເຂົາຜູ້ນັ້ນໄດ້ຕົກເປັນຜູ້ປະຕິເສດສັດທາແລ້ວ ຫຼື ໄດ້ຕັ້ງພາຄີຕໍ່ພຣະອົງອັລລໍຮ໌ແລ້ວ”[1] ບັນທຶກໂດຍ ທ່ານອະຫ໌ມັດ, ທ່ານອາບຸດາວູດ ແລະ ທ່ານຕິຣມີຊີ ດ້ວຍສາຍລາຍງານທີ່ໜ້າເຊື່ອຖື ແລະ ເຊື່ອຖືໄດ້.

ແລະ ໃນລາຍງານທີ່ຊໍເຮັຍຫ໌ ຈາກທ່ານອຸມັຣ ຣໍດີຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: ທ່ານຣໍຊູລ ﷺ ໄດ້ກ່າວວ່າ:

«مَنْ كَانَ حَالِفًا فَلْيَحْلِفْ بِاللهِ أَوْ لِيَصْمُتْ».

«ຜູ້ໃດກໍຕາມທີ່ຈະສາບານ ກໍ່ໃຫ້ເຂົາສາບານດ້ວຍນາມຂອງອັລລໍຮ໌ ຫຼື ໃຫ້ເຂົານິ່ງເສີຍ»[2]. ແລະ ທ່ານນະບີ ﷺ ໄດ້ກ່າວອີກວ່າ:

«مَنْ حَلَفَ بِالأَمَانَةِ فَلَيْسَ مِنَّا».

«ຜູ້ໃດທີ່ສາບານດ້ວຍອະມານະຫ໌ ກໍ່ບໍ່ແມ່ນພວກຂອງເຮົາ»[3]. ບັນທຶກໂດຍ ອາບູດາວູດ.

ແລະ ທ່ານນາບີ ﷺ ຫຍັງໄດ້ກ່າວໄວ້ອີກວ່າ:

«أَخْوَفُ مَا أَخَافُ عَلَيْكُمُ الشِّرْكَ الأَصْغَرَ، فَسُئِلَ عَنْهُ فَقَالَ: الرِّيَاءُ».

“ສິ່ງທີ່ຂ້ອຍຢ້ານທີ່ສຸດສຳຫລັບພວກເຈົ້າຄື ຊີຣົກ -ອັສຂົອຍຣ (ການຕັ້ງພາຄີຊ້ອນເລັ້ນ) ທັນໃດນັ້ນມີຜູ້ຫນຶ່ງຖາມຂຶ້ນວ່າມັນແມ່ນຫຍັງ? ທ່ານນະບີ ມຸຮຳມັດ ຊໍລລັລລໍຮູ ອະໄລຮິ ວະຊັ

---

[1] ບັນທຶກໂດຍ ອະບູ ດາວູດ ເລກທີ່ (3251).
[2] ບັນທຶກໂດຍ ອະບູ ດາວູດ ເລກທີ່ (3253).
[3] ບັນທຶກໂດຍ ອັລບຸກໍອຣີ, ເລກທີ່ (2679) ແລະ ມຸສລິມ, ເລກທີ່ (1646).

ລວັມ ໄດ້ຕອບວ່າ : ອັຣ-ຣິຍາ (ການເຮັດເພື່ອໂອ້ອວດ)[1]. ແລະ ທ່ານນະບີ ﷺ ກ່າວວ່າ:

«لَا تَقُولُوا: مَا شَاءَ اللهُ وَشَاءَ فُلَانٌ، وَلَكِنْ قُولُوا مَا شَاءَ اللهُ ثُمَّ شَاءَ فُلَانٌ».

"ພວກເຈົ້າຈົ່ງຢ່າກ່າວຊື່ອັລລໍຫ໌ຄວບຄູ່ກັບຊື່ຜູ້ອື່ນວ່າ : ນີ້ຄືສິ່ງທີ່ອັລລໍຮ໌ ແລະ ຄົນໆ ນັ້ນຕ້ອງການໃຫ້ເກີດ, ແຕ່ຈົ່ງເວົ້າວ່າ: ນີ້ຄືສິ່ງທີ່ອັລລໍຫ໌ຊົງປະສົງໃຫ້ເກີດ ແລ້ວຄົນຄົນນັ້ນກໍ່ຕ້ອງການໃຫ້ເກີດເຊັ່ນດຽວກັນ"[2]. ບັນທຶກໂດຍ ອັນ-ນະຊາອີ, ຈາກທ່ານ ອິບນຸ ອັບບາສ ຂໍອັລລໍຮ໌ຊົງພໍພຣະໄທເພິ່ນທັງສອງ ວ່າ: ມີຊາຍຄົນໜຶ່ງໄດ້ກ່າວວ່າ: "ໂອ້ ທ່ານຣໍຊູລຂອງອັລລໍຮ໌, ນີ້ຄືສິ່ງທີ່ອັລລໍຮ໌ ແລະ ທ່ານ ປະສົງໃຫ້ເກີດ", ແລ້ວທ່ານນະບີຈຶ່ງກ່າວວ່າ:

«أَجَعَلْتَنِي لِلَّهِ نِدًّا، بَلْ مَا شَاءَ اللهُ وَحْدَهُ».

"ເຈົ້າຕັ້ງຂ້ອຍເປັນພາຄີຕໍ່ອັລລໍຫ໌ບໍ? ຫາກແຕ່ຄວາມປະສົງນັ້ນເປັນຂອງອັລລໍຫ໌ພຽງອົງດຽວເທົ່ານັ້ນ."[3]

ແລະ ຫະດີຊເຫຼົ່ານີ້ ຊີ້ໃຫ້ເຫັນເຖິງການປົກປ້ອງຫຼັກເຕົາຮີດຂອງທ່ານນະບີ ﷺ, ແລະ ການຕັກເຕືອນປະຊາຊາດຂອງທ່ານຈາກການຕັ້ງພາຄີໃຫຍ່ ແລະ ນ້ອຍ, ແລະ ຄວາມເອົາໃຈໃສ່ຂອງທ່ານຕໍ່ຄວາມປອດໄພໃນການສັດທາຂອງພວກເຂົາ ແລະ ໂດຍພວກເຂົາຮອດພົ້ນຈາກການລົງໂທດຂອງອັລລໍຫ໌ ແລະ ຈາກບັນດາສາເຫດແຫ່ງຄວາມໂກດກ້ຽວຂອງພຣະອົງ, ຂໍອັລລໍຫ໌ຊົງຕອບແທນທ່ານສໍາລັບສິ່ງດັ່ງກ່າວດ້ວຍການຕອບແທນອັ

---

1 ບັນທຶກໂດຍ ທ່ານອະຫ໌ມັດ ເລກທີ (5/428).

2 ບັນທຶກໂດຍ ອະບູ ດາວູດ ເລກທີ່ (4980).

3 ບັນທຶກໂດຍ ທ່ານອິບນຸ ມາຈະຫ໌ ເລກທີ່ (2117).

ນດີເລີດທີ່ສຸດ, ເພາະແທ້ຈິງແລ້ວ ທ່ານໄດ້ເຜີຍແຜ່ ແລະ ໄດ້ຕັກເຕືອນ, ແລະ ໄດ້ໃຫ້ຄຳຊີ້ແນະອັນຈິງໃຈເພື່ອອັລລໍຫ໌ ແລະ ເພື່ອປວງບ່າວຂອງພຣະອົງ, ທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະຊັລລໍາ ຂໍຄວາມເມດຕາ ແລະ ສັນຕິສຸກຈົ່ງປະສົບແດ່ທ່ານຢ່າງຕໍ່ເນື່ອງຈົນເຖິງວັນແຫ່ງການຕອບແທນ.

ແລະ ເປັນໜ້າທີ່ທີ່ຈຳເປັນສຳຫຼັບບັນດາຜູ້ມີຄວາມຮູ້ ຈາກກຸ່ມຜູ້ປະກອບພິທີຮັຈ ແລະ ຜູ້ທີ່ອາໄສຢູ່ໃນນະຄອນອັນປອດໄພຂອງອັລລໍຫ໌ ແລະ ໃນນະຄອນຂອງທ່ານຮໍຊູລຜູ້ຊົງກຽດ , ທີ່ຕ້ອງສັ່ງສອນປວງຊົນໃນສິ່ງທີ່ອັລລໍຫ໌ໄດ້ບັນຍັດໄວ້ໃຫ້ແກ່ພວກເຂົາ, ແລະ ເຕືອນພວກເຂົາຈາກສິ່ງທີ່ອັລລໍຫ໌ໄດ້ຫ້າມພວກເຂົາ ຈາກການຕັ້ງພາຄີ ແລະ ການຝ່າຝືນປະເພດຕ່າງໆ, ແລະ ຕ້ອງຊີ້ແຈງເລື່ອງດັ່ງກ່າວພ້ອມດ້ວຍຫຼັກຖານ, ແລະ ອະທິບາຍມັນຢ່າງກະຈ່າງແຈ້ງ ແລະ ຄົບຖ້ວນ; ເພື່ອທີ່ຈະນຳພາປວງຊົນອອກຈາກຄວາມມືດມົນສູ່ຄວາມສະຫວ່າງ, ແລະ ເພື່ອທີ່ພວກເຂົາຈະໄດ້ປະຕິບັດໃນສິ່ງທີ່ອັລລໍຫ໌ໄດ້ກຳຫນົດເປັນຂໍ້ບັງຄັບແກ່ພວກເຂົາ ໃນການເຜີຍແຜ່ ແລະ ການຊີ້ແຈງ, ດັ່ງທີ່ອັລລໍຫ໌ ຜູ້ຊົງມະຫາບໍລິສຸດ ໄດ້ກ່າວໄວ້ວ່າ:

﴿وَإِذْ أَخَذَ اللَّهُ مِيثَاقَ الَّذِينَ أُوتُوا الْكِتَابَ لَتُبَيِّنُنَّهُ لِلنَّاسِ وَلَا تَكْتُمُونَهُ...﴾

(ແລະ ຈົ່ງລຳລຶກເຖິງຂະນະທີ່ອົງອັລລໍຫ໌ໄດ້ເອົາຄຳຫມັ້ນສັນຍາຈາກບັນດາຜູ້ທີ່ໄດ້ຮັບຄຳພີວ່າ ແນ່ນອນພວກເຈົ້າຈະຕ້ອງຊີ້ແຈງມັນແກ່ມະນຸດຊາດ ແລະ ຈະບໍ່ປິດບັງມັນ...)

[ອະລາ ອິມຣອນ: 187].

ແລະ ຈຸດປະສົງຂອງສິ່ງນັ້ນຄື: ເພື່ອຕັກເຕືອນບັນດານັກວິຊາການຂອງປະຊາຊາດນີ້ ຈາກການເດີນຕາມແນວທາງຂອງບັນດາຜູ້ອະທຳໃນໝູ່ຊາວຄຳພີ ໃນການປົກປິດຄວາມຈິງ, ໂດ

ຍເລືອກເອົາຊີວິດໃນໂລກນີ້ແທນໂລກໜ້າ, ແລະ ພຣະອົງ ຜູ້ຊົງສູງສົ່ງ ໄດ້ຕຣັດວ່າ:

﴿إِنَّ الَّذِينَ يَكْتُمُونَ مَا أَنْزَلْنَا مِنَ الْبَيِّنَاتِ وَالْهُدَى مِنْ بَعْدِ مَا بَيَّنَّاهُ لِلنَّاسِ فِي الْكِتَابِ أُولَئِكَ يَلْعَنُهُمُ اللَّهُ وَيَلْعَنُهُمُ اللَّاعِنُونَ ۝١٥٩ إِلَّا الَّذِينَ تَابُوا وَأَصْلَحُوا وَبَيَّنُوا فَأُولَئِكَ أَتُوبُ عَلَيْهِمْ وَأَنَا التَّوَّابُ الرَّحِيمُ ۝١٦٠﴾

(ແທ້ຈິງ ບັນດາຜູ້ທີ່ປິດບັງສິ່ງທີ່ເຮົາໄດ້ປະທານລົງມາ ຈາກບັນດາຫຼັກຖານອັນຊັດເຈນ ແລະ ທາງນຳ ຫຼັງຈາກທີ່ເຮົາໄດ້ຊີ້ແຈງມັນຢ່າງຊັດເຈນແລ້ວແກ່ບັນດາມະນຸດໃນຄຳພີ ຊົນເຫຼົ່ານັ້ນແຫລະ ອັລລໍຫ໌ຈະຊົງສາບແຊ່ງພວກເຂົາ ແລະ ບັນດາຜູ້ສາບແຊ່ງກໍຈະສາບແຊ່ງພວກເຂົາ )

(ນອກຈາກບັນດາຜູ້ທີ່ກັບໂຕ, ແລະ ປັບປຸງແກ້ໄຂ, ແລະ ຊີ້ແຈງ (ຄວາມຈິງ), ດັ່ງນັ້ນ ຊົນເຫຼົ່ານັ້ນ ຂ້າຈະຮັບການກັບໂຕຂອງພວກເຂົາ ແລະ ຂ້າແມ່ນຜູ້ຊົງຮັບການກັບໂຕ, ຜູ້ຊົງເມດຕາສະເໝີ) [ອັລ-ບະກໍເຣາະຫ໌: 159-160]. ບັນດາອາຍາຕໃນຄຳພີອັລກຸຣອານ ແລະ ບັນດາອະຈະນະຂອງທ່ານສາດສະດາ ໄດ້ຊີ້ໃຫ້ເຫັນວ່າ ການເຊີນຊວນໄປສູ່ອັລລໍຫ໌ ແລະ ການຊີ້ແນະນຳປວງບ່າວຂອງພຣະອົງໄປສູ່ເປົ້າໝາຍທີ່ພວກເຂົາຖືກບັງເກີດມານັ້ນ ແມ່ນການກະທຳທີ່ປະເສີດທີ່ສຸດ ແລະ ເປັນໜ້າທີ່ອັນສຳຄັນທີ່ສຸດ, ແລະ ແທ້ຈິງແລ້ວມັນຄືແນວທາງຂອງບັນດາຣໍຊູລ ແລະ ຜູ້ຈະເລີນຮອຍຕາມພວກທ່ານຈົນເຖິງວັນສິ້ນໂລກ, ດັ່ງທີ່ອັລລໍຫ໌ ຜູ້ຊົງສູງສົ່ງ ໄດ້ຕຣັດໄວ້ວ່າ:

﴿وَمَنْ أَحْسَنُ قَوْلًا مِمَّنْ دَعَا إِلَى اللَّهِ وَعَمِلَ صَالِحًا وَقَالَ إِنَّنِي مِنَ الْمُسْلِمِينَ ۝٣٣﴾

(ແລະ ຜູ້ໃດເລົ່າຈະມີຄຳເວົ້າທີ່ດີເລີດຍິ່ງກວ່າຜູ້ທີ່ເຊີນຊວນໄປສູ່ອັລລໍຫ໌ ແລະ ປະຕິບັດຄວາມດີ ແລະ ກ່າວວ່າ ແທ້ຈິງຂ້

ອຍເປັນຄົນໜຶ່ງໃນບັນດາຜູ້ນອບນ້ອມ) [ສູເຣາະຫ໌ : ຟຸສສິລັດ: 33] ແລະ ພຣະຜູ້ຊົງເດຊານຸພາບໄດ້ກ່າວວ່າ:

﴿قُلْ هَذِهِ سَبِيلِي أَدْعُو إِلَى اللَّهِ عَلَى بَصِيرَةٍ أَنَا وَمَنِ اتَّبَعَنِي وَسُبْحَانَ اللَّهِ وَمَا أَنَا مِنَ الْمُشْرِكِينَ ۝١٠٨﴾

(ຈົ່ງກ່າວເຖີດມຸຮຳມັດ: ນີ້ຄືແນວທາງຂອງຂ້ອຍ, ຂ້ອຍເຊີນຊວນໄປສູ່ອັລລໍຫ໌ ດ້ວຍຄວາມຮູ້ອັນແຈ້ງຊັດ, ທັ້ງຕົວຂ້ອຍ ແລະ ບັນດາຜູ້ທີ່ປະຕິບັດຕາມຂ້ອຍ. ແລະ ມະຫາບໍລິສຸດແດ່ອັລລໍຫ໌, ແລະ ຂ້ອຍບໍ່ແມ່ນຜູ້ໜຶ່ງໃນໝູ່ຊົນຜູ້ຕັ້ງພາຄີ.)

[ຢູຊຸຟ: 108].

ທ່ານນະບີ ﷺ ໄດ້ກ່າວວ່າ:

«مَنْ دَلَّ عَلَى خَيْرٍ فَلَهُ مِثْلُ أَجْرِ فَاعِلِهِ».

«ຜູ້ໃດທີ່ຊີ້ແນະສູ່ຄວາມດີ ລາວກໍ່ຈະໄດ້ຮັບຄວາມດີເທົ່າກັບຜູ້ທີ່ກະທຳຄວາມດີນັ້ນ»[1]

«لَأَنْ يَهْدِيَ اللهُ بِكَ رَجُلًا وَاحِدًا خَيْرٌ لَكَ مِنْ حُمْرِ النَّعَمِ».

«ການທີ່ອັລລໍຫ໌ຊົງນຳທາງຜູ້ຊາຍຄົນໜຶ່ງຜ່ານໂຕເຈົ້າ ຍ່ອມດີສຳລັບເຈົ້າ ຫຼາຍກວ່າຝູງອູດສີແດງ»[2] ແລະ ໂອງການ ແລະ ຫະດີຊຕ່າງ ໆ ທີ່ມີຄວາມໝາຍທຳນອງນີ້ ມີຢູ່ຫຼວງຫຼາຍ.

ດັ່ງນັ້ນ ຈຶ່ງສົມຄວນຢ່າງຍິ່ງແກ່ບັນດາຜູ້ມີຄວາມຮູ້ ແລະ ມີຄວາມສັດທາອີມານ ທີ່ຈະເພີ່ມທະວີຄວາມພະຍາຍາມຂອງພວກເຂົາໃນການຮຽກຮ້ອງເຊີນຊວນໄປສູ່ອັລລໍຫ໌ ຜູ້ຊົງສູງສົ່ງ, ແລະ ການຊີ້ແນະນຳພາບວງບ່າວໄປສູ່ບັນດາສາເຫດແຫ່ງຄວ

[1] ບັນທຶກໂດຍມຸສລິມ, ເລກທີ່ (1893).

[2] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (3009) ແລະ ມຸສລິມ, ເລກທີ່ (2406).

າມລອດພົ້ນ, ແລະ ການເຕືອນໄພພວກເຂົາຈາກບັນດາສາເຫ
ດແຫ່ງຄວາມຈິບຫາຍ, ໂດຍສະເພາະຢ່າງຍິ່ງໃນຍຸກສະໄໝນີ້
ທີ່ບັນດາອະລົມໃຝ່ຕ່ຳໄດ້ຄອບງຳ, ແລະ ບັນດາຫຼັກການທີ່ສ້າງ
ຄວາມເສຍຫາຍ ແລະ ຄຳຂວັນທີ່ຫຼອກລວງໄດ້ແຜ່ກະຈາຍ, ໃ
ນຂະນະທີ່ຜູ້ຮຽກຮ້ອງໄປສູ່ທາງທີ່ຖືກຕ້ອງມີຈຳນວນນ້ອຍລົງ
ແລະ ຜູ້ຮຽກຮ້ອງໄປສູ່ການປະຕິເສດພຣະເຈົ້າ ແລະ ລັດທິເສລີ
ນິຍົມມີຈຳນວນຫຼາຍຂຶ້ນ, ດັ່ງນັ້ນ ຂໍອັລລໍຫ໌ຈົ່ງຊ່ວຍເຫລືອດ້ວ
ຍເຖີດ, ແລະ ບໍ່ມີພະລັງອຳນາດໃດໆ ເວັ້ນແຕ່ດ້ວຍການຊ່ວຍເ
ຫຼືອຂອງອັລລໍຫ໌ ຜູ້ຈົງສູງສົ່ງ ຜູ້ຈົງຍິ່ງໃຫຍ່.

## ບົດວ່າດ້ວຍ
## ການສົ່ງເສີມໃຫ້ເພີ່ມພູນການເຊື່ອຟັງ
## (ຕໍອັດຕໍ່ພຣະເຈົ້າ)

ແລະ ເປັນທີ່ສົ່ງເສີມສຳລັບບັນດາຜູ້ປະກອບພິທີຮັຈ ໃຫ້ຫ
ມັ່ນຢູ່ກັບການລະນຶກເຖິງອັລລໍຫ໌, ການເຊື່ອຟັງພຣະອົງ ແລະ
ການປະກອບຄຸນງາມຄວາມດີ ຕະຫລອດໄລຍະເວລາທີ່ພວກເ
ຂົາພຳນັກຢູ່ມັກກະຫ໌, ແລະ ໃຫ້ເພີ່ມພູນການລະຫມາດ ແລະ ເ
ຮັດການຕໍວາຟຮອບບ້ານຂອງພຣະອົງ; ເນື່ອງຈາກຜົນບຸນໃ
ນເຂດຫະຣອມຈະຖືກເພີ່ມທະວີຄູນ, ແລະ ບາບກຳໃນສະຖານ
ທີ່ດັ່ງກ່າວກໍ່ເປັນສິ່ງທີ່ຫນັກຫນ່ວງ ແລະ ຮ້າຍແຮງ, ເຊັ່ນດຽວ
ກັນ, ເປັນທີ່ສົ່ງເສີມສຳລັບພວກເຂົາ ໃຫ້ເພີ່ມພູນການກ່າວສັ
ນລະເສີນ ແລະ ອວຍພອນແກ່ທ່ານຣໍຊູລຂອງອັລລໍຫ໌ ຊໍລັລລໍ
ຮໍຮຸ ອະໄລຮິ ວະສັລລັມ.

ເມື່ອບັນດາຜູ້ປະກອບພິທີຮັຈຍ໌ຕ້ອງການເດີນທາງອອກຈ
າກມັກກະຫ໌, ເປັນການບັງຄັບເໜືອພວກເຂົາທີ່ຈະຕ້ອງເຮັດ
ການຕໍວາຟວະດາອ໌ (ຕໍວາຟອຳລາ) ທີ່ໄບຕຸລລໍຮ໌; ເພື່ອໃຫ້ເປັ

ນການກະທຳສຸດທ້າຍຂອງພວກເຂົາທີ່ໄປຕຸລວໍຣ໌, ຍົກເວັ້ນແມ່ຍິງທີ່ມີປະຈຳເດືອນ ແລະ ແມ່ຍິງທີ່ມີເລືອດຫຼັງເກີດລູກ, ໂດຍພວກນາງທັ້ງສອງປະເພດບໍ່ຈຳເປັນຕ້ອງເຮັດ; ເນື່ອງຈາກຫະດີຊຂອງ ທ່ານອິບນຸ ອັບບາສ, ຂໍອັລລໍຫ໌ ຊົງພໍພຣະໄທຕໍ່ເພິ່ນທັ້ງສອງ, ທີ່ໄດ້ກ່າວວ່າ:

«أُمِرَ النَّاسُ أَنْ يَكُونَ آخِرُ عَهْدِهِمْ بِالبَيْتِ، إِلَّا أَنَّهُ خُفِّفَ عَنِ المَرْأَةِ الحَائِضِ».

«ໄດ້ຖືກສັ່ງໃຊ້ແກ່ຜູ້ສັດທາໃຫ້ເຮັດການອຳລາ (ວະດາ) ທີ່ບ້ານຂອງອັລລໍຫ໌ເປັນສິ່ງສຸດທ້າຍກ່ອນອອກເດີນທາງ, ເວັ້ນແຕ່ວ່າໄດ້ມີການຜ່ອນຜັນໃຫ້ແກ່ແມ່ຍິງທີ່ມີປະຈຳເດືອນ»[1]

ເມື່ອໄດ້ສຳເລັດຈາກການອຳລາບ້ານຂອງອັລລໍຫ໌ ແລະ ຕ້ອງການອອກຈາກມັສຍິດ, ກໍໃຫ້ເດີນໜ້າອອກໄປຕາມປົກກະຕິ, ແລະ ບໍ່ສົມຄວນທີ່ລາວຈະເດີນຖອຍຫຼັງ; ເພາະວ່າສິ່ງດັ່ງກ່າວບໍ່ມີການລາຍງານມາຈາກທ່ານນະບີ ﷺ ແລະ ບໍ່ມີຈາກບັນດາສໍຫາບະຣ໌ຂອງເພິ່ນ, ແຕ່ທວ່າມັນເປັນໜຶ່ງໃນບັນດາບິດອະຫ໌ທີ່ຖືກປະດິດຂຶ້ນໃໝ່, ແລະ ທ່ານນະບີ ﷺ ໄດ້ກ່າວວ່າ:

«مَنْ عَمِلَ عَمَلًا لَيْسَ عَلَيْهِ أَمْرُنَا فَهُوَ رَدٌّ».

«ໃຜກໍ່ຕາມທີ່ເຮັດສິ່ງອື່ນ ໃນກິດຈະການສາດສະໜາທີ່ເຮົາບໍ່ໄດ້ສັ່ງໃຊ້ ດັ່ງນັ້ນກິດຈະການນັ້ນຍ່ອມຖືກປະຕິເສດ (ບໍ່ຖືກຕອບຮັບຈາກອັລລໍຫ໌)»[2]. ແລະ ທ່ານນາບີ ﷺ ກ່າວວ່າ:

«إِيَّاكُمْ وَمُحْدَثَاتِ الأُمُورِ، فَإِنَّ كُلَّ مُحْدَثَةٍ بِدْعَةٌ، وَكُلَّ بِدْعَةٍ ضَلَالَةٌ».

---

1 ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1755) ແລະ ມຸສລິມ, ເລກທີ່ (1328).

2 ໄດ້ລະບຸທີ່ມາໄວ້ກ່ອນແລ້ວ.

«ພວກເຈົ້າຈົ່ງລະວັງ ຈາກບັນດາສິ່ງທີ່ຖືກປະດິດຂຶ້ນໃໝ່, ເພາະແທ້ຈິງທຸກໆ ສິ່ງທີ່ຖືກປະດິດຂຶ້ນໃໝ່ນັ້ນແມ່ນບິດອະຫ໌, ແລະ ທຸກໆ ບິດອະຫ໌ຄືການຫຼົງຜິດ»[1].

ເຮົາຂໍຕໍ່ອັລລໍຫ໌ ໃຫ້ລຶງປະທານການດຳລົງໝັ້ນຢູ່ບົນສາສະໜາຂອງພຣະອົງ, ແລະ ຄວາມປອດໄພຈາກທຸກສິ່ງທີ່ຂັດກັບສາສະໜາຂອງພຣະອົງ, ແທ້ພຣະອົງລຶງເປັນຜູ້ລຶງເມດຕາທີ່ດີເລີດ.

## ບົດ
## ວ່າດ້ວຍບົດບັນຍັດ ແລະ ມາລະຍາດໃນການຢ້ຽມຢາມ

ແລະ ຖືເປັນສຸນນະຫ໌ໃນການໄປຢ້ຽມຢາມມັສຍິດຂອງ ທ່ານນະບີ ﷺ ກ່ອນ ຫຼື ຫຼັງການປະກອບພິທີຮັຈ; ດັ່ງທີ່ໄດ້ຖືກຢືນຢັນໃນປຶ້ມສໍເຮັຍທັ້ງສອງ ໂດຍລາຍງານຈາກ ທ່ານອາບູ ຮູຣອຍເຣາະຫ໌ ຣໍດິຢັລລໍອັນຮຸ ເລົ່າວ່າ: ທ່ານຣໍສູລຸລລໍຫ໌ ﷺ ໄດ້ກ່າວວ່າ:

«صَلَاةٌ فِي مَسْجِدِي هَذَا خَيْرٌ مِنْ أَلْفِ صَلَاةٍ فِيمَا سِوَاهُ إِلَّا المَسْجِدَ الحَرَامَ».

«ການລະຫມາດໃນມັສຍິດຂອງຂ້ອຍແຫ່ງນີ້ ປະເສີດກວ່າການລະຫມາດໜຶ່ງພັນຄັ້ງໃນສະຖານທີ່ອື່ນໆ ນອກຈາກມັສຍິດອັລ-ຫະຣອມ»[2]. ແລະ ລາຍງານຈາກທ່ານອິບນຸ ອຸມັຣ ຣໍດິຢັລລໍຮຸ ອັນຮຸມາ, ແທ້ຈິງທ່ານນະບີ ﷺ ໄດ້ກ່າວວ່າ:

«صَلَاةٌ فِي مَسْجِدِي هَذَا أَفْضَلُ مِنْ أَلْفِ صَلَاةٍ فِيمَا سِوَاهُ إِلَّا المَسْجِدَ الحَرَامَ».

«ການລະຫມາດໃນມັສຍິດຂອງຂ້າພະເຈົ້ານີ້ ປະເສີດກວ່າ

---

[1] ບັນທຶກໂດຍມຸສລິມ ຈາກ ຈາບິຣ ບິນ ອັບດຸລລໍຫ໌ ຂໍອັລລໍຫ໌ລຶງພໍພຣະໄທຕໍ່ເພິ່ນ, ເລກທີ່ (867).

[2] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1190) ແລະ ມຸສລິມ, ເລກທີ່ (1394).

ການລະຫມາດຫນຶ່ງພັນຄັ້ງໃນມັສຍິດອື່ນໆ, ນອກຈາກມັສຍິດ ອັລຫະຣອມ»[1] ບັນທຶກໂດຍ: ມຸສລິມ, ລາຍງານຈາກທ່ານອັບດຸລລໍຫ໌ ບິນ ອັຊຊຸບັຍຣ໌ ຣໍດິຍັລລໍຣຸ ອັນຮຸ ເລົ່າວ່າ: ທ່ານຣໍສູລຸລລໍຫ໌ ﷺ ກ່າວວ່າ:

«صَلَاةٌ فِي مَسْجِدِي هَذَا أَفْضَلُ مِنْ أَلْفِ صَلَاةٍ فِيمَا سِوَاهُ إِلَّا الْمَسْجِدَ الْحَرَامَ، وَصَلَاةٌ فِي الْمَسْجِدِ الْحَرَامِ أَفْضَلُ مِنْ مِائَةِ صَلَاةٍ فِي مَسْجِدِي هَذَا».

«ການລະຫມາດໃນມັສຍິດຂອງຂ້ອຍແຫ່ງນີ້ ປະເສີດກວ່າການລະຫມາດໜຶ່ງພັນຄັ້ງໃນມັສຍິດອື່ນໆ, ຍົກເວັ້ນມັສຍິດອັລ-ຫະຣອມ, ແລະ ການລະຫມາດໃນມັສຍິດອັລ-ຫະຣອມ ປະເສີດກວ່າການລະຫມາດໜຶ່ງຮ້ອຍຄັ້ງໃນມັສຍິດຂອງຂ້ອຍແຫ່ງນີ້»[2] ບັນທຶກໂດຍ ທ່ານອະຫ໌ມັດ, ທ່ານອິບນຸຄຸໄຊມະຫ໌ ແລະ ທ່ານອິບນຸຫິບບານ.

ແລະ ລາຍງານຈາກທ່ານຈາບິຣ ເຣາະດິຍັລລໍຮຸ ອັນຮຸ, ແທ້ຈິງທ່ານຣໍຊູລ ﷺ ໄດ້ກ່າວວ່າ:

«صَلَاةٌ فِي مَسْجِدِي هَذَا أَفْضَلُ مِنْ أَلْفِ صَلَاةٍ فِيمَا سِوَاهُ، إِلَّا الْمَسْجِدَ الْحَرَامَ، وَصَلَاةٌ فِي الْمَسْجِدِ الْحَرَامِ أَفْضَلُ مِنْ مِائَةِ أَلْفِ صَلَاةٍ فِيمَا سِوَاهُ».

«ການລະຫມາດໃນມັສຍິດຂອງຂ້າພະເຈົ້ານີ້ ປະເສີດກວ່າໜຶ່ງພັນລະຫມາດໃນມັສຍິດອື່ນ, ຍົກເວັ້ນມັສຍິດອັລຫະຣອມ, ແລະການລະຫມາດໃນມັສຍິດອັລຫະຣອມ ປະເສີດກວ່າໜຶ່ງແສນຜົນລະບຸນລະຫມາດໃນມັສຍິດອື່ນ»[3] ບັນທຶກໂດຍ ທ່ານອະຫ໌ມັດ, ແລະ ທ່ານອິບນຸມາຈະຫ໌. ແລະ ບັນດາຫະດີຊໃນຄວາ

---

1 ບັນທຶກໂດຍມຸສລິມ, ເລກທີ່ (1395).
2 ອະຫ໌ມັດ ເລກທີ່: (4/5).
3 ບັນທຶກໂດຍ ທ່ານອິບນຸ ມາຈະຫ໌ : ເລກທີ່ (1406).

ມຫມາຍນີ້ມີຢູ່ຢ່າງຫຼວງຫຼາຍ.

ເມື່ອຜູ້ມາຢ້ຽມຢາມມາຮອດມັສຍິດ ເປັນທີ່ສົ່ງເສີມໃຫ້ລາວກ້າວຕີນຂວາເຂົ້າ, ແລະ ກ່າວວ່າ: "ດ້ວຍພຣະນາມຂອງອັລລໍຫ໌, ແລະ ຂໍຄວາມເມດຕາ ແລະ ຄວາມສັນຕິສຸກຈົ່ງມີແດ່ສາດສະດາທູດຂອງອັລລໍຫ໌, ຂ້ອຍຂໍຄວາມຄຸ້ມຄອງດ້ວຍພຣະອົງອັລລໍຫ໌ຜູ້ຊົງຍິ່ງໃຫຍ່, ດ້ວຍພຣະພັກອັນຊົງກຽດຂອງພຣະອົງ ແລະ ດ້ວຍອຳນາດອັນມີມາແຕ່ດັ້ງເດີມຂອງພຣະອົງ ໃຫ້ພົ້ນຈາກໄຊຕອນທີ່ຖືກສາບແຊ່ງ, ໂອ້ອັລລໍຫ໌, ຂໍຊົງໂປດເປີດບັນດາປະຕູແຫ່ງຄວາມເມດຕາຂອງພຣະອົງໃຫ້ແກ່ຂ້ອຍດ້ວຍເຖີດ",

ເຊັ່ນດຽວກັບດຸອາທີ່ໃຊ້ກ່າວໃນເວລາເຂົ້າໄປໃນມັສຍິດຕ່າງໆ, ແລະ ບໍ່ມີບົດດຸອາສະເພາະໃດໆ ສຳລັບການເຂົ້າໄປໃນມັສຍິດຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລັມ.

ຈາກນັ້ນໃຫ້ລະຫມາດສອງຣໍກະອັດ ແລະ ໃຫ້ກ່າວດຸອາໃນລະຫວ່າງລະຫມາດທັ້ງສອງນັ້ນ ຂໍຄວາມໂຊກດີມີໄຊ ທັ້ງໂລກນີ້ ແລະ ໂລກຫນ້າ ຕາມຄວາມປະສົງຕ້ອງການ, ແລະ ຫາກໄດ້ລະຫມາດທັງສອງຣໍກະອັດນັ້ນໃນເຮົາເດາະຫ໌ ອັຣ-ຣະຣິພະຫ໌ ກໍ່ເປັນການດີຍິ່ງ; ດັ່ງຄຳກ່າວຂອງທ່ານນະບີ (ຊລ):

«مَا بَيْنَ بَيْتِي وَمِنْبَرِي رَوْضَةٌ مِنْ رِيَاضِ الجَنَّةِ».

«ລະຫວ່າງບ້ານຂອງຂ້ອຍ ແລະ ມິນບັຣຂອງຂ້ອຍ ຄືສວນຫນຶ່ງໃນສວນສະຫວັນ»[1]. ຫລັງຈາກລະຫມາດແລ້ວ ໃຫ້ໄປຢ້ຽມຢາມກຸບູຣຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລັມ, ແລະກຸບູຣຂອງສອງສະຫາຍຂອງທ່ານຄື: ທ່ານ ອະບີ ບັກຣ໌ ແລະ ທ່

[1] ບັນທຶກໂດຍ ອັລບຸກໍຣີ ຈາກ ອັບດຸລລໍຮ໌ ບິນ ໄຊດ໌ ອັລມາຊິນີ, ເລກທີ່ (1195) ແລະ ມຸສລິມ, ເລກທີ່ (1390).

ານ ອູມັຣ ຣໍດິຍັລລໍຮຸ ອັນຮຸມາ, ໂດຍໃຫ້ຢືນຕໍ່ຫນ້າກຸບູຣຂອງທ່ານນະບີ ຊໍລລັລລໍຮ໌ຮຸ ອະໄລຮິ ວະສັລລັມ ດ້ວຍມາລະຍາດທີ່ສໍາລວມ ແລະ ຫລຸດສຽງໃຫ້ຄ່ອຍ, ຫລັງຈາກນັ້ນຈຶ່ງກ່າວສະລາມແກ່ທ່ານ ຊໍລລັລລໍຮຸ ອະໄລຮິ ວະສັລລັມ ໂດຍກ່າວວ່າ: "ອັສສະລາມມຸ ອະໄລກະ ຍາ ຣໍຊູລ ລຸລລໍຮ໌ ວະເຣາະມະຕຸລລໍຮິ ວະບະຣໍກາຕຸຫ໌"; ເນື່ອງຈາກມີລາຍງານໃນຫນັງສືຫະດີຊ ຊຸນັນ ຂອງອະບີດາວູດ ດ້ວຍສາຍລາຍງານທີ່ດີ (ຫະຊັນ), ຈາກທ່ານ ອະບີ ຮຸຣອຍເຣາະຮ໌ ຣໍດິຍັລລໍຮຸ ອັນຮຸ ໄດ້ກ່າວວ່າ: ທ່ານສາດສະດາທູດຂອງອັລລໍຮ໌ ຊໍລລັລລໍຮຸ ອະໄລຮິ ວະສັລລັມ ໄດ້ກ່າວວ່າ:

«مَا مِنْ أَحَدٍ يُسَلِّمُ عَلَيَّ إِلَّا رَدَّ اللهُ عَلَيَّ رُوحِي حَتَّى أَرُدَّ عَلَيْهِ السَّلَامَ».

«ບໍ່ມີຜູ້ໃດທີ່ກ່າວສະລາມໃຫ້ຂ້ອຍ ເວັ້ນເສຍແຕ່ອັລລໍຫ໌ຈະໄດ້ສົ່ງດວງວິນຍານຂອງຂ້ອຍກັບຄືນມາໃຫ້ຂ້ອຍ ເພື່ອທີ່ຂ້ອຍຈະໄດ້ຕອບສະລາມໃຫ້ແກ່ລາວ»[1]. ແລະ ຫາກຜູ້ມາຢ້ຽມຢາມໄດ້ກ່າວໃນການສະລາມຂອງລາວວ່າ: "ຂໍຄວາມສັນຕິສຸກຈົ່ງມີແດ່ທ່ານ ໂອ້ ນະບີແຫ່ງອັລລໍຮ໌, ຂໍຄວາມສັນຕິສຸກຈົ່ງມີແດ່ທ່ານ ໂອ້ ຜູ້ທີ່ຖືກຄັດເລືອກທີ່ດີທີ່ສຸດຂອງອັລລໍຮ໌ຈາກບັນດາສິ່ງທີ່ພຣະອົງໄດ້ຊົງສ້າງ, ຂໍຄວາມສັນຕິສຸກຈົ່ງມີແດ່ທ່ານ ໂອ້ ຫົວຫນ້າຂອງບັນດາສາດສະດາທູດ ແລະ ຜູ້ນໍາຂອງບັນດາຜູ້ຢໍາເກງ, ຂ້າພະເຈົ້າຂໍປະຕິຍານວ່າ ແທ້ຈິງທ່ານໄດ້ເຜີຍແຜ່ສານແລ້ວ, ໄດ້ປະຕິບັດຕາມພັນທະທີ່ໄດ້ຮັບມອບຫມາຍ, ໄດ້ໃຫ້ຄໍາຕັກເຕືອນແກ່ປະຊາຊາດ ແລະ ໄດ້ຕໍ່ສູ້ໃນຫົນທາງຂອງອັລລໍຮ໌ຢ່າງແທ້ຈິງ" ກໍບໍ່ເປັນຫຍັງໃນການກະທໍາດັ່ງກ່າວ; ເພາະທັງຫມົດນີ້ແມ່ນສ່ວນຫນຶ່ງຈາກຄຸນລັກສະນະຂອງທ່ານ ﷺ, ແລະ ໃຫ້

[1] ບັນທຶກໂດຍ ອະບູ ດາວູດ ເລກທີ່ (2041).

ກ່າວສໍລະວາດ ﷺ ແລະ ດຸອາໃຫ້ແກ່ເພິ່ນ; ເນື່ອງຈາກສິ່ງທີ່ໄດ້ຖື ກກໍານົດໄວ້ໃນບັນຍັດສາສະໜາ ເຖິງຄວາມຖືກຕ້ອງຕາມຫ ລັກການໃນການລວມເອົາການກ່າວສໍລະວາດ ແລະ ສະລາມໃ ຫ້ແກ່ທ່ານ; ໂດຍປະຕິບັດຕາມດໍາລັດຂອງພຣະອົງ ຜູ້ສູງສົ່ງທີ່ ວ່າ:

﴿إِنَّ اللَّهَ وَمَلَائِكَتَهُ يُصَلُّونَ عَلَى النَّبِيِّ يَا أَيُّهَا الَّذِينَ آمَنُوا صَلُّوا عَلَيْهِ وَسَلِّمُوا تَسْلِيمًا ﴿٥٦﴾﴾

ຄວາມວ່າ: (ແທ້ຈິງ ອັລລໍຫ໌ ແລະ ບັນດາມະລາອິກະຫ໌ຂອງ ພຣະອົງ ຕ່າງກໍປະທານພອນໃຫ້ແກ່ທ່ານນະບີ, ໂອ້ ບັນດາຜູ້ທີ່ ສັດທາທັງຫລາຍເອີຍ ພວກເຈົ້າຈົ່ງປະສາດພອນ ແລະ ກ່າວສ ະລາມຕໍ່ເພິ່ນຢ່າງຈິງໃຈເຖີດ.) [ອັລ-ອະຫ໌ຊາບ: 56]. ຈາກນັ້ນ ໃຫ້ກ່າວສະລາມຕໍ່ ທ່ານ ອະບູ ບັກຣ໌ ແລະ ທ່ານ ອຸມັຣ, ຂໍອັລລໍ ຣ໌ຊົງພໍພຣະໄທທັ້ງສອງທ່ານ, ແລະ ຂໍດຸອາໃຫ້ພວກເພິ່ນທັ້ງສ ອງ ຂໍຄວາມພໍພຣະໄທໃຫ້ແກ່ທັງສອງທ່ານ.

ທ່ານອິບນຸ ອຸມັຣ ຣໍດີຍັລລໍຮຸ ອັນຮຸມາ ເມື່ອໄດ້ກ່າວສະລາມ ຕໍ່ທ່ານຣໍຊູລ ﷺ ແລະ ສອງສະຫາຍຂອງທ່ານ, ສ່ວນຫຼາຍຈະກ່າ ວພຽງແຕ່ວ່າ: "ອັສລາມມຸ ອະໄລກະ ຢາຣໍຊູລ ລັລລໍຫ໌, ອັສລາມ ມຸ ອະໄລກະ ຢາ ອະບາ ບັກຣິນ, ອັສລາມມຸ ອະໄລກະ ຢາອັບຕາ"

(ຂໍຄວາມສັນຕິສຸກຈົ່ງມີແດ່ ໂອ້ ທ່ານສາດສະດາທູດຂອງອັ ລລໍຣ໌, ຂໍຄວາມສັນຕິສຸກຈົ່ງມີແດ່ ທ່ານ ອະບາ ບັກຣ໌, ຂໍຄວາມ ສັນຕິສຸກຈົ່ງມີແດ່ ທ່ານພໍ່ຂອງຂ້ອຍ) ຈາກນັ້ນກໍ່ຈາກໄປ.

ແລະ ການຢ້ຽມຢາມນີ້ເປັນບົດບັນຍັດສະເພາະສໍາລັບຜູ້ຊາ ຍ, ສ່ວນແມ່ຍິງບໍ່ມີຫຼັກຖານຈາກບົດບັນຍັດໃຫ້ໄປຢ້ຽມຢາມກຸ ໂບຣໃດໆ, ດັ່ງທີ່ໄດ້ມີການຢືນຢັນຈາກທ່ານນະບີ ຊັລລັລລໍຮຸ ອະ

ໄວຣີ ອະສັວລຳ ວ່າ:

«لَعَنَ زُوَّارَاتِ القُبُورِ مِنَ النِّسَاءِ وَالمُتَّخِذِينَ عَلَيْهَا المَسَاجِدَ وَالسُّرُجَ».

«ອັລລໍຫ໌ ໄດ້ສາບແຊ່ງບັນດາແມ່ຍິງທີ່ໄປຢ້ຽມຢາມບັນດາຫຼຸມຝັງສົບ ແລະ ບັນດາຜູ້ທີ່ຍຶດເອົາພວກມັນເປັນມັສຍິດ ແລະ ວາງໂຄມໄຟໄວ້ເທິງນັ້ນ»[1].

ສ່ວນການຕັ້ງເຈດຕະນາເດີນທາງໄປເມືອງມະດີນະຫ໌ ເພື່ອການລະຫມາດທີ່ມັສຍິດຂອງທ່ານນະບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ, ການຂໍດຸອາໃນນັ້ນ, ແລະ ສິ່ງອື່ນໆ ໃນທຳນອງດຽວກັນທີ່ເປັນບົດບັນຍັດໃນມັສຍິດທັງຫຼາຍ, ນັ້ນເປັນບົດບັນຍັດສຳລັບທຸກຄົນໂດຍທົ່ວຫນ້າກັນ; ເນື່ອງຈາກບັນດາຫະດີສທີ່ໄດ້ກ່າວມາກ່ອນຫນ້ານີ້ໃນເລື່ອງດັ່ງກ່າວ.

ແລະ ເປັນສຸນນະຫ໌ໃຫ້ຜູ້ມາຢ້ຽມຢາມລະຫມາດໃຫ້ຄົບທັງຫ້າເວລາ ໃນມັສຍິດຂອງທ່ານຣໍຊູລ ﷺ, ແລະ ໃຫ້ກ່າວຊິກຣ, ຂໍດຸອາ ແລະ ລະຫມາດນາຟິລະຫ໌ (ສິ່ງເສີມ) ໃນນັ້ນຫຼາຍໆ; ເພື່ອສະແຫວງຫາຜົນຕອບແທນອັນຍິ່ງໃຫຍ່ທີ່ຢູ່ໃນນັ້ນ.

ແລະ ສົ່ງເສີມໃຫ້ມີການລະຫມາດສຸນັດໃຫ້ຫຼາຍໆ ໃນເຮົາເດາະຫ໌ ອັຊ-ຊະຣີຟະຫ໌; ເນື່ອງຈາກມີຫະດີຊທີ່ຖືກຕ້ອງກ່ຽວກັບຄວາມປະເສີດຂອງມັນ, ເຊິ່ງທ່ານ ນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ໄດ້ກ່າວວ່າ:

«مَا بَيْنَ بَيْتِي وَمِنْبَرِي رَوْضَةٌ مِنْ رِيَاضِ الجَنَّةِ».

"ລະຫວ່າງເຮືອນຂອງຂ້ອຍ ແລະ ມິນບັຣຂອງຂ້ອຍ ຄືສວນຫນຶ່ງຈາກບັນດາສວນຂອງສວນສະຫວັນ"[2].

---

[1] ບັນທຶກໂດຍ ອະບູ ດາວູດ ເລກທີ່ (3236).
[2] ການອ້າງອີງໄດ້ຜ່ານມາແລ້ວ.

ສ່ວນການລະຫມາດພະຣິເດາະນັ້ນ, ສົມຄວນສຳລັບຜູ້ມາຍັງມະຍານ ແລະ ຜູ້ອື່ນໆ ທີ່ຈະກ້າວໄປທາງໜ້າ, ແລະ ພະຍາຍາມຮັກສາແຖວທຳອິດໃຫ້ໄດ້ເທົ່າທີ່ສາມາດ, ເຖິງແມ່ນວ່າຈະຢູ່ໃນສ່ວນທີ່ຂະຫຍາຍເພີ່ມທາງດ້ານໜ້າກໍ່ຕາມ; ເນື່ອງຈາກສິ່ງທີ່ໄດ້ກ່າວໄວ້ໃນບັນດາຫະດີສທີ່ຊໍເຮັຍຫ໌ຈາກທ່ານນະບີ ﷺ ເຖິງການສົ່ງເສີມ ແລະ ການຊຸກຍູ້ໃນເລື່ອງແຖວທຳອິດ, ເຊັ່ນດັ່ງຄຳກ່າວຂອງທ່ານ ﷺ ທີ່ວ່າ:

«لَوْ يَعْلَمُ النَّاسُ مَا فِي النِّدَاءِ وَالصَّفِّ الأَوَّلِ ثُمَّ لَمْ يَجِدُوا إِلَّا أَنْ يَسْتَهِمُوا عَلَيْهِ لَاسْتَهَمُوا».

« ຫາກຜູ້ຄົນຮູ້ເຖິງຄວາມປະເສີດທີ່ມີໃນການອະຊານ ແລະ ແຖວທຳອິດ, ແລ້ວພວກເຂົາບໍ່ພົບວິທີການໃດ (ທີ່ຈະໄດ້ຮັບມັນ) ນອກຈາກການຈັບສະຫຼາກ, ແນ່ນອນວ່າພວກເຂົາຈະຈັບສະຫຼາກກັນ. »[1] ມຸດຕະຟັກ ກຸລອະໄລ, ແລະ ດັ່ງເຊັ່ນ ຄຳກ່າວຂອງທ່ານ ﷺ ແກ່ບັນດາສໍຫາບະຫ໌ ຂອງທ່ານ:

«تَقَدَّمُوا فَأْتَمُّوا بِي وَلْيَأْتَمَّ بِكُمْ مَنْ بَعْدَكُمْ، وَلَا يَزَالُ الرَّجُلُ يَتَأَخَّرُ عَنِ الصَّلَاةِ حَتَّى يُؤَخِّرَهُ اللهُ».

«ພວກທ່ານຈົ່ງກ້າວມາຂ້າງໜ້າ ແລະ ປະຕິບັດຕາມຂ້ອຍ, ແລະໃຫ້ຜູ້ທີ່ຢູ່ຫຼັງຈາກພວກທ່ານ ປະຕິບັດຕາມພວກທ່ານ, ແລະ ບຸກຄົນຈະຍັງຄົງລັກຊ້າຢູ່ທາງຫຼັງ ຈົນກວ່າອັລລໍຮ໌ຈະເຮັດໃຫ້ລາວຕ້ອງຢູ່ລ້າຫຼັງ»[2] ບັນທຶກໂດຍທ່ານມຸສລິມ.

ແລະ ທ່ານອະບູດາວຸດໄດ້ລາຍງານ ຈາກທ່ານນາງ ອາອີຊະຫ໌

---

[1] ບັນທຶກໂດຍມຸສລິມ, ເລກທີ່ (438), ຈາກຫະດີສຂອງ ອະບີ ສະອີດ ອັລຄຸດຣີ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ.

[2] ບັນທຶກໂດຍ ອັລບຸກໍອຣີ, ເລກທີ່ (615) ແລະ ມຸສລິມ, ເລກທີ່ (437).

ຣໍດີຍັລລໍຮຸ ອັນຮາ ດ້ວຍສາຍລາຍງານທີ່ຫະຊັນ ວ່າ ທ່ານນະບີ ສັລລັລລໍຮຸ ອາໄລຮິ ວະຊັລລັມ ໄດ້ກ່າວວ່າ:

«لَا يَزَالُ الرَّجُلُ يَتَأَخَّرُ عَنِ الصَّفِّ الْمُقَدَّمِ حَتَّى يُؤَخِّرَهُ اللهُ فِي النَّارِ».

«ບຸກຄົນໜຶ່ງຈະຍັງຄົງຊັກຊ້າຢູ່ຫຼັງແຖວທໍາອິດ ຈົນກວ່າອັລລໍຮ໌ຈະເຮັດໃຫ້ລາວຕ້ອງຢູ່ລ້າຫຼັງໃນໄຟນະຣົກ»[1]. ແລະ ໄດ້ມີການຢັ້ງຢືນຈາກທ່ານນະບີ ﷺ ວ່າທ່ານໄດ້ກ່າວແກ່ບັນດາຊໍຮາບະຂອງທ່ານວ່າ:

«أَلَا تَصُفُّونَ كَمَا تَصُفُّ الْمَلَائِكَةُ عِنْدَ رَبِّهَا؟ قَالُوا: يَا رَسُولَ اللهِ، وَكَيْفَ تَصُفُّ الْمَلَائِكَةُ عِنْدَ رَبِّهَا؟ قَالَ: يُتِمُّونَ الصُّفُوفَ الْأُوَلَ، وَيَتَرَاصُّونَ فِي الصَّفِّ».

«ພວກເຈົ້າຈະບໍ່ຈັດແຖວຄືດັ່ງທີ່ມະລາອິກະຫ໌ຈັດແຖວຕໍ່ໜ້າພຣະຜູ້ເປັນເຈົ້າຂອງພວກເຂົາດອກຫລື?» ພວກເຂົາກ່າວວ່າ: ໂອ້ທ່ານຣໍຊູລຸລລໍຫ໌, ແລ້ວບັນດາມະລາອິກະຫ໌ຈັດແຖວຕໍ່ໜ້າພຣະຜູ້ເປັນເຈົ້າຂອງພວກເຂົາແນວໃດ? ທ່ານໄດ້ຕອບວ່າ: «ພວກເຂົາເຮັດໃຫ້ບັນດາແຖວທໍາອິດເຕັມສົມບູນ, ແລະ ຢືນຊິດຕິດກັນໃນແຖວ»[2] ບັນທຶກໂດຍມຸສລິມ.

ແລະ ບັນດາຫະດີສໃນຄວາມຫມາຍນີ້ແມ່ນມີຢູ່ຢ່າງຫຼວງຫຼາຍ, ເຊິ່ງຄອບຄຸມທັ້ງມັສຍິດຂອງທ່ານນະບີ ﷺ ແລະ ມັດສະຍິດອື່ນໆ, ທັງກ່ອນການຂະຫຍາຍ ແລະ ຫລັງຈາກນັ້ນ. ພ້ອມກັນນີ້ ໄດ້ມີລາຍງານທີ່ຖືກຕ້ອງຈາກທ່ານນະບີ ﷺ ວ່າ ທ່ານເຄີຍສົ່ງເສີມບັນດາສໍຫາບະຫ໌ຂອງທ່ານໃຫ້ຢູ່ເບື້ອງຂວາຂອງແຖວ, ແລະ ເປັນທີ່ຮູ້ກັນດີວ່າ ເບື້ອງຂວາຂອງແຖວໃນມັສຍິດຂອງທ່າ

[1] ບັນທຶກໂດຍມຸສລິມ, ເລກທີ່ (430), ຈາກ ຈາບີຣ ບິນ ສະມຸເຣາະຫ໌.

[2] ບັນທຶກໂດຍ ອະບູ ດາວູດ ເລກທີ່ (679) ແລະ ສໍານວນຄໍາເວົ້າແມ່ນ: "ຈະຍັງມີກຸ່ມຄົນທີ່ຊັກຊ້າຈາກແຖວທໍາອິດຢູ່ສະເໝີ ຈົນກວ່າອັລລໍຮ໌ຈະເຮັດໃຫ້ພວກເຂົາຢູ່ລ້າຫຼັງໃນໄຟນະລົກ."

ນໃນຍຸກທຳອິດນັ້ນ ແມ່ນຢູ່ນອກເຂດເຮົາເດາະຫ໌. ດ້ວຍເຫດ ນີ້ ຈຶ່ງເຮັດໃຫ້ຮູ້ວ່າການເອົາໃຈໃສ່ຕໍ່ບັນດາແຖວທຳອິດ ແລະ ເບື້ອງຂວາຂອງແຖວນັ້ນ ຖືກໃຫ້ຄວາມສຳຄັນກ່ອນການເອົາໃຈໃສ່ຕໍ່ເຮົາເດາະຫ໌ອັນຊົງກຽດ, ແລະ ການຮັກສາສອງສິ່ງດັ່ງກ່າວແມ່ນປະເສີດກວ່າການຮັກສາການລະຫມາດໃນເຂດເຮົາເດາະຫ໌. ແລະ ເລື່ອງນີ້ແມ່ນເປັນທີ່ຊັດເຈນແຈ່ມແຈ້ງສຳລັບຜູ້ທີ່ພິຈາລະນາໄຕ່ຕອງບັນດາຫະດີສທີ່ມີລາຍງານມາໃນຫົວຂໍ້ນີ້, ແລະ ອັລລໍຫ໌ຄືຜູ້ຊົງປະທານຄວາມສຳເລັດ.

ແລະ ບໍ່ອະນຸຍາດໃຫ້ຜູ້ໃດທີ່ຈະສຳຜັດຫຸຈຣໍຫ໌ ຫຼື ຈູບມັນ ຫຼື ຕໍວາຟຮອບມັນ; ເພາະວ່າສິ່ງດັ່ງກ່າວບໍ່ໄດ້ຖືກລາຍງານມາຈາກບັນດາຊະລັຟ ອັຊ-ຊໍລິຫ໌, ແທ້ຈິງແລ້ວມັນຄືບິດອະຫ໌ອັນຊົ່ວຮ້າຍ.

ແລະ ບໍ່ອະນຸຍາດໃຫ້ຜູ້ໃດວິງວອນຂໍຕໍ່ຣໍຊູລ ﷺ ໃຫ້ຊ່ວຍບັນລຸຄວາມຕ້ອງການ, ຫຼື ບັນເທົາຄວາມທຸກທໍລະມານ, ຫຼື ປິ່ນປົວຄົນເຈັບ, ຫຼື ສິ່ງອື່ນໆ ທີ່ຄ້າຍຄືກັນ; ເພາະວ່າສິ່ງທັງໝົດເຫຼົ່ານັ້ນ ຈະຕ້ອງບໍ່ຖືກຮຽກຮ້ອງຂໍຈາກຜູ້ໃດ ນອກຈາກອັລລໍຫ໌ ຜູ້ຊົງສູງສົ່ງ ເທົ່ານັ້ນ, ແລະ ການຮຽກຮ້ອງຂໍຈາກຜູ້ທີ່ລ່ວງລັບໄປແລ້ວ ນັ້ນຖືເປັນການຕັ້ງພາຄີ (ຊີຣິກ) ຕໍ່ອັລລໍຫ໌ ແລະ ເປັນການເຄົາລົບບູຊາຕໍ່ສິ່ງອື່ນນອກເໜືອຈາກພຣະອົງ,

ແລະ ສາສະໜາອິດສະລາມນັ້ນຕັ້ງຢູ່ບົນພື້ນຖານສອງປະການຄື:

ປະການທີໜຶ່ງ: ຄືຈະຕ້ອງບໍ່ມີການເຄົາລົບບູຊາສິ່ງໃດ ນອກຈາກອັລລໍຫ໌ພຽງຜູ້ດຽວ.

ປະການທີສອງ: ເຄົາລົບກາບໄຫວ້ຕາມຊາຣີອະຫ໌ຂອງທ່ານສາສະນະທູດ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ.

ແລະ ນີ້ຄືຄວາມໝາຍຂອງການປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະ ນະບີ ມຸຮຳມັດເປັນສາສະນະທູດຂອງອັລລໍຫ໌.

ເຊັ່ນດຽວກັນ, ບໍ່ອະນຸຍາດໃຫ້ຜູ້ໃດຮ້ອງຂໍການຊະຟາອະຫ໌ຈາກທ່ານສາສະນະທູດ ﷺ; ເພາະວ່າການຊະຟາອະຫ໌ນັ້ນເປັນກຳມະສິດຂອງອັລລໍຫ໌ ຊຸບຫານະຮູ, ດັ່ງນັ້ນ ຈຶ່ງບໍ່ອະນຸຍາດໃຫ້ຮ້ອງຂໍຈາກຜູ້ໃດນອກຈາກພຣະອົງເທົ່ານັ້ນ, ດັ່ງທີ່ພຣະອົງໄດ້ຊົງດຳລັດໄວ້ວ່າ:

﴿قُلْ لِلَّهِ الشَّفَاعَةُ جَمِيعًا...﴾

(ຈົ່ງກ່າວເຖີດ ມຸຮຳມັດ ການຊະຟາອະຫ໌ທັ້ງມວນນັ້ນ ເປັນກຳມະສິດຂອງອັລລໍຫ໌...) [ອັຊ-ຊຸມັຣ: 44] ດັ່ງນັ້ນ ໃຫ້ກ່າວວ່າ: "ໂອ້ ອັລລໍຫ໌, ຂໍພຣະອົງຈົ່ງຮັບເອົາການຂໍຄວາມຊ່ວຍເຫຼືອ (ຊະຟາອະຫ໌) ຂອງນະບີຂອງພຣະອົງ, ໂອ້ ອັລລໍຫ໌, ຂໍພຣະອົງຈົ່ງຮັບເອົາການຂໍຄວາມຊ່ວຍເຫຼືອຂອງບັນດາມະລາອິກະຫ໌ ແລະ ບັນດາບ່າວຜູ້ສັດທາຂອງພຣະອົງ, ໂອ້ ອັລລໍຫ໌, ຂໍພຣະອົງຈົ່ງຮັບເອົາການຂໍຄວາມຊ່ວຍເຫຼືອຂອງບັນດາລູກນ້ອຍຂອງພວກເຮົາ (ທີ່ໄດ້ເສຍຊີວິດຕັ້ງແຕ່ຍັງນ້ອຍ) ", ແລະ ທຳນອງດຽວກັນນີ້.

ສ່ວນບັນດາຄົນຕາຍນັ້ນ ບໍ່ອະນຸຍາດໃຫ້ຂໍສິ່ງໃດຈາກພວກເຂົາ, ທັ້ງການຂໍຄວາມຊ່ວຍເຫຼືອ ແລະ ສິ່ງອື່ນໆ, ເຖິງວ່າພວກເຂົາຈະເປັນບັນດານະບີ ຫຼື ບໍ່ແມ່ນກໍ່ຕາມ; ເພາະວ່າສິ່ງດັ່ງກ່າວບໍ່ໄດ້ຖືກບັນຍັດໄວ້ໃນສາສະໜາ, ແລະ ເພາະວ່າຜູ້ຕາຍນັ້ນ ການງານຂອງເຂົາໄດ້ຖືກຕັດຂາດລົງແລ້ວ ຍົກເວັ້ນສິ່ງທີ່ຜູ້ວາງບົດບັນຍັດໄດ້ຍົກເວັ້ນໄວ້.

ແລະ ລາຍງານທີ່ຖືກຕ້ອງຈາກມຸສລິມ ຈາກທ່ານອາບູ ຮູຣອຍເຣາະຫ໌ ຣໍດິຍັລລໍອັນຮຸ ເລົ່າວ່າ: ທ່ານຣໍສູລ ລຸລລໍຫ໌ ﷺ ກ່າວ

ວ່າ:

«إِذَا مَاتَ ابْنُ آدَمَ انْقَطَعَ عَمَلُهُ إِلَّا مِنْ ثَلَاثٍ: صَدَقَةٍ جَارِيَةٍ، أَوْ عِلْمٍ يُنْتَفَعُ بِهِ، أَوْ وَلَدٍ صَالِحٍ يَدْعُو لَهُ».

«ເມື່ອບ່າວຄົນໜຶ່ງ (ມະນຸດ) ໄດ້ເສຍຊີວິດລົງ ການງານຂອງລາວຈະຖືກຕັດຂາດໄປ ເຫຼືອແຕ່ 3 ຢ່າງເທົ່ານັ້ນ: ການບໍລິຈາກທານທີ່ເປັນກູສົນ, ຄວາມຮູ້ທີ່ເປັນປະໂຫຍດ, ແລະ ລູກທີ່ດີເຊິ່ງຂໍດຸອາໃຫ້ກັບເຂົາ»[1].

ແລະ ການທີ່ອະນຸຍາດໃຫ້ຂໍການຊະຟາອະຫ໌ (ການວິງວອນຂໍແທນ) ຈາກທ່ານນະບີ ຊໍລລັລລໍຮຸ ອະໄລຮີ ວະສັລລໍາ ໃນຂະນະທີ່ທ່ານຍັງມີຊີວິດຢູ່ ແລະ ໃນວັນກິຍາມະຫ໌ໄດ້ນັ້ນ, ກໍ່ເນື່ອງມາຈາກຄວາມສາມາດຂອງທ່ານໃນເລື່ອງດັ່ງກ່າວ, ເພາະແທ້ຈິງແລ້ວທ່ານສາມາດທີ່ຈະເຂົ້າໄປວິງວອນຂໍຕໍ່ພຣະຜູ້ເປັນເຈົ້າຂອງພຣະອົງເພື່ອຜູ້ທີ່ຮ້ອງຂໍໄດ້. ສ່ວນໃນໂລກນີ້, ກໍເປັນທີ່ຮູ້ກັນວ່າເລື່ອງນີ້ບໍ່ໄດ້ຈໍາເພາະເຈາະຈົງກັບທ່ານພຽງຜູ້ດຽວ, ແຕ່ເປັນເລື່ອງທົ່ວໄປສໍາລັບທ່ານ ແລະ ຜູ້ອື່ນໆ.

ດັ່ງນັ້ນ ຈຶ່ງເປັນທີ່ອະນຸຍາດສໍາລັບມຸສລິມທີ່ຈະກ່າວກັບພີ່ນ້ອງຂອງລາວວ່າ: «ຈົ່ງຊ່ວຍວິງວອນຂໍ (ຊະຟາອະຫ໌) ຕໍ່ພຣະຜູ້ເປັນເຈົ້າຂອງຂ້ອຍໃຫ້ແດ່ ໃນເລື່ອງນັ້ນເລື່ອງນີ້», ເຊິ່ງມີຄວາມໝາຍວ່າ: «ຈົ່ງດຸອາ (ຂໍພອນ) ຕໍ່ອັລລໍຫ໌ໃຫ້ຂ້ອຍດ້ວຍເຖີດ», ແລະ ກໍເປັນທີ່ອະນຸຍາດສໍາລັບຜູ້ທີ່ຖືກຮ້ອງຂໍນັ້ນ ທີ່ຈະວິງວອນຂໍຕໍ່ອັລລໍຫ໌ ແລະ ຊ່ວຍວິງວອນຂໍ (ຊະຟາອະຫ໌) ໃຫ້ແກ່ພີ່ນ້ອງຂອງລາວ ຫາກວ່າສິ່ງທີ່ຖືກຂໍນັ້ນເປັນສິ່ງທີ່ອັລລໍຫ໌ໄດ້ຊົງອະ

[1] ບັນທຶກໂດຍມຸສລິມ, ເລກທີ່ (1631), ຈາກຫະດີສຂອງ ອະບີ ຮຸຣອຍເຣາະຫ໌ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ເພິ່ນ.

ນຸຍາດໃຫ້ຂໍໄດ້.

ສ່ວນໃນມື້ສິ້ນໂລກ, ບໍ່ມີຜູ້ໃດສາມາດໃຫ້ການຊະຟາອະຫ໌ໄດ້ ເວັ້ນເສຍແຕ່ອັລລໍຫ໌ຈະອະນຸຍາດເສຍກ່ອນ, ດັ່ງທີ່ອັລລໍຫ໌ ໄດ້ກ່າວວ່າ:

﴿...مَنْ ذَا الَّذِى يَشْفَعُ عِنْدَهُ إِلَّا بِإِذْنِهِ...﴾

(...ບໍ່ມີໃຜສາມາດຂໍໃຫ້ການຊ່ວຍເຫຼືອໄດ້ ນອກເໜືອຈາກພຣະອົງຈະອະນຸຍາດ...) [ອັລ-ບະກໍເຣາະຫ໌ :255].

ສໍາລັບສະພາວະຂອງຄວາມຕາຍນັ້ນ ມັນເປັນສະພາວະທີ່ພິເສດ ບໍ່ອະນຸຍາດໃຫ້ນໍາໄປສົມທຽບກັບສະພາວະຂອງມະນຸດກ່ອນຕາຍ ແລະ ກໍບໍ່ໃຫ້ສົມທຽບກັບສະພາວະຂອງເຂົາຫຼັງຈາກການຟື້ນຄືນຊີບ, ເນື່ອງຈາກການງານຂອງຜູ້ຕາຍໄດ້ຍຸດຕິລົງ ແລະ ລາວຖືກຜູກມັດຢູ່ກັບສິ່ງທີ່ລາວໄດ້ກະທໍາໄວ້ ຍົກເວັ້ນສິ່ງທີ່ຜູ້ວາງບົດບັນຍັດໄດ້ຍົກເວັ້ນໄວ້ໃຫ້, ແລະ ການຂໍການຊະຟາອະຫ໌ຈາກບັນດາຜູ້ຕາຍນັ້ນ ບໍ່ແມ່ນສິ່ງທີ່ຜູ້ວາງບົດບັນຍັດໄດ້ຍົກເວັ້ນໄວ້, ດັ່ງນັ້ນ ຈຶ່ງບໍ່ອະນຸຍາດໃຫ້ນໍາເອົາມັນໄປລວມຢູ່ໃນກໍລະນີນັ້ນໄດ້. ເປັນທີ່ແນ່ນອນວ່າ ທ່ານນະບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ຫຼັງຈາກການຈາກໄປຂອງທ່ານແລ້ວ, ທ່ານຍັງມີຊີວິດຢູ່ ເຊິ່ງເປັນຊີວິດໃນໂລກບັຣຊັກ ທີ່ສົມບູນຍິ່ງກວ່າຊີວິດຂອງບັນດາຜູ້ຕາຍຊະຮີດ, ແຕ່ຊີວິດດັ່ງກ່າວນັ້ນ ບໍ່ແມ່ນຊີວິດປະເພດດຽວກັນກັບຊີວິດຂອງທ່ານກ່ອນການຈາກໄປ, ແລະ ກໍບໍ່ແມ່ນປະເພດດຽວກັນກັບຊີວິດຂອງທ່ານໃນວັນກິຍາມະຫ໌, ຫາກແຕ່ເປັນຊີວິດທີ່ບໍ່ມີໃຜຮູ້ເຖິງແກ່ນແທ້ ແລະ ສະພາບຂອງມັນໄດ້ ນອກຈາກອັລລໍຫ໌ ຊຸບຮານະ ເທົ່ານັ້ນ, ດ້ວຍເຫດນີ້ຈຶ່ງມີການກ່າວໄວ້ກ່ອນໜ້ານີ້ໃນຫະດີຊ ເຊິ່ງເປັນຄໍາກ່າວຂອງທ່ານ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ວ່າ:

«مَا مِنْ أَحَدٍ يُسَلِّمُ عَلَيَّ إِلَّا رَدَّ اللهُ عَلَيَّ رُوحِي حَتَّى أَرُدَّ عَلَيْهِ السَّلَامَ».

«ບໍ່ມີຜູ້ໃດທີ່ກ່າວສະລາມໃຫ້ແກ່ຂ້ອຍ ນອກຈາກວ່າອັລລໍຮ໌ຈະຊົງສົ່ງວິນຍານຂອງຂ້ອຍກັບຄືນມາໃຫ້ຂ້ອຍ ເພື່ອທີ່ຂ້ອຍຈະໄດ້ຕອບສະລາມຂອງລາວ»[1].

ດັ່ງນັ້ນ, ສິ່ງດັ່ງກ່າວຈຶ່ງເປັນການບົ່ງບອກວ່າ ທ່ານໄດ້ເສຍຊີວິດແລ້ວ ແລະ ວິນຍານຂອງທ່ານໄດ້ແຍກອອກຈາກຮ່າງກາຍຂອງທ່ານໄປແລ້ວ, ແຕ່ທະວ່າວິນຍານນັ້ນຈະຖືກສົ່ງກັບຄືນມາຫາທ່ານ ເມື່ອມີການໃຫ້ສະລາມ. ແລະ ບັນດາຫຼັກຖານຈາກອັລກຸຣອານ ແລະ ສຸນນະຫ໌ ທີ່ຊີ້ໃຫ້ເຫັນເຖິງການຕາຍຂອງທ່ານ ຊໍລັລລໍຮຸ ອະໄລຮິ ວະສັລລັມ ນັ້ນເປັນທີ່ຮັບຮູ້ກັນດີ ແລະ ເປັນເລື່ອງທີ່ບັນດານັກວິຊາການມີຄວາມເຫັນສອດຄ່ອງກັນ. ແຕ່ທະວ່າສິ່ງດັ່ງກ່າວນັ້ນ ບໍ່ໄດ້ເປັນການຂັດຂວາງການມີຊີວິດຂອງທ່ານໃນຊ່ວງບັຣຊັກ, ເຊັ່ນດຽວກັນກັບການຕາຍຂອງບັນດາຊູຮາດາອ໌ ກໍບໍ່ໄດ້ຂັດຂວາງການມີຊີວິດຂອງພວກເຂົາໃນຊ່ວງບັຣຊັກ ດັ່ງທີ່ໄດ້ຖືກກ່າວໄວ້ໃນຄຳດຳລັດຂອງພຣະອົງອັລລໍຫ໌ທີ່ວ່າ:

﴿وَلَا تَحْسَبَنَّ الَّذِينَ قُتِلُوا فِي سَبِيلِ اللَّهِ أَمْوَاتًا بَلْ أَحْيَاءٌ عِنْدَ رَبِّهِمْ يُرْزَقُونَ ١٦٩﴾

(ແລະ ພວກເຈົ້າຢ່າຄິດເປັນອັນຂາດວ່າ ບັນດາຜູ້ທີ່ຖືກຂ້າໃນຫົນທາງຂອງອັລລໍຫ໌ນັ້ນຕາຍແລ້ວ, ຫາກແຕ່ພວກເຂົາຍັງມີຊີວິດຢູ່ ນະ ທີ່ພຣະຜູ້ເປັນເຈົ້າຂອງພວກເຂົາ ໂດຍໄດ້ຮັບປັດໄຈຍັງຊີບ ) [ສູເຣາະຫ໌ ອະລາອິມຣອນ: 169].

ທີ່ພວກເຮົາໄດ້ອະທິບາຍຢ່າງລະອຽດໃນປະເດັນນີ້, ກໍເນື່ອງຈາກຄວາມຈຳເປັນ ເພາະມີຄົນຈຳນວນຫຼາຍທີ່ສ້າງຄວາມສັບ

---

[1] ບັນທຶກໂດຍ ອະບູ ດາວູດ ເລກທີ່ (2041).

ສິນໃນເລື່ອງນີ້, ແລະ ຮຽກຮ້ອງໄປສູ່ການຕັ້ງພາຄີ (ຊີຣິກ) ແລະ ການເຄົາລົບບູຊາຄົນຕາຍນອກເໜືອຈາກອັລລໍຫ໌,

ສະນັ້ນ, ພວກເຮົາຈຶ່ງຂໍຕໍ່ອັລລໍຫ໌ໃຫ້ພວກເຮົາ ແລະ ຊາວມຸສລິມທັງໝົດ ປອດໄພຈາກທຸກສິ່ງທີ່ຂັດກັບບົດບັນຍັດຂອງພຣະອົງ, ແລະ ອັລລໍຫ໌ຊົງຮູ້ດີທີ່ສຸດ.

ສ່ວນສິ່ງທີ່ຜູ້ມາຢ້ຽມຢາມບາງຄົນກະທຳ ຈາກການຮ້ອງສຽງດັງຢູ່ທີ່ກຸໂບຣຂອງທ່ານນະບີ ﷺ ແລະ ການຢືນຢູ່ທີ່ນັ້ນເປັນເວລາດົນນານນັ້ນ ກໍ່ເປັນສິ່ງທີ່ຂັດກັບບົດບັນຍັດທາງສາສະໜາ; ເນື່ອງວ່າພຣະອົງອັລລໍຫ໌ ຊຸບຫະນາະຮູ ວະຕະອາລາ ໄດ້ຊົງຫ້າມປະຊາຊາດບໍ່ໃຫ້ຍົກສຽງຂອງພວກເຂົາສູງເໜືອສຽງຂອງທ່ານນະບີ ﷺ, ແລະ ບໍ່ໃຫ້ເວົ້າສຽງດັງຕໍ່ທ່ານຄືກັບທີ່ພວກເຂົາເວົ້າສຽງດັງຕໍ່ກັນ, ແລະ ພຣະອົງໄດ້ຊົງສັ່ງເສີມໃຫ້ພວກເຂົາຫລຸດສຽງລົງຕໍ່ໜ້າທ່ານ ດັ່ງໃນຄຳດຳຣັດຂອງພຣະອົງທີ່ວ່າ:

﴿يَا أَيُّهَا الَّذِينَ آمَنُوا لَا تَرْفَعُوا أَصْوَاتَكُمْ فَوْقَ صَوْتِ النَّبِيِّ وَلَا تَجْهَرُوا لَهُ بِالْقَوْلِ كَجَهْرِ بَعْضِكُمْ لِبَعْضٍ أَنْ تَحْبَطَ أَعْمَالُكُمْ وَأَنْتُمْ لَا تَشْعُرُونَ ۝٢ إِنَّ الَّذِينَ يَغُضُّونَ أَصْوَاتَهُمْ عِنْدَ رَسُولِ اللَّهِ أُولَٰئِكَ الَّذِينَ امْتَحَنَ اللَّهُ قُلُوبَهُمْ لِلتَّقْوَىٰ لَهُمْ مَغْفِرَةٌ وَأَجْرٌ عَظِيمٌ ۝٣﴾

(ໂອ້ບັນດາຜູ້ສັດທາທັງຫຼາຍ! ຢ່າຍົກສຽງຂອງພວກເຈົ້າເໜືອສຽງຂອງນະບີ, ແລະ ຢ່າເວົ້າສຽງແຂງກັບທ່ານ ເໝືອນທີ່ພວກເຈົ້າເວົ້າສຽງດັງຕໍ່ກັນ, ຍ້ານວ່າການງານຂອງພວກເຈົ້າຈະສູນເປົ່າໄປ ໂດຍທີ່ພວກເຈົ້າບໍ່ຮູ້ສຶກໂຕ)

(ແທ້ຈິງບັນດາຜູ້ທີ່ຫຼຸດສຽງຂອງພວກເຂົາລົງຕໍ່ໜ້າຣໍຊູລຂອງອັລລໍຫ໌, ຊົນເຫຼົ່ານັ້ນຄືບັນດາຜູ້ທີ່ອັລລໍຫ໌ໄດ້ຊົງທົດສອບຫົວໃຈຂອງພວກເຂົາເພື່ອຄວາມຢຳເກງ, ພວກເຂົາຈະໄດ້ຮັບກາ

ນອະໄພໂທດ ແລະ ຜົນຕອບແທນອັນຍິ່ງໃຫຍ່ )

[ອັລ-ຮຸຈຸຣອຕ : 2-3].

ແລະ ເນື່ອງຈາກວ່າການຍືນເປັນເວລານານທີ່ກຸໂບຣຂອງທ່ານ ນະບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ, ແລະ ການກ່າວສະລາມຊ້ຳໄປຊ້ຳມາຫຼາຍຄັ້ງ ຍ່ອມນຳໄປສູ່ຄວາມແອອັດ, ສຽງດັງອຶກກະທຶກ ແລະ ການສົ່ງສຽງດັງທີ່ກຸໂບຣຂອງທ່ານ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ, ແລະ ສິ່ງດັ່ງກ່າວນັ້ນຂັດກັບສິ່ງທີ່ອັລລໍຣໄດ້ຊີງບັນຍັດໄວ້ແກ່ບັນດາມຸສລິມໃນບັນດາອາຍາຕທີ່ຊັດເຈນເຫຼົ່ານີ້, ໂດຍທີ່ທ່ານ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ເປັນທີ່ເຄົາລົບໃຫ້ກຽດທັ່ງໃນຍາມມີຊີວິດຢູ່ ແລະ ເມື່ອໄດ້ຈາກໄປແລ້ວ,

ສະນັ້ນ ບໍ່ສົມຄວນຢ່າງຍິ່ງທີ່ຜູ້ສັດທາຈະກະທຳສິ່ງທີ່ຂັດກັບມາລະຍາດຕາມບົດບັນຍັດຂອງສາສະໜາທີ່ກຸໂບຣຂອງທ່ານ .

ເຊັ່ນດຽວກັນ, ການທີ່ຜູ້ມາຢ້ຽມຍາມບາງຄົນ ແລະ ຄົນອື່ນໆ ຕັ້ງໃຈຂໍດຸອາທີ່ຂ້າງຫລຸມສົບຂອງທ່ານ ໂດຍຫັນຫນ້າໄປຫາຫລຸມສົບ ແລະ ຍົກມືທັງສອງຂຶ້ນຂໍດຸອານັ້ນ, ທັງໝົດນີ້ ລ້ວນຂັດກັບແນວທາງຂອງບັນດາສະລັຟຜູ້ຊີງທຳ (ສະລັຟ ອັສສໍລິຫ໌) ເຊິ່ງກໍຄືບັນດາສໍຫາບະຫ໌ຂອງທ່ານຣໍຊູລ ລຸລລໍຫ໌ ແລະ ຜູ້ທີ່ດຳເນີນຕາມພວກເພິ່ນຢ່າງດີງາມ, ແທ້ຈິງແລ້ວມັນຄືສ່ວນໜຶ່ງຂອງບັນດາບິດອະຫ໌ທີ່ຖືກປະດິດຂຶ້ນມາໃໝ່, ແລະ ທ່ານນະບີ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ໄດ້ກ່າວໄວ້ວ່າ:

«فَعَلَيْكُمْ بِسُنَّتِي وَسُنَّةِ الخُلَفَاءِ الرَّاشِدِينَ المَهْدِيِّينَ مِنْ بَعْدِي، تَمَسَّكُوا بِهَا وَعَضُّوا عَلَيْهَا بِالنَّوَاجِذِ، وَإِيَّاكُمْ وَمُحْدَثَاتِ الأُمُورِ، فَإِنَّ كُلَّ مُحْدَثَةٍ بِدْعَةٌ وَكُلَّ بِدْعَةٍ ضَلَالَةٌ».

«ພວກເຈົ້າຈົ່ງປະຕິບັດຕາມແນວທາງຂອງຂ້ອຍ ແລະ ແນວທາງຂອງບັນດາຄໍລີຟະຫ໌ຜູ້ຊີ້ທາງທໍາ ທີ່ໄດ້ຮັບການຊີ້ນໍາຫຼັງຈາກຂ້ອຍ, ພວກເຈົ້າຈົ່ງຍຶດໝັ້ນໃນມັນ ແລະ ຍຶດມັນໄວ້ໃຫ້ແໜ້ນທີ່ສຸດດ້ວຍຟັນກ້າມ, ແລະ ພວກເຈົ້າຈົ່ງລະວັງຈາກບັນດາສິ່ງທີ່ຖືກປະດິດຂຶ້ນໃໝ່, ເພາະແທ້ຈິງທຸກໆ ສິ່ງທີ່ຖືກປະດິດຂຶ້ນໃໝ່ນັ້ນແມ່ນບິດອະຫ໌ ແລະ ທຸກໆ ບິດອະຫ໌ຄືການຫຼົງຜິດ»[1].

ແລະ ທ່ານນະບີ ﷺ ກ່າວວ່າ:

«مَنْ أَحْدَثَ فِي أَمْرِنَا هَذَا مَا لَيْسَ مِنْهُ فَهُوَ رَدٌّ».

"ໃຜກໍ່ຕາມ ທີ່ເຮັດສິ່ງອື່ນໃນກິດຈະການສາສະໜາຂອງເຮົາ ເຊິ່ງສິ່ງນັ້ນ ເຮົາບໍ່ໄດ້ສັ່ງໃຊ້ໃຫ້ເຮັດ (ບໍ່ມີແບບຢ່າງ) ດັ່ງນັ້ນສິ່ງທີ່ເຮັດຂຶ້ນມາໃໝ່ນັ້ນຍ່ອມຖືກປະຕິເສດ (ບໍ່ຖືກຕອບຮັບຈາກອັລລໍຫ໌)"[2]

«مَنْ عَمِلَ عَمَلاً لَيْسَ عَلَيْهِ أَمْرُنَا فَهُوَ رَدٌّ».

"ໃຜກໍ່ຕາມທີເຮັດສິ່ງອື່ນໃນກິດຈະການສາດສະໜາທີ່ເຮົາບໍ່ໄດ້ສັ່ງໃຊ້ ດັ່ງນັ້ນ ກິດຈະການນັ້ນຈະຖືກປະຕິເສດບໍ່ຕອບຮັບ"[3].

ທ່ານອາລີ ບິນ ອັລ-ຫຸໄຊນ໌ ໄຊນຸນ ອາບີດີນ ຣໍດີຍັລລໍຮຸ ອັນຮຸມາ ໄດ້ເຫັນຊາຍຄົນໜຶ່ງກໍາລັງຂໍດຸອາຢູ່ທີ່ກຸໂບຣຂອງທ່ານນະບີ (ຊລໆ), ທ່ານຈຶ່ງໄດ້ຫ້າມລາວ, ແລະ ໄດ້ກ່າວວ່າ: ຂ້ອຍຈະເລົ່າຫະດີຊບົດໜຶ່ງໃຫ້ທ່ານຟັງເອົາບໍ່, ທີ່ຂ້ອຍໄດ້ຍິນມາຈາກພໍ່ຂອງຂ້ອຍ, ຈາກປູ່ຂອງຂ້ອຍ, ຈາກທ່ານຣໍຊູລຂອງອົງອັລລໍຫ໌ (ຊ

[1] ບັນທຶກໂດຍ ອະບູ ດາວູດ ຈາກການລາຍງານຂອງ ທ່ານ ອິຣບາດ ອິບນຸ ຊາຣິຍະຫ໌, ເລກທີ່ (4607).

[2] ການອ້າງອີງໄດ້ຜ່ານມາແລ້ວ.

[3] ທີ່ມາໄດ້ກ່າວໄວ້ຂ້າງຕົ້ນແລ້ວ.

ລ໗) ວ່າ ທ່ານໄດ້ກ່າວໄວ້ວ່າ:

«لَا تَتَّخِذُوا قَبْرِي عِيدًا، وَلَا بُيُوتَكُمْ قُبُورًا، وَصَلُّوا عَلَيَّ، فَإِنَّ تَسْلِيمَكُمْ يَبْلُغُنِي أَيْنَمَا كُنْتُمْ».

«ພວກເຈົ້າຢ່າໄດ້ຍຶດຖືເອົາກຸໂບຣຂອງຂ້ອຍເປັນສະຖານທີ່ຈັດງານບຸນ, ແລະ ຢ່າໄດ້ເຮັດໃຫ້ບັນດາເຮືອນຂອງພວກເຈົ້າເປັນບັນດາກຸໂບຣ, ແລະ ຈົ່ງກ່າວສໍລະວາດໃຫ້ແກ່ຂ້ອຍ, ເພາະແທ້ຈິງ ການກ່າວສະລາມຂອງພວກເຈົ້າຈະມາເຖິງຂ້ອຍ ບໍ່ວ່າພວກເຈົ້າຈະຢູ່ທີ່ໃດກໍຕາມ»[1].

ແລະ ໃນທຳນອງດຽວກັນ ສິ່ງທີ່ຜູ້ມາຢ້ຽມຢາມບາງຄົນປະຕິບັດເມື່ອໃຫ້ສະລາມຕໍ່ທ່ານນະບີ ﷺ ດ້ວຍການວາງມືຂວາທັບມືຊ້າຍຢູ່ເທິງໜ້າອົກ ຫຼື ຕ່ຳກວ່ານັ້ນ ເໝືອນກັບທ່າທາງຂອງຜູ້ທີ່ກຳລັງລະຫມາດ, ທ່າທາງດັ່ງກ່າວນີ້ ບໍ່ອະນຸຍາດໃຫ້ກະທຳເມື່ອໃຫ້ສະລາມຕໍ່ທ່ານນະບີ ﷺ ແລະ ຕໍ່ຄົນອື່ນໆ ເຊັ່ນ: ບັນດາກະສັດ, ຜູ້ນຳ ແລະ ຜູ້ອື່ນໆ; ເພາະມັນເປັນທ່າທາງແຫ່ງຄວາມຕ່ຳຕ້ອຍ, ການນອບນ້ອມ ແລະ ການອິບາດະຫ໌ (ການເປັນບ່າວ) ເຊິ່ງບໍ່ສົມຄວນກະທຳຕໍ່ຜູ້ໃດນອກຈາກອັລລໍຫ໌ເທົ່ານັ້ນ.

ດັ່ງທີ່ທ່ານ ຫະຟິຮ ອິບນຸ ຫະຈັຣ ເຣາະຫິມະຫຸລລໍຫ໌ ໄດ້ກ່າວໄວ້ໃນຫນັງສື ອັລ-ຟັຕຫ໌ ໂດຍອ້າງອີງຈາກບັນດາອຸລະມາ, ແລະ ເລື່ອງນີ້ກໍເປັນທີ່ແຈ່ມແຈ້ງສຳລັບຜູ້ທີ່ພິຈາລະນາ ແລະ ມີເປົ້າໝາຍທີ່ຈະປະຕິບັດຕາມແນວທາງຂອງຊາວສະລັຟ ອັດ-ຊໍລິຫ໌ (ຄົນລຸ້ນກ່ອນທີ່ຊອບທຳ).

ສ່ວນຜູ້ທີ່ຖືກຄອບງຳດ້ວຍການຖືພັກຖືພວກ, ອາລົມໃຝ່

---

[1] ສາຍລາຍງານຂອງ ໄຊນຸລອາບິດີນ, ທ່ານໄຊດ໌ໄດ້ອ້າງອີງເຖິງ ທ່ານຮາຟິຊ ອັລ-ມັກດິຊີ ເຊິ່ງໄດ້ບັນທຶກຫະດີສໂດຍບໍ່ມີເລື່ອງລາວ, ແລະ ທ່ານອະຫ໌ມັດ ໃນໜັງສື ມຸສນັດ (2/367).

ຕ່ຳ, ການຕາມແບບຢ່າງຢ່າງມືດບອດ ແລະ ການຄິດໃນແງ່ລົບຕໍ່ບັນດາຜູ້ຮຽກຮ້ອງສູ່ແນວທາງຂອງບັນພະຊົນສະລັຟ ສໍລິຫ໌,

ເລື່ອງຂອງລາວກໍ່ຂໍມອບໝາຍໄວ້ກັບອັລລໍຫ໌. ແລະ ເຮົາຂໍຕໍ່ອັລລໍຫ໌ ໃຫ້ລົງປະທານແກ່ພວກເຮົາ ແລະ ແກ່ລາວ ເຊິ່ງການຊີ້ນຳ ທາງ ແລະ ການອຳນວຍຄວາມສຳເລັດ ໃນການເລືອກເອົາສັດຈະທຳເໜືອກວ່າສິ່ງອື່ນໃດ, ແທ້ຈິງພຣະອົງ ຜູ້ລົງບໍລິສຸດ ລົງເປັນຜູ້ທີ່ດີເລີດທີ່ສຸດໃນການຖືກວິງວອນຂໍ.

ເຊັ່ນດຽວກັນກັບການທີ່ບາງຄົນຫັນໜ້າໄປຫາຫລຸມສົບອັນມີກຽດຈາກໂລຍະໂກ ແລະ ຂະຫຍັບຮິມຝີປາກດ້ວຍການໃຫ້ສະລາມ ຫຼື ຂໍດຸອາ, ສິ່ງທັງໝົດນີ້ກໍເປັນການກະທຳປະເພດດຽວກັນກັບບັນດາສິ່ງປະດິດສ້າງໃໝ່ໃນສາສະໜາ (ບິດອະຫ໌) ທີ່ມາກ່ອນໜ້ານີ້, ແລະ ບໍ່ສົມຄວນທີ່ມຸສລິມຈະປະດິດສ້າງສິ່ງໃໝ່ໃນສາສະໜາຂອງຕົນທີ່ອັລລໍຫ໌ບໍ່ໄດ້ລົງອະນຸຍາດ, ແລະ ດ້ວຍການກະທຳນີ້ ລາວກໍໃກ້ຊິດກັບການຫ່າງເຫີນ ຫຼາຍກວ່າຄວາມຈົງຮັກພັກດີ ແລະ ຄວາມບໍລິສຸດ,

ແລະ ທ່ານອິມາມ ມາລິກ ຣໍຫິມະ ຫຸລລໍຫ໌ ໄດ້ກ່າວຫ້າມປາມການກະທຳນີ້ ແລະ ສິ່ງທີ່ຄ້າຍຄືກັນ, ແລະ ໄດ້ກ່າວວ່າ: "ຄົນລຸ້ນຫຼັງຂອງປະຊາຊາດນີ້ ຈະບໍ່ດີງາມ ເວັ້ນເສຍແຕ່ດ້ວຍສິ່ງທີ່ໄດ້ເຮັດໃຫ້ຄົນລຸ້ນກ່ອນຂອງມັນດີງາມ"[1]."

ແລະ ເປັນທີ່ຮູ້ກັນດີວ່າ ສິ່ງທີ່ເຮັດໃຫ້ຊົນລຸ່ນທຳອິດຂອງປະຊາຊາດນີ້ຢູ່ໃນຄວາມຖືກຕ້ອງນັ້ນ ກໍຄືການດຳເນີນຕາມແນວທາງຂອງທ່ານນະບີ ສັລລັລລໍຮຸ ອະໄລຮິ ວະສັລລຳ,

ບັນດາຄໍລີຟະຫ໌ຜູ້ລົງທຳຂອງທ່ານ , ບັນດາສໍຮາບະຫ໌ (ສາວົ

---

[1] ອິຄໍສັດ ອັລ-ລະຫ໌ພານ ໃນ ມະສໍຍິດ ອັຊ-ໄຊຕອນ (1/ 363).

ກ) ຂອງທ່ານ ທີ່ອັລລໍຫ໌ຊົງໂປດປານ ແລະ ບັນດາຜູ້ທີ່ດຳເນີນຕາມພວກເຂົາດ້ວຍຄຸນນະທຳ, ແລະ ຊົນລຸ້ນຫຼັງຂອງປະຊາຊາດນີ້ຈະບໍ່ຢູ່ໃນຄວາມຖືກຕ້ອງ ເວັ້ນແຕ່ດ້ວຍການຍຶດໝັ້ນ ແລະ ດຳເນີນຕາມແນວທາງດັ່ງກ່າວ.

ຂໍອັລລໍຫ໌ຊົງປະທານຄວາມສຳເລັດແກ່ບັນດາມຸສລິມ ເພື່ອຄວາມລອດພົ້ນ, ຄວາມຜາສຸກ ແລະ ກຽດສັກສີຂອງພວກເຂົາ ໃນໂລກນີ້ ແລະ ໂລກໜ້າ, ແທ້ພຣະອົງຊົງເປັນຜູ້ຊົງເມດຕາທີ່ດີເລີດ.

## ຂໍ້ຄວນລະວັງ

## ຂໍ້ກຳນົດການໄປຢ້ຽມຢາມກຸໂບຣຂອງທ່ານນະບີ ສໍລລັລລໍຮຸ ອະໄລຮີ ວະສັລລັມ

ການໄປຢ້ຽມຢາມກຸໂບຣຂອງທ່ານນະບີ ﷺ ບໍ່ແມ່ນຂໍ້ບັງຄັບ ແລະ ບໍ່ແມ່ນເງື່ອນໄຂໜຶ່ງໃນພິທີຮັຈ ດັ່ງທີ່ຄົນທົ່ວໄປບາງສ່ວນເຂົ້າໃຈກັນ, ແຕ່ເປັນທີ່ສົ່ງເສີມສຳລັບຜູ້ທີ່ໄດ້ໄປຢ້ຽມຢາມມັສຍິດຂອງທ່ານນະບີ ﷺ ຫຼື ຜູ້ທີ່ຢູ່ໃກ້ກັບສະຖານທີ່ນັ້ນ.

ສ່ວນຜູ້ທີ່ຢູ່ຫ່າງໄກຈາກເມືອງນັ້ນ ບໍ່ມີບົດບັນຍັດໃຫ້ຕັ້ງໃຈເດີນທາງເພື່ອການຢ້ຽມຢາມກຸໂບຣ, ແຕ່ເປັນສຸນນະຫ໌ໃຫ້ລາວຕັ້ງໃຈເດີນທາງເພື່ອກົງໄປຢັງມັສຍິດອັນມີກຽດ, ເມື່ອລາວໄປເຖິງແລ້ວ ກໍໃຫ້ລາວຢ້ຽມຢາມກຸໂບຣ ອັນມີກຽດ ແລະ ກຸໂບຣຂອງສອງສໍຫາບະຫ໌, ແລະ ການຢ້ຽມຢາມກຸໂບຣຂອງທ່ານ ﷺ ແລະ ກຸໂບຣຂອງສອງສໍຫາບະຫ໌ນັ້ນ ຈະຖືກລວມເຂົ້າໄປໃນການຢ້ຽມຢາມມັສຍິດຂອງທ່ານ ﷺ, ແລະ ນັ້ນກໍເນື່ອງມາຈາກສິ່ງທີ່ໄດ້ຖືກຢືນຢັນໄວ້ໃນປຶ້ມສໍເຫັຍຫ໌ທັງສອງ, ທີ່ວ່າທ່ານນະບີ ﷺ ໄດ້ກ່າວວ່າ:

«لَا تُشَدُّ الرِّحَالُ إِلَّا إِلَى ثَلَاثَةِ مَسَاجِدَ: المَسْجِدِ الحَرَامِ، وَمَسْجِدِي هَذَا، وَالمَسْجِدِ الأَقْصَى».

«ບໍ່ໃຫ້ມີການເດີນທາງ ນອກຈາກໄປຍັງມັສຍິດສາມແຫ່ງ ຄື: ມັສຍິດອັລ-ຫະຣອມ, ມັສຍິດຂອງຂ້ອຍແຫ່ງນີ້, ແລະ ມັສຍິດອັລ-ອັກຊໍ»[1].

ແລະ ຖ້າຫາກວ່າການອອກເດີນທາງເພື່ອຈຸດປະສົງໄປຫາກຸໂບຣຂອງທ່ານນະບີ ﷺ, ຫຼື ກຸໂບຣຂອງຄົນອື່ນ ເປັນສິ່ງທີ່ຖືກບັນຍັດໄວ້ໃນສາສະໜາແລ້ວ ເພິ່ນກໍ່ຄົງຈະຊີ້ນຳອຸມມະຫ໌ຂອງທ່ານໄປສູ່ມັນ ແລະ ຊີ້ແນະພວກເຂົາເຖິງຄຸນຄ່າຄວາມປະເສີດຂອງມັນ; ເພາະວ່າ ທ່ານຄືຜູ້ທີ່ໃຫ້ຄຳແນະນຳທີ່ຈິງໃຈທີ່ສຸດແກ່ປະຊາຊົນ ແລະ ເປັນຜູ້ທີ່ຮູ້ເລື່ອງຂອງອັລລໍຫ໌ດີທີ່ສຸດ ແລະ ເປັນຜູ້ທີ່ຢຳເກງຕໍ່ພຣະອົງທີ່ສຸດ, ແລະ ແທ້ຈິງທ່ານ ໄດ້ເຜີຍແຜ່ສານທີ່ຊັດແຈ້ງແລ້ວ, ເພິ່ນໄດ້ຊີ້ນຳອຸມມະຫ໌ຂອງທ່ານໄປສູ່ທຸກຄວາມດີ, ແລະ ໄດ້ຕັກເຕືອນພວກເຂົາໃຫ້ລະວັງຈາກທຸກຄວາມຊົ່ວ, ຈະເປັນໄປໄດ້ແນວໃດ ໃນເມື່ອເພິ່ນເອງກໍໄດ້ຕັກເຕືອນຈາກການອອກເດີນທາງໄປຍັງສະຖານທີ່ອື່ນທີ່ບໍ່ແມ່ນສາມມັສຍິດ, ແລະ ໄດ້ກ່າວວ່າ:

«لَا تَتَّخِذُوا قَبْرِي عِيدًا، وَلَا بُيُوتَكُمْ قُبُورًا، وَصَلُّوا عَلَيَّ، فَإِنَّ صَلَاتَكُمْ تَبْلُغُنِي حَيْثُ كُنْتُمْ».

«ພວກເຈົ້າຢ່າໄດ້ຍຶດຖືເອົາກຸໂບຣຂອງຂ້ອຍ ເປັນບ່ອນຈັດງານບຸນ, ແລະ ຢ່າໄດ້ເຮັດໃຫ້ບັນດາເຮືອນຂອງພວກເຈົ້າເປັນບັນດາກຸໂບຣ, ແລະ ຈົ່ງສໍລະວາດໃຫ້ແກ່ຂ້ອຍ, ເພາະແທ້ຈິງ ກ

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (1189) ແລະ ມຸສລິມ, ເລກທີ່ (1397), ຈາກຫະດີສຂອງ ອະບີ ຮຸຣອຍເຣາະຮ໌ ຂໍໃຫ້ອັລລໍຮ ຊົງພໍພຣະໄທເພິ່ນ.

ານສໍລະວາດຂອງພວກເຈົ້າຈະໄປເຖິງຂ້ອຍ ບໍ່ວ່າພວກເຈົ້າຈະຢູ່ແຫ່ງຫົນໃດກໍຕາມ»[1]

ແລະ ການກ່າວວ່າການຕັ້ງໃຈເດີນທາງເພື່ອໄປຢ້ຽມຢາມຫລຸ່ມຝັງສົບຂອງທ່ານນະບີ ﷺ ເປັນທີ່ອະນຸມັດຕາມຫຼັກການສາສະໜານັ້ນ ຈະນຳໄປສູ່ການຍຶດຖືເອົາມັນເປັນວັນອີດ, ແລະ ການຕົກໄປສູ່ສິ່ງທີ່ຕ້ອງຫ້າມເຊິ່ງທ່ານນະບີ ﷺ ໄດ້ຢ້ານກົວ; ຄືການເຮັດເກີນຢ່າງຂອບເຂດ ແລະ ການຍ້ອງຍໍສັນລະເສີນ, ດັ່ງທີ່ຄົນຈຳນວນຫຼາຍໄດ້ຕົກໄປສູ່ສິ່ງນັ້ນແລ້ວ ເນື່ອງຈາກຄວາມເຊື່ອຂອງພວກເຂົາທີ່ວ່າ ການຕັ້ງໃຈເດີນທາງເພື່ອໄປຢ້ຽມຢາມຫລຸ່ມຝັງສົບຂອງທ່ານ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ເປັນທີ່ອະນຸມັດຕາມຫຼັກການສາສະໜາ.

ສ່ວນບັນດາຫະດີສທີ່ຖືກລາຍງານມາໃນປະເດັນນີ້ ເຊິ່ງຖືກຍົກມາເປັນຫຼັກຖານອ້າງອີງໂດຍຜູ້ທີ່ກ່າວວ່າການຕັ້ງໃຈເດີນທາງໄປຍັງຫລຸມຝັງສົບຂອງເພິ່ນ ອະໄລຮິສ ຊໍລາຕຸ ວັສສະລາມ ເປັນສິ່ງທີ່ຖືກບັນຍັດໄວ້ນັ້ນ, ຫະດີສເຫຼົ່ານັ້ນ ລ້ວນແຕ່ມີສາຍລາຍງານທີ່ອ່ອນແອ, ຍິ່ງໄປກວ່ານັ້ນ ຍັງເປັນຫະດີສທີ່ຖືກອຸປະໂຫລກຂຶ້ນ, ດັ່ງທີ່ບັນດານັກວິຊາການຊັ້ນນຳດ້ານຫະດີສໄດ້ຊີ້ແຈງເຖິງຄວາມອ່ອນແອຂອງມັນ; ເຊັ່ນ ທ່ານ ອັດ-ດາຣໍກຸຕນີ, ທ່ານ ອັລ-ໄບຣະກີ, ແລະ ທ່ານ ຫະຟິສ ອິບນຸ ຫະຈັຣ ແລະ ທ່ານອື່ນໆ,

ດັ່ງນັ້ນ ຈຶ່ງບໍ່ອະນຸຍາດໃຫ້ນຳເອົາມາຂັດແຍ້ງກັບບັນດາຫະດີສທີ່ຖືກຕ້ອງ ເຊິ່ງຊີ້ໃຫ້ເຫັນເຖິງຂໍ້ຫ້າມໃນການຕັ້ງໃຈເດີນທາງໄປຍັງສະຖານທີ່ອື່ນ ນອກເໜືອຈາກສາມມັສຍິດ.

ຕໍ່ໄປນີ້ຄື ຫະດີສທີ່ຖືກອຸປະໂຫລກຂຶ້ນຈຳນວນໜຶ່ງໃນບົດນີ້

[1] ການອ້າງອີງໄດ້ຜ່ານມາແລ້ວ.

, ເພື່ອໃຫ້ທ່ານຜູ້ອ່ານໄດ້ຮັບຮູ້ ແລະ ລະວັງຈາກການຫຼົງເຊື່ອໃນມັນ:

ຫນຶ່ງ: «ຜູ້ໃດທີ່ເຮັດຫັຈ ແລະ ບໍ່ໄດ້ມາຢ້ຽມຢາມຂ້ອຍ, ຜູ້ນັ້ນກໍ່ໄດ້ເມີນເສີຍຕໍ່ຂ້ອຍ».

ສອງ: "ຜູ້ໃດທີ່ມາຢ້ຽມຢາມຂ້າພະເຈົ້າຫຼັງການຕາຍຂອງຂ້າພະເຈົ້າ ກໍເຫມືອນດັ່ງວ່າຜູ້ນັ້ນໄດ້ມາຢ້ຽມຢາມຂ້າພະເຈົ້າໃນຕອນທີ່ຂ້າພະເຈົ້າຍັງມີຊີວິດຢູ່."

ສາມ: «ໃຜກໍ່ຕາມທີ່ມາຢ້ຽມຢາມຂ້ອຍ ແລະ ພໍ່ຂອງຂ້ອຍ ອິບຣໍຮີມ ໃນປີດຽວກັນ, ຂ້ອຍຮັບປະກັນຕໍ່ອັລລໍຫ໌ວ່າລາວຈະໄດ້ເຂົ້າສະຫວັນ».

ສີ: "ຜູ້ໃດທີ່ໄປຢຽມຢາມກຸໂບຣຂອງຂ້ອຍ, ລາວສົມຄວນໄດ້ຮັບການຊະຟາອະຫ໌ຂອງຂ້ອຍ".

ບັນດາຫະດີຊເຫຼົ່ານີ້ ແລະ ທີ່ຄ້າຍຄືກັນນີ້, ບໍ່ມີລາຍງານໃດໆທີ່ໄດ້ຮັບການຢັ້ງຢືນຈາກທ່ານນະບີ ﷺ.

ທ່ານ ອັລ-ຮາຟິຊ ອິບນີ ຫະຈັຣ ໄດ້ກ່າວໄວ້ໃນຫນັງສື (ອັດ-ຕັລຄີສ) ຂອງທ່ານ - ຫຼັງຈາກທີ່ໄດ້ກ່າວເຖິງສາຍລາຍງານສ່ວນໃຫຍ່ - ວ່າ: ສາຍລາຍງານທັງຫມົດຂອງຫະດີຊບົດນີ້ ລ້ວນແຕ່ອ່ອນແອ.

ທ່ານ ອັລ-ຮາຟິຊ ອັລ-ອະກີລີ ໄດ້ກ່າວວ່າ: ບໍ່ມີລາຍງານໃດທີ່ຊໍເຮັຍຫ໌ໃນປະເດັນນີ້.

ໄຊຄ໌ ອັລ-ອິສລາມ ອິບນຸ ໄຕມີຍະຫ໌, ຂໍອັລລໍຫ໌ຊົງເມດຕາເພິ່ນ, ໄດ້ຊີ້ຂາດວ່າ ບັນດາຫະດີຊເຫຼົ່ານີ້ທັງຫມົດແມ່ນຖືກອຸປະໂຫລກຂຶ້ນ. ແລະ ຄວາມຮູ້, ການທ່ອງຈໍາ ແລະ ຄວາມຮອບຮູ້ຂອງທ່ານ ກໍເປັນສິ່ງທີ່ພຽງພໍແລ້ວ.

ຖ້າຫາກວ່າມີສິ່ງໃດຈາກມັນທີ່ຖືກຢືນຢັນຢ່າງແທ້ຈິງ, ແມ່

ນອນວ່າບັນດາຊໍຮາບະຫ໌ ຂໍອັລລໍຮ໌ໄດ້ພໍໃຈພວກທ່ານ ຈະເປັນຄົນກຸ່ມທຳອິດທີ່ປະຕິບັດມັນ, ພ້ອມທັ້ງຊີ້ແຈງ ແລະ ເຊີນຊວນປະຊາຊາດໄປສູ່ມັນ; ເພາະພວກທ່ານຄືບຸກຄົນທີ່ດີທີ່ສຸດຂອງຈາກບັນດາສາດສະດາ, ເປັນຜູ້ທີ່ມີຄວາມຮູ້ທີ່ສຸດໃນຂໍ້ກຳນົດຂອງອັລລໍຮ໌ ແລະ ສິ່ງທີ່ພຣະອົງໄດ້ບັນຍັດໄວ້ແກ່ບ່າວຂອງພຣະອົງ, ແລະ ເປັນຜູ້ທີ່ຈິງໃຈທີ່ສຸດຕໍ່ອັລລໍຮ໌ ແລະ ຕໍ່ສິ່ງທີ່ພຣະອົງຊົງສ້າງ.

ສະນັ້ນ ເມື່ອບໍ່ມີສິ່ງໃດຖືກລາຍງານຈາກພວກທ່ານໃນເລື່ອງດັ່ງກ່າວ, ນັ້ນຈຶ່ງເປັນສິ່ງຊີ້ບອກວ່າ ມັນບໍ່ແມ່ນສິ່ງທີ່ຖືກບັນຍັດໄວ້ໃນສາສະໜາ.

ແລະ ຫາກວ່າບາງສ່ວນໃນນັ້ນເຊື່ອຖືໄດ້, ກໍ່ຈຳເປັນຕ້ອງໃຫ້ຄວາມໝາຍວ່າເປັນການຢ້ຽມຢາມຕາມຫລັກການສາສະໜາ ທີ່ບໍ່ມີການຕັ້ງໃຈເດີນທາງເພື່ອຈຸດປະສົງໄປຫາກຸບູຣຜຽງຢ່າງດຽວ; ເພື່ອເປັນການລວມຄວາມລະຫວ່າງບັນດາຫະດີສ, ແລະ ອັລລໍຫ໌ ສຸບຫານະຮູ ວະຕະອາລາ ຊົງຮູ້ດີຍິ່ງ.

## ບົດວ່າດ້ວຍ
## ຄວາມປະເສີດຂອງການໄປຢ້ຽມຢາມ
## ມັສຍິດກຸບາອ໌ ແລະ ອັນ-ບະກີຽຍ

ແລະ ເປັນການສົ່ງເສີມສຳລັບຜູ້ຢ້ຽມຢາມເມືອງມະດີນະຫ໌ໃຫ້ໄປຢ້ຽມຢາມມັສຍິດກຸບາ ແລະ ລະຫມາດທີ່ນັ້ນ, ເພາະມີລາຍງານໃນໜັງສືສໍເຮັຍຫ໌ຂອງທັ້ງສອງ ຈາກຫະດີຊ ທ່ານ ອິບນຸອຸມັຣ ຣໍດີຍັລລໍຮຸ ອັນຮຸມາ, ເລົ່າວ່າ:

«كَانَ النَّبِيُّ ﷺ يَزُورُ مَسْجِدَ قُبَاءٍ رَاكِبًا وَمَاشِيًا وَيُصَلِّي فِيهِ رَكْعَتَيْنِ».

«ທ່ານນະບີ ﷺ ເຄີຍຢ້ຽມຢາມມັສຍິດກຸບາ ທັ້ງຂີ່ພາຫະນະ

ແລະ ຍ່າງ ແລະ ໄດ້ລະຫມາດສອງຣົກະອັດໃນນັ້ນ»[1].

ແລະ ລາຍງານຈາກທ່ານສະຫົລະ ບິນ ຫະນີຟ ຣໍດີຍັລລໍຮຸ ອັນຮຸ ເລົ່າວ່າ: ທ່ານນະບີ ﷺ ໄດ້ກ່າວວ່າ:

«مَنْ تَطَهَّرَ فِي بَيْتِهِ ثُمَّ أَتَى مَسْجِدَ قُبَاءٍ فَصَلَّى فِيهِ صَلَاةً كَانَ لَهُ كَأَجْرِ عُمْرَةٍ».

«ຜູ້ໃດຊຳລະລ້າງຮ່າງກາຍທີ່ບ້ານຂອງຕົນ ຫຼັງຈາກນັ້ນກໍ່ມາຍັງມັສຍິດກຸບາ ແລ້ວລະຫມາດໃນນັ້ນ, ກໍ່ຈະໄດ້ຮັບຜົນບຸນເໝືອນກັບການເຮັດອຸມເຣາະຮ໌»[2].

ແລະ ເປັນສຸນນະຫ໌ສຳລັບເຂົາທີ່ຈະໄປຢ້ຽມຍາມກຸໂບຣທີ່ບະເກັຍ, ແລະ ກຸໂບຣຂອງບັນດາຊູຮາດາອ໌, ແລະ ກຸໂບຣຂອງທ່ານຮຳຊະຫ໌ ຣໍດີຍັລລໍຮຸ ອັນຮຸ; ເພາະວ່າ ທ່ານນະບີ ຊໍລລັລລໍຮູ ອະລັຍຮີ ວະສັລລັມ ໄດ້ເຄີຍໄປຢ້ຽມຍາມພວກເຂົາ ແລະ ຂໍດູອາໃຫ້ແກ່ພວກເຂົາ, ແລະ ດັ່ງທີ່ທ່ານ ຊໍລລັລລໍຮູ ອະລັຍຮີ ວະສັລລັມໄດ້ກ່າວໄວ້ວ່າ:

«زُورُوا القُبُورَ فَإِنَّهَا تُذَكِّرُكُمْ بِالآخِرَةِ».

"ພວກທ່ານຈົ່ງໄປຢຽມຍາມກຸໂບຣ ເພາະແທ້ຈິງ ມັນເຮັດໃຫ້ພວກທ່ານລຳນຶກເຖິງອາຄິເຣາະຫ໌"[3] ບັນທຶກໂດຍທ່ານມຸສລິມ.

ທ່ານນະບີ ﷺ ໄດ້ເຄີຍສອນໃຫ້ບັນດາຊໍຫາບະຫ໌ຂອງທ່ານກ່າວ ຂະນະທີ່ໄປຢ້ຽມຍາມກຸໂບຣ ວ່າ:

«السَّلَامُ عَلَيْكُمْ أَهْلَ الدِّيَارِ مِنَ المُؤْمِنِينَ وَالمُسْلِمِينَ، وَإِنَّا إِنْ شَاءَ اللهُ بِكُمْ لَاحِقُونَ، نَسْأَلُ اللهَ لَنَا وَلَكُمُ العَافِيَةَ».

---

[1] ບັນທຶກໂດຍ ອັລບຸກໍຄໍຣີ, ເລກທີ່ (1193) ແລະ ມຸສລິມ, ເລກທີ່ (1399).

[2] ບັນທຶກໂດຍ ທ່ານອິບນຸມາຈະຫ໌ ເລກທີ (1412).

[3] ບັນທຶກໂດຍມຸສລິມ, ເລກທີ່ (976).

ຄຳອ່ານ : ອັສສະລາມຸ ອະລັຍກຸມ ອະຫລັດ ດິ ຍາຣ ມີນັລ ມຸມີນີນ ວັລ ມຸສລີມີນ, ວະອິນນາ ອິນຊາອັລລໍຮ ບີກຸມ ລ່າຫິກູນ, ນັສອະລຸລລໍຮະ ລະນາ ວະລະກຸມຸລ ອາຟີຢະຮ.

ຄຳແປ : ຂໍຄວາມສັນຕິສຸກຈົ່ງມີແດ່ພວກທ່ານເລົ່າຊາວສູສານທັ້ງຫຼາຍ ຈາກບັນດາມຸມິນຜູ້ສັດທາ ແລະມຸສະລິມຜູ້ມອບຕົນ ແລະຫາກອັລລໍຮ໌ປະສົງພວກເຮົາກໍ່ຈະເປັນຜູ້ຕິດຕາມພວກທ່ານ ເຮົາຂໍຈາກອັລລໍຮ໌ໄດ້ໂປດປະທານຄວາມປອດໄພແກ່ພວກເຮົາ ແລະ ພວກທ່ານ”[1]. ບັນທຶກໂດຍທ່ານມຸສລິມ ຈາກການລາຍງານຂອງ ສຸໄລມານ ບິນ ບຸໄຣດະຫ໌ ຈາກບິດາຂອງທ່ານ.

ທ່ານຕິຣມີຊີ ໄດ້ລາຍງານຈາກ ທ່ານອິບນຸ ອັບບາສ ຣໍດິຍັລລໍຮຸ ອັນຮຸມາ ເລົ່າວ່າ: ທ່ານນະບີ ຊໍລລັລລໍຮູ ອະລັຍຮີ ວະສັລລັມ ໄດ້ຜ່ານບັນດາກຸໂບຣທີ່ເມືອງມາດີນະຫ໌, ແລ້ວທ່ານກໍ່ໄດ້ຫັນຫນ້າໄປຫາກຸໂບຣເຫຼົ່ານັ້ນ ແລະ ກ່າວວ່າ:

«السَّلَامُ عَلَيْكُمْ يَا أَهْلَ القُبُورِ، يَغْفِرُ اللهُ لَنَا وَلَكُمْ، أَنْتُمْ سَلَفُنَا وَنَحْنُ بِالأَثَرِ».

ຄຳອ່ານ : ອັສສະລາມຸ ອະລັຍກຸມ ຍາ ອະຫ໌ລັລ ກຸບູຣ, ຍັກຟິຣຸລລໍຮຸ ລະນາ ວະລະກຸມ, ອັນຕຸມ ສະລະຟຸນາ ວະນະຫ໌ນຸ ບິລອະຊັຣ.

ຄຳແປ : “ຂໍຄວາມສັນຕິສຸກຈົ່ງມີແດ່ພວກທ່ານ ໂອ້ຊາວສຸສານທັ້ງຫຼາຍ, ຂໍອັລລໍຮ໌ໄດ້ຊົງອະໄພໂທດແກ່ພວກເຮົາ ແລະ ພວກທ່ານ, ພວກທ່ານຄືຜູ້ທີ່ລ່ວງໜ້າໄປກ່ອນພວກເຮົາ ແລະ

[1] ບັນທຶກໂດຍມຸສລິມ, ເລກທີ່ (975).

ພວກເຮົາກໍ່ຈະຕິດຕາມໄປ”[1].

ຈາກບັນດາຫະດີສເຫຼົ່ານີ້ ຈຶ່ງເປັນທີ່ຮູ້ກັນວ່າ ການໄປຢ້ຽມຢາມກຸໂບຣຕາມຫຼັກການສາສະໜານັ້ນ ມີຈຸດປະສົງເພື່ອລຳລຶກເຖິງອາຄິເຣາະຫ໌, ແລະ ເພື່ອເຮັດຄວາມດີຕໍ່ຜູ້ຕາຍ ໂດຍການຂໍດຸອາໃຫ້ແກ່ພວກເຂົາ ແລະ ຂໍດູອາແຫ່ງຄວາມເມດຕາຕໍ່ພວກເຂົາ.

ສ່ວນການໄປຢ້ຽມຢາມພວກເຂົາໂດຍມີເຈດຕະນາເພື່ອຂໍດຸອາຢູ່ທີ່ກຸໂບຣຂອງພວກເຂົາ ຫຼື ການໄປເຝົ້າຢູ່ທີ່ນັ້ນ ຫຼື ການວອນຂໍໃຫ້ພວກເຂົາເຮັດທຸລະໃຫ້ ຫຼື ຂໍໃຫ້ຫາຍປ່ວຍ ຫຼື ການຂໍຕໍ່ອັລລໍຫ໌ໂດຍຜ່ານພວກເຂົາ ຫຼື ໂດຍຜ່ານກຽດສັກສີຂອງພວກເຂົາ ແລະ ສິ່ງທີ່ຄ້າຍຄືກັນນັ້ນ, ການກະທຳເຊັ່ນນີ້ຖືເປັນການຢ້ຽມຢາມທີ່ເປັນບິດອະຫ໌ທີ່ເປັນສິ່ງຊົ່ວຮ້າຍ ທີ່ອັລລໍຫ໌ ແລະ ຣໍສູລຂອງພຣະອົງບໍ່ໄດ້ບັນຍັດມັນໄວ້, ແລະ ບັນດາສະລັຟ ອັສ-ສໍລິຫ໌ ຂໍອັລລໍຫ໌ຊົງພໍພຣະໄທຕໍ່ພວກເຂົາ ກໍບໍ່ໄດ້ເຮັດເຊັ່ນນັ້ນ, ແຕ່ທະວ່າ ມັນຄືການຖິ້ມແບບຢ່າງ ເຊິ່ງທ່ານຣໍສູລ ຊໍລລັລລໍຮຸ ອະລັຍຮີ ວະສັລລັມ ໄດ້ຫ້າມໄວ້ ດັ່ງທີ່ທ່ານໄດ້ກ່າວໄວ້ວ່າ:

«زُورُوا الْقُبُورَ، وَلَا تَقُولُوا هُجْرًا».

«ພວກທ່ານຈົ່ງໄປຢ້ຽມຢາມກຸໂບຣ, ແລະ ພວກທ່ານຢ່າໄດ້ກ່າວຖ້ອຍຄຳທີ່ຊົ່ວຊ້າ»[2].

ແລະ ບັນດາເລື່ອງລາວທີ່ກ່າວມານີ້ ລ້ວນເປັນບິດອະຫ໌, ແຕ່ວ່າມັນມີລະດັບທີ່ແຕກຕ່າງກັນ, ໂດຍບາງຢ່າງເປັນບິດອະຫ໌ ແລະ ບໍ່ແມ່ນຊີຣິກ; ເຊັ່ນ ການຂໍດຸອາຕໍ່ອັລລໍຫ໌ ຊຸບຮານະ ຢູ່ທີ່

---

[1] ບັນທຶກໂດຍອັດຕິລມີຊີ, ເລກທີ່ (1035).

[2] ບັນທຶກໂດຍມຸສລິມ, ເລກທີ່ (977).

ຫລຸມສົບ, ແລະ ການຂໍຕໍ່ພຣະອົງໂດຍອ້າງສິດທິ ແລະ ຖານະຂອງຜູ້ຕາຍ ແລະ ສິ່ງທີ່ຄ້າຍຄືກັນນັ້ນ, ແລະ ບາງຢ່າງກໍເປັນສ່ວນໜຶ່ງຂອງຊີຣິກໃຫຍ່, ເຊັ່ນ ການຂໍວິງວອນຕໍ່ຄົນຕາຍ ແລະ ການຂໍຄວາມຊ່ວຍເຫລືອຈາກພວກເຂົາ, ແລະ ສິ່ງທີ່ຄ້າຍຄືກັນນັ້ນ.

ແລະ ການອະທິບາຍເລື່ອງນີ້ຢ່າງລະອຽດກໍໄດ້ກ່າວມາກ່ອນແລ້ວ, ດັ່ງນັ້ນ ຈົ່ງຕື່ນຕົວ ແລະ ລະມັດລະວັງ, ແລະ ຈົ່ງຂໍຕໍ່ພຣະຜູ້ເປັນເຈົ້າຂອງເຈົ້າ ໃຫ້ຊົງປະທານຄວາມສໍາເລັດ ແລະ ການຊີ້ນໍາໄປສູ່ສັດຈະທໍາ, ເພາະແທ້ຈິງແລ້ວ ພຣະອົງນັ້ນເປັນຜູ້ຊົງປະທານຄວາມສໍາເລັດ ແລະ ເປັນຜູ້ຊົງຊີ້ນໍາທາງ, ບໍ່ມີພຣະເຈົ້າອົງໃດນອກຈາກພຣະອົງ, ແລະ ບໍ່ມີພຣະຜູ້ເປັນເຈົ້າອົງໃດນອກຈາກພຣະອົງ.

ນີ້ຄືສິ່ງສຸດທ້າຍທີ່ພວກເຮົາໄດ້ຕັ້ງໃຈບັນທຶກໄວ້, ແລະ ມວນການສັນລະເສີນເປັນສິດຂອງອັລລໍຫ໌ທັ້ງໃນເບື້ອງຕົ້ນ ແລະ ໃນເບື້ອງທ້າຍ, ຂໍອັລລໍຫ໌ ຊົງປະທານຄວາມສັນຕິຈໍາເລີນແດ່ບ່າວຂອງພຣະອົງ, ຣໍຊູລຂອງພຣະອົງ, ຜູ້ທີ່ດີເລີດທີ່ສຸດໃນບັນດາສິ່ງທີ່ພຣະອົງຊົງສ້າງ, ທ່ານນະບີ ມຸຮໍາມັດ, ຕະຫຼອດຈົນຄອບຄົວຂອງທ່ານ ແລະ ບັນດາສາວົກສະຫາຍຂອງທ່ານ, ແລະ ບັນດາຜູ້ທີ່ໄດ້ດໍາເນີນຕາມພວກທ່ານດ້ວຍຄຸນງາມຄວາມດີຈົນເຖິງວັນແຫ່ງການຕອບແທນ.

❃❃❃

# الفهرس

ຄຳນຳຜູ້ຂຽນ....2
ບົດວ່າດ້ວຍ....5
ຫຼັກຖານຕ່າງໆ ຂອງການປະຕິບັດທີ່ເປັນວາຈິບ ແລະ ການຮີບຮ້ອນໃນການປະກອບພິທີຮັຈ ແລະ ອຸມເຣາະຫ໌....5
ບົດວ່າດ້ວຍ....9
ພັນທະໃນການເຕົາບະຫ໌ຈາກບັນດາຄວາມຜິດບາບ ແລະ ການປົດເປື້ອງຕົນຈາກການອະທຳ.....9
ບົດວ່າດ້ວຍ....17
ສິ່ງທີ່ຜູ້ປະກອບພິທີຮັຈຕ້ອງປະຕິບັດ ເມື່ອເດີນທາງໄປຮອດເຂດ ມີກ໊ອດ....17
ບົດວ່າດ້ວຍ....24
ວ່າດ້ວຍ ມີກ໊ອຕ ດ້ານສະຖານທີ່ ແລະ ການກຳໜົດຂອງມັນ....24
ບົດວ່າດ້ວຍ....31
ຂໍ້ຊີ້ຂາດກ່ຽວກັບຜູ້ທີ່ເດີນທາງໄປຮອດ ມີກ໊ອດ ນອກເໜືອຈາກເດືອນຕ່າງໆ ຂອງການປະກອບພິທີຫັຈ....31
ບົດວ່າດ້ວຍ....35
ຂໍ້ຕັດສິນກ່ຽວກັບການປະກອບພິທີຫັຈຂອງເດັກນ້ອຍ ວ່າພຽງພໍທີ່ຈະທົດແທນການເຮັດຫັຈຂອງອິສລາມໄດ້ ຫຼື ບໍ່.....35
ບົດວ່າດ້ວຍ....39
ການຊີ້ແຈງກ່ຽວກັບບັນດາຂໍ້ຫ້າມໃນການຄອງອິຫ໌ຣອມ ແລະ ສິ່ງທີ່ອະນຸຍາດໃຫ້ກະທຳສຳລັບຜູ້ຄອງອິຫ໌ຣອມ.....39
ບົດ....47
ວ່າດ້ວຍ....47
ສິ່ງທີ່ຜູ້ປະກອບພິທີຫັຈຕ້ອງປະຕິບັດ ເມື່ອເຂົ້າສູ່ນະຄອນມັກກະຮ໌ ແລະ ການຊີ້ແຈງສິ່ງທີ່ຕ້ອງປະຕິບັດຫຼັງຈາກເຂົ້າສູ່ມັສຍິດ ອັລ-ຫະຣອມ ເຊິ່ງໄດ້ແກ່ ການຕໍວາຟ ແລະ ວິທີການປະຕິບັດ.....47

ບົດວ່າດ້ວຍ ............................................................................... 58
ຂໍ້ຕັດສິນກ່ຽວກັບການເຂົ້າສູ່ສະພາບອິຫ໌ຣອມເພື່ອປະກອບພິທີຫັຈ ແລະ ການອອກເດີນທາງໄປຍັງມີນາ ໃນວັນທີແປດຂອງເດືອນຊຸລຫິຈຍະຫ໌ ............................................... 58
ບົດວ່າດ້ວຍ ............................................................................... 87
ຄວາມປະເສີດຂອງສິ່ງທີ່ຜູ້ສະແຫວງບຸນກະທຳໃນວັນແຫ່ງການເຊືອດ (ນະຫັຣ) ............................................................................... 87
ບົດວ່າດ້ວຍ ............................................................................... 94
ການບັງຄັບໃຫ້ເຊືອດສັດສຳລັບຜູ້ທີ່ເປັນມຸຕະມັດຕິອ໌ ແລະ ກໍຣິນ .. 94
ບົດ ............................................................................... 98
ວ່າດ້ວຍ ການເປັນວາຈິບຂອງການສັ່ງໃຊ້ໃຫ້ເຮັດຄວາມດີຕໍ່ບັນດາຜູ້ປະກອບພິທີຮັຈ ແລະ ຜູ້ອື່ນໆ ............................................................................... 98
ບົດວ່າດ້ວຍ ............................................................................... 109
ການສົ່ງເສີມໃຫ້ເພີ່ມພູນການເຊື່ອຟັງ (ຕໍອັດຕໍ່ພຣະເຈົ້າ) .......... 109
ບົດ ............................................................................... 111
ວ່າດ້ວຍບົດບັນຍັດ ແລະ ມາລະຍາດໃນການຢ້ຽມຢາມ................. 111
ຂໍ້ຄວນລະວັງ ............................................................................... 129
ຂໍ້ກຳນົດການໄປຢ້ຽມຢາມກຸໂບຣຂອງທ່ານນະບີ ສໍລລັລລໍຮຸ ອະໄລຮິ ວະສັລລັມ............................................................................... 129
ບົດວ່າດ້ວຍ ............................................................................... 133
ຄວາມປະເສີດຂອງການໄປຢ້ຽມຢາມ ມັສຍິດກຸບາອ໌ ແລະ ອັນ-ບະກຽຍ ............................................................................... 133

***

lo396v3.1 - 27/06/2026

رئاسة الشؤون الدينية
بالمسجد الحرام والمسجد النبوي

# رسالة الحرمين

# ສານຈາກສອງສະຖານທີ່ແຫ່ງຄວາມສັກສິດ

ເນື້ອຫາຄໍາແນະນໍາທາງສາສະໜາ
ສໍາຫຼັບຜູ້ທີ່ເດີນທາງສູ່ມັສຍິດອັລຫະຣອມ
ແລະ ມັສຍິດອັນນະບະວີ ໃນພາສາຕ່າງໆ